# ການປະຊາສົງເຄາະຫ໌ແລະ ແຮງງານໃນຮອບປີ.




ເປັນທີ່ລະນຶກ ໃນວັນສົງເຄາະຫ໌ຜູ້ປະສົບໄພສົງຄາມ

(ວັນທີ່ ໑ ມີນາ ໑໙໗໑.)

# ຄຳນຳ

ນັບແຕ່ໄດ້ມີບັນຍັດນາຍົກຣັຖມົນຕຣີ ເລກທີ່ ຜກ/ນຍ. ລົງວັນທີ່ ໔໕-໑-໖໘ ໃຫ້ຈັດຕັ້ງວັນສົງເຄາະຫ໌ຜູ້ປະສົບໄພຍ໌ສົງຄາມຂຶ້ນ ຣັຖບາລພຣະບາທສົມເດັດພຣະເຈົ້າມະຫາຊີວິດ ໂດຍການນຳຂອງສເດັດເຈົ້າສຸວັນນະພູມາ ກໍໄດ້ຈັດໃຫ້ມີການປະສານງານ ຮ່ວມໄມ້ຮ່ວມມື ຣະຫວ່າງປະຊາຊົນລາວທັງຊາດຂຶ້ນທຸກ ໆ ປີ ນັບແຕ່ວັນທີ່ ໑ ເດືອນມີນາ ໑໙໖໘ ເປັນຕົ້ນມາ.

ວັນທີ່ ໑ ມີນາ ເປັນວັນສຳຄັນ ເພາະເປັນວັນຊຶ່ງຊາວລາວທຸກຄົນ ຄວນຣະນຶກເຖິງຄຸນງາມຄວາມດີ ແລະການເສັຽສລະຂອງທະຫານແນວໜ້າ ທີ່ກຳລັງຕ້ານທານຢ່າງອົງອາດກ້າຫານ ຕໍ່ການລຸກລາມຈາກພາຍນອກ ທັງເປັນວັນທີ່ທຸກຄົນຕ້ອງເສັຽສລະ ກຳລັງໃຈ ກຳລັງກາຍ ແລະກຳລັງຊັພ ເພື່ອຊ່ວຍເຫລືອອູ້ມຊູຄອບຄົວທະຫານ ໆ ຂອງເຮົາ ຕລອດທັງພີ່ນ້ອງອົພຍົບຫລົບໄພຍ໌ ຈຳນວນຫລາຍແສນຄົນ ທີ່ໄດ້ພັດພາກຈາກເຄຫະສະຖານບ້ານເຮືອນ ເຂົ້າມາເພິ່ງອາໄສຢູ່ໃນທີ່ປອດໄພຍ໌ ພາຍໃຕ້ການຄຸ້ມຄອງ ແລະຄວາມຊ່ວຍເຫລືອຂອງຣັຖບາລ.

ເພື່ອຕັກເຕືອນໃຫ້ເພື່ອນຮ່ວມຊາດທຸກຄົນ ມີຄວາມຈື່ຈຳຕໍ່ການເສັຽສລະຂອງທະຫານ ແລະພົລເຮືອນດັ່ງກ່າວແລ້ວ ຄນະກັມການສົງເຄາະຫ໌ຜູ້ປະສົບໄພຍ໌ສົງຄາມ ຈຶ່ງໄດ້ຈັດພິມປື້ມນີ້ຂຶ້ນ ເພື່ອເປັນອະນຸສອນແກ່ເພື່ອນຮ່ວມຊາດເຫລົ່ານັ້ນ.

ຫວັງວ່າພີ່ນ້ອງຮ່ວມຊາດທຸກຄົນຈະເຫັນໃຈ ຮູ້ສຶກເປັນອັນນຶ່ງອັນດຽວກັບຜູ້ປະສົບໄພຍ໌ທຸກປະເພດ ແລະຍອມເສັຽສລະ ເພື່ອບັນເທົາຄວາມເດືອດຮ້ອນ ແລະອົດຢາກຂາດເຂີນຂອງເພື່ອນຮ່ວມຊາດ ທີ່ກຳລັງປະສົບເຄາະຫ໌ຮ້າຍຢູ່ໃນປັຈຈຸບັນນີ້.

*ວຽງຈັນທນ໌ ວັນທີ່ ໑ ມີນາ ໑໙໗໑*

*ຄນະກັມການແຫ່ງຊາດ ສົງເຄາະຫ໌ຜູ້ປະສົບໄພຍ໌ສົງຄາມ*

# ສາຣະບານ


- ພຣະຣາຊກະແສດຳຣັດ ພຣະບາທສົມເດັດພຣະເຈົ້າມະຫາຊີວິດ
- ພຣະໂອວາທ ສົມເດັດພຣະສັງຄະຣາຊ
- ສານສເດັດນາຍົກຣັຖມົນຕຣີ
- ຣາຍຊື່ຄນະກັມມະການແຫ່ງຊາດ ສົງເຄາະຫ໌ຜູ້ປະສົບໄພຍ໌ສົງຄາມ
- ຣາຍການຈັດງານ ວັນສົງເຄາະຫ໌ແຫ່ງຊາດ ປີ ໑໙໗໑
- ບັນທຶກການປະຊຸມ ຄນະກັມການກຽມງານວັນສົງເຄາະຫ໌ ປີ ໑໙໗໑
- ບົດສົນທະນາເຣື່ອງ ບັນຫາການອົພຍົບ ໂດຍ ພະຍາແກ້ວ ວິພາກອນ
- ຣາຍງານກິຈການກົມບໍຣິການສັງຄົມ ໂດຍ ນາງສາວ ສຸນທອນ ພິລາວັນ ອະທິບໍດີກົມບໍຣິການສັງຄົມ
- ຣາຍງານເຣື່ອງ ການແຮງງານໃນລາວ ໂດຍ ທອງໃບ ໄຊຍະຣາຊ ອະທິບໍດີກົມແຮງງານ
- ບົດຄວາມ ທີ່ຊນະທີ່ ໑ ການເສັງບົດປະພັນ ໃນວັນສົງເຄາະຫ໌ແຫ່ງຊາດ ປີ ໑໙໗໐
- ຄຳກອນ ທີ່ຊນະທີ່ ໑ ການເສັງບົດປະພັນ ໃນວັນສົງເຄາະຫ໌ແຫ່ງຊາດ ປີ ໑໙໗໐



ພຣະບາດສົມເດັຈ ພຣະເຈົ້າມະຫາຊີວິດ
ສຣີສວ່າງວັທນາ

# ພຣະຣາຊກະແສດຳຣັດພຣະບາດສົມເດັດພຣະເຈົ້າມະຫາຊີວິດ

## *ໃນວັນຊາຕທີ່ຈັດຕັ້ງຂຶ້ນເພື່ອໃຫ້ຄວາມອຸປກາຣະແກ່ຜູ້ຖືກເຄາະຈາກໄພສົງຄາມ*

(ວັນທີ່ ໑ ມີນາ ໑໙໖໙)

ພຣະອົງເຮົາ ຊົງພໍພຣະໄທເປັນພິເສດ ຊຶ່ງຣັຖບາລໄດ້ຕົກລົງຈັດຕັ້ງວັນຊາຕຂຶ້ນ ເພື່ອໃຫ້ການອຸປກາຣະແກ່ຜູ້ຮັບເຄາະ ຈາກເສິກສົງຄາມທຸກ ໆ ຄົນ ດ້ວຍວ່າປະເທດຊາຕທັງໝົດ ໃນກໍຣະນີອັນດັບຂັນນີ້ ຈຳຕ້ອງສແດງຄວາມຮັກໄຄ່ ໄມຕຣີຈິດ ຄວາມເມດຕາ ແລະຄວາມຫ່ວງໃຍຂອງຕົນຕໍ່ບັນດາຜູ້ທີ່ໄດ້ຮັບຄວາມທໍຣະມານ ຄວາມຮ້າຍກາດ ຫວາດຫວັ່ນ ຂອງການລຸກລານ ແລະການທຳຮ້າຍນັ້ນ ນານມາກວ່າຊາວປີແລ້ວ ເມືອງໃຫຍ່ແລະບ້ານຊ່ອງຮ່ອງນ້ອຍຕ່າງ ໆ ຂອງເຮົາ ໄດ້ຢູ່ກິນໃນພາວະອັນຫວາດຫວັ່ນ ແລະກະວົນກະວາຍ ການລົ້ມຫາຍຕາຍຈາກກໍນັບເປັນພັນ ໆ ການທຳລາຍດ້ານວັດຖຸ ເຂົ້າຂອງຫລວງຫລາຍ ຄວາມເສົ້າສລົດໃຈ ເນື່ອງດ້ວຍການນໍຣະມະກັມ ກໍນັບມື້ນັບເພີ່ມທະວີຂຶ້ນ.

ສຳຫລັບ *ດວງວິນຍານ* ຂອງຜູ້ລ່ວງລັບໄປ ດ້ວຍຄວາມທຸກໂສກນີ້ ພຣະອົງເຮົາກໍໄດ້ວິງວອນ *ອາຣາທນາໃຫ້ໄດ້ຢູ່ໃຕ້ຄວາມອາຣັກຂາ ຂອງພຣະສັມມາສັມພຸທເຈົ້າແລ້ວ* ພຣະອົງເຮົາ ດ້ວຍຄວາມຮັກໄຄ່ ໄມຕຣີຈິດ ຊົງອ້າງໄດ້ວ່າ ພຣະອົງເຮົາຈະສະຖິດໃກ້ຊິດທ່ານທັງຫລາຍ ໃນຍາມເຄາະຮ້າຍນີ້ ສະນັ້ນ ພຣະອົງເຮົາຊົງປາຖນາໃຫ້ວັນຊາດ ວັນນີ້ ເປັນທີ່ສະແດງໃຫ້ເຫັນຄວາມສາມັຄຄີກັນ ແລະ ຄວາມຊ່ອຍເຫລືອ ຊຶ່ງກັນ ແລະກັນ ຣະຫວ່າງ ລາວຕໍ່ລາວນັ້ນແຈ່ມແຈ້ງຂຶ້ນ ຈຳເພາະຜູ້ທີ່ຕໍ່ສູ້ເພື່ອປ້ອງກັນດິນແດນລາວໃນຄາວນີ້ ວັນຊາຕວັນນີ້ ຄົງຈະສະແດງຄວາມໝາຍໃຫ້ຊາບວ່າ ຜູ້ທີ່ຢູ່ຫ່າງໄກໄພອັນຕຣາຍນັ້ນ ປະສົງຈິງໃຈຊ່ອຍເຫລືອເຂົາເຈົ້າ ແລະຄອບຄົວຂອງເຂົາເຈົ້າອີກດ້ວຍ ຈຳເພາະຜູ້ທີ່ຖືກກະທົບກະເທືອນ ໂດຍອະທັມນັ້ນ ວັນຊາຕ ວັນນີ້ ຄົງຈະນຳຄວາມ

ບັນເທົາທຸກມາໃຫ້ ບໍ່ຫລາຍກໍນ້ອຍ ດ້ວຍໄດ້ຊາບວ່າ ເພື່ອນຮ່ວມຊາຕ ບໍ່ໄດ້ນິ້ງເສີຍຕໍ່ໂຊກະຕາຂອງເຂົາເຈົ້າເລີຍ ຈຳເພາະທຸກໆ ທ່ານ ອັນຊາຕທີ່ຈັດຕັ້ງຂຶ້ນ ເພື່ອໃຫ້ຄວາມອຸປກາຣະແກ່ຜູ້ຮັບເຄາະຈາກໄພສົງຄາມນີ້ ດັ່ງຢ້ຳໃຫ້ເຫັນປະຈັກວ່າ ພຣະຣາຊອານາຈັກ ມີດວງພຣະອິນຍານ ແລະດວງພຣະອິນຍານນີ້ ຢູ່ໃນຂີດນຶ່ງຂັ້ນດຽວກັນ ຕລອດມາສເມີ ອັນເປັນດວງພຣະອິນຍານ ທີ່ເຕັມໄປດ້ວຍຄວາມເມຕຕາ ກະຣຸນາ ໃນເມື່ອຫາກມີໄພອັນຕຣາຍມາຄຸກຄາມ ແລະໃນເມື່ອລູກເຕົ້າເຂົ້າຣໍ່ ຫາກຕົກທຸກໄດ້ຍາກ ແລະລົ້ມຫາຍຕາຍໄປ ເພື່ອຄວາມຍືນຍົງຄົງຢູ່ ແລະກຽດຂອງຕົນ ບໍ່ວ່າແຕ່ຍາມໃດ ໃນອະດີ–ຕະການ ຫລືໃນອະນາຄົດ ກໍດັ່ງດຽວກັນ.







ສົມເດັດ ພຣະສັງຄະຣາຊ
ທັມຍານະ ມະຫາເຖຣະ–ບຸນທັນ



( ສເດັຈ ເຈົ້າສຸວັນນະພູມາ ເຈົ້າກຣົມມາ )

ນາຍົກຣັຖມົນຕຣີ, ຣັຖມົນຕຣີ ວ່າການກະຊວງການຕ່າງປຣະເທດ, ປ້ອງກັນປຣະເທດ, ນັກຣົບເກົ່າ ແລະ ປັບປຸງຫມູ່ບ້ານ

24/VII
ຫ້າມຈຳໜ່າຍ



# ພະຍາ ບີຣຊາ ຣາຊພັກດີ

( ເພັງ ພົງສວັນ )

ຣັຖມົນຕຣີ ວ່າການກະຊວງມະຫາດໄທ,

ປະຊາສົງເຄາະຫ໌ ແລະ ແຮງງານ



# ພະຍາ ຣັຕນະວິຈິຕ

( ແກ້ວ ວິພາກອນ )

ຣັຖມົນຕຣີ ຊ່ວຍວ່າການ ກະຊວງປຣະຊາສົງເຄາະຫ໌

ແລະ ແຮງງານ,

ປຣະທານ ກັມການແຫ່ງຊາດ ຜູ້ປຣະສົບໄພຍ໌ສົງຄາມ

# ພຣະໂອວາທຂອງສົມເດັດພຣະສັງຄະຣາຊ

## *ໃນວັນສົງເຄາະຫ໌ຜູ້ປະສົບໄພສົງຄາມ*

*ທ່ານສາທຸຊົນ ຍິງຊາຍນ້ອຍໃຫຍ່ທັງຫລາຍ.*

ວັນນີ້ເປັນວັນທີ່ທາງຣັຖບານແຫ່ງຣາຊອານາຈັກລາວເຮົາ ໄດ້ກຳໜົດຂຶ້ນໄວ້ໃຫ້ເປັນວັນ ສຳຄັນຂອງຊາດວັນນຶ່ງຣຽກວ່າ "ວັນສົງເຄາະຫ໌ຜູ້ປະສົບໄພຍ໌ສົງຄາມ" ວັນສົງເຄາະຜູ້ປະສົບໄພຍ໌ສົງຄາມນີ້ ມີຄວາມສຳຄັນຢ່າງໃດນັ້ນ ອາຕມາພາບຂໍບັລຍາຍປຽບທຽບໃຫ້ສາທຸຊົນທັງຫລາຍຊາບໂດຍຫຍໍ້ ໆ ດັ່ງນີ້ ຄື ໃນພຣະພຸທສາສນາ ມີວັນສຳຄັນໃນທາງສາສນາຢູ່ຫລາຍວັນ ເຊັ່ນວັນເຂົ້າວັດສາ ວັນອອກວັດສາເປັນຕົ້ນ ແຕ່ວັນສຳຄັນທັງສອງທີ່ກ່າວມານີ້ ຖ້າເອົາຕາມເປັນຈິງແລ້ວ ກໍເປັນວັນສຳຄັນຈຳເພາະຝ່າຍສົງທ່ນັ້ນ ສ່ວນວັນສຳຄັນທີ່ກ່ຽວກັບຈິດໃຈຂອງສາທຸຊົນທົ່ວ ໆ ໄປ ທັງທີ່ຕາຍໄປແລ້ວແລະຍັງດຳຣົງຊີວິດຢູ່ນັ້ນກໍແມ່ນວັນບຸນເຂົ້າສາກ ແລະວັນບຸນເຂົ້າປະດັບດິນ ເພາະສອງວັນນີ້ເຮົາຖືກັນມາວ່າ ເປັນວັນທຳບຸນອຸທິສ່ວນກຸສົນສົ່ງໄປເຖິງຍາຕິພີ່ນ້ອງ ແລະບໍ່ແມ່ນຍາຕິພີ່ນ້ອງທີ່ຕາຍໄປແລ້ວ ດ້ວຍເມດຕາຈິດຢ່າງບໍ່ມີປະມານ ບໍ່ມີກຳໜົດ ແລ້ວຊາວເຮົາກໍໄດ້ຖືປະຕິບັດມາທຸກ ໆ ປີບໍ່ຂາດ ຈົນທາງຣາຊການກໍ ໄດ້ກຳໜົດໃຫ້ເປັນວັນຍຸດພັກຣາຊການດ້ວຍ.

ການທຳບຸນເຂົ້າສາກ ແລະເຂົ້າປະດັບດິນກໍແມ່ນການສົງເຄາະຍາຕິພີ່ນ້ອງ ຜູ້ຕາຍ ໄປ ແລ້ວສ່ວນວັນສົງເຄາະຫ໌ຜູ້ປະສົບໄພສົງຄາມນີ້ ເປັນວັນສົງເຄາະຫ໌ປະຊາຊົນພົລເມືອງທັງຜູ້ທີ່ເປັນຍາຕິພີ່ນ້ອງໂດຍສາຍໂລຫິດ ແລະຜູ້ເປັນຍາຕພີ່ນ້ອງໂດຍຊາດຄືຄົນຊາດດຽວກັນທີ່ຍັງມີຊີວິດຢູ່ ແຕ່ຫາກໄດ້ຮັບຄວາມທົນທຸກທໍຣະມານ ອຶດຢາກຍາກແຄ້ນທັງກາຍແລະໃຈເພາະໄພອັນເກີດຈາກສົງຄາມ ວັນນີ້ຈຶ່ງເປັນວັນສຳຄັນທີ່ສຸດວັນນຶ່ງ ໃນການທຳບຸນ ດັ່ງດຽວກັນກັບວັນວັນບຸນເຂົ້າສາກ ແລະເຂົ້າປະດັບດິນນັ້ນ ຫລືອາດສຳຄັນຍິ່ງແລະໄດ້ບຸນຫລາຍຍິ່ງກວ່າທຳບຸນເຂົ້າສາກ ແລະເຂົ້າປະດັບດິນອີກ ເພາະເຮົາໄດ້ສົງເຄາະຫ໌ຊ່ວຍເຫລືອຍາຕພີ່ນ້ອງຂອງເຮົາຜູ້ທີ່ໄດ້ຮັບຄວາມທຸກທໍຣະມານແລະມີຊີວິດຢູ່ດ້ວຍຄວາມຂົມຂືນ ແສນກັນດານ ໂດຍທີ່ການສົງເຄາະຫ໌ນີ້ເຮົາໄດ້ເຫັນຜູ້ປະສົບໄພໄດ້ຮັບການສົງເຄາະຫ໌ກັບຕາເຮົາເອງ.

ການສົງເຄາະຊ່ວຍເຫລືອກັນແລະກັນນີ້ ໃນທັມພຣະພຸທສາສນາຮຽກວ່າ ສັງຄຫະວັດຖຸພຣະສັມມາສັມພຸທເຈົ້າອົງເປັນບໍຣົມຄຣູຂອງຊາວເຮົາ ທົງສໍ່ຣະເສີນວ່າ ເປັນທັມອັນພາໃຫ້ໂລກມະນຸດຕັ້ງຢູ່ເປັນໂລກແລະມີຄວາມຈະເຣີນກ້າວໜ້າຖາວອນຕໍ່ໄປບໍ່ສ້ຽງສຸດໄດ້. ທັມອັນຮຽກ ສັງຄະຫະວັດຖຸມີ ໔ ປະການ ຄື:

໑ ທານ ການໃຫ້ຄວາມຊ່ວຍເຫລືອກັນໃນດ້ານວັດຖຸຄືເຂົ້າຂອງເງິນຄຳເຄື່ອງໃຊ້ຂອງສອຍບ່ອນຢູ່ບ່ອນກິນເປັນຕົ້ນ.

໒ ປິຍະວາຈາ ການເວົ້າແຕ່ຖ້ອຍຄຳອັນມ່ອນຫູຕໍ່ກັນ ເວົ້າແນະນຳບອກສອນກັນໃນທາງທີ່ເປັນປະໂຍດເປັນຕົ້ນ.

໓ ອັດຖະຈະຣິຍາ ການປະພຶດແຕ່ສິ່ງທີ່ເປັນປະໂຍດ ທຳແຕ່ສິ່ງທີ່ເປັນປະໂຍດຕໍ່ກັນ ເຊັ່ນຊ່ວຍເຫລືອກັນໃນດ້ານກຳລັງກາຍໃນການສ້າງສາຕ່າງ ໆ ຕລອດຈົນການປ້ອງກັນປະເທດຊາດ ຮັກສາຜົນປະໂຍດຂອງຊາດເປັນຕົ້ນ.

໔ ສະມານັດຕະຕາ ສ້າງຕົນໃຫ້ຄົນສຸພາບສະໝ່ຳສະເໝີກັບຄົນທົ່ວໄປ ບໍ່ຍົກຕົນຂົ່ມທ່ານ ບໍ່ອວດອ້າງຈອງຫອງຖືຕົນວ່າເລີດກວ່າຄົນທັງຫລາຍແລ້ວໃຊ້ອຳນາດບັງຄັບຂົ່ມເຫັງຄົນອື່ນ.

ທັມ ໔ ຂໍ້ນີ້ພຣະພຸທເຈົ້າຕັດວ່າ ເປັນເຄື່ອງສົງເຄາະຊ່ວຍເຫລືອຊາວມະນຸດໃນໂລກໃຫ້ຈະເຣີນກ້າວໜ້າແລະຢູ່ເຢັນສຸກໄດ້ແທ້ຈິງ.

ສະນັ້ນອາຕມາພາບ ໃນນາມເປັນປະມຸກຂອງພຣະສົງສາມເນນລາວ ແລະໃນນາມຂອງພຸະສົງສາມເນນລາວທົ່ວຣາຊອານາຈັກທີ່ປະຕິບັດຕາມຄຳສອນຂອງພຣະສັມມາສັມພຸທເຈົ້າ ຈຶ່ງຂໍສົລເສີນຣັຖບານແຫ່ງຣາຊອານາຈັກລາວ ອັນມີສະເດັດນາຍົກຣັຖມົນຕຣີເປັນປະທານ ໃນການທີ່ໄດ້ຈັດຕັ້ງ ອົນສົງເຄາະຜູ້ປະສົບໄພສົງຄາມນີ້ຂຶ້ນວ່າ ເປັນຄວາມດຳຣິທີ່ຖືກຕ້ອງຕາມທັມຂອງພຣະພຸທເຈົ້າໂດຍແທ້ ແລະຂໍຈະເຣີນພອນເຊີນຊວນທ່ານສາທຸຊົນທັງຫລາຍທຸກຖ້ວນໜ້າ ຈົ່ງໃຫ້ຄວາມຮ່ວມມືຣັຖບານຊ່ວຍສົງເຄາະຜູ້ປະສົບໄພສົງຄາມ ຕາມແນວທາງຂອງທັມມະທັງ ໔ ປະການທີ່ໄດ້ກ່າວມາແລ້ວນັ້ນ ໂດຍນ້ຳໃສໃຈຈິງຕາມພາຫນະສະຕິປັນຍາ ແລະຖະນະຂອງຕົນເຖີ້ນ.

ທ້າຍສຸດນີ້ ອາຕມາພາບ ຂໍໃຫ້ອ້ອນຕໍ່ຄຸນພຣະຣັຕນະໄຕຣຈົ່ງໄດ້ມາຊ່ວຍອະພິບານຄຸ້ມຄອງປ້ອງກັນບັນດາທ່ານຜູ້ທີ່ປະສົບໄພສົງຄາມທຸກຖ້ວນໜ້າ ໃຫ້ໄດ້ຮັບຄວາມຢູ່ເຢັນເປັນສຸກ ປາສຈາກໄພພິບັຕນານາປະການເຖີ້ນ.

## ສານສເດັດນາຍົກຣັຖມົນຕຣີ ເຈົ້າສຸວັນນະພູມາ (ເຈົ້າກຣົມມາ)

ກ່າວໃນວັນສົງເຄາະຫ໌ຜູ້ປະສົບໄພຍ໌ສົງຄາມ ປະຈໍາປີ ໑໙໗໑

*ພີ່ນ້ອງຮ່ວມຊາດທີ່ຮັກແພງທັງຫລາຍ*

ນີ້ແມ່ນຮອບປີທີສີ່ ທີ່ພວກເຮົາໄດ້ພ້ອມພຽງກັນ ປະກອບພິທີເປັນທາງການ ໃນວັນສົງເຄາະຜູ້ປະສົບໄພສົງຄາມ ເພື່ອເປັນສັນຍາລັກ ສແດງໃຫ້ເຫັນອີກເທື່ອນຶ່ງວ່າ ຣັຖບານ ແລະ ປະຊາຊົນພົລເມືອງລາວທຸກຖ້ວນໜ້າ ທີ່ຢູ່ແນວຫລັງໄດ້ຣະນຶກເຖິງ ກຽດຕິຄຸນ ຄວາມດີຂອງບັນດານັກຮົບລາວຜູ້ກ້າຫານຢູ່ສເມີ ແລະທັງບໍ່ໄດ້ຫລົງລືມ ປະຊາຣາສດອນ ທີ່ໄດ້ຮັບເຄາະຮ້າຍ ຫລື ຕົກທຸກໄດ້ຍາກຈາກໄພສົງຄາມ ຊຶ່ງປະເທດຊາຕເຮົາໄດ້ປະສົບພົບພໍ້ ຢູ່ໃນເວລານີ້.

ເພື່ອນພີ່ນ້ອງທັງຫລາຍ ຍ່ອມຮູ້ດີແລ້ວວ່າ ເປັນດ້ວຍເຫດໃດ ຊາວອົພຍົບ .ຈຶ່ງໄດ້ພັດພາກພີຈາກຖິ່ນຖານ ບ້ານຊ່ອງຂອງຕົນ ເປັນດ້ວຍເຫດໃດ ຊັບສົມບັດພັສຖານ ອັນເປັນຂອງສ່ວນຕົວບຸກຄົນ ແລະຂອງຣັຖ ຈຶ່ງຖືກທໍາລາຍເຜົາຜານລົງຢ່າງນັບບໍ່ຖ້ວນ ເປັນດ້ວຍເຫດໃດ ຈຶ່ງມີການສູນເສັຍລູກຮັກ ຫລານແພງຂອງພວກເຮົາ ມີທັງຜູ້ເສັຽອົງຄະ ເດັກກໍາພ້າ ແລະນາງໝ້າຍເປັນຈໍານວນມາກ.

ສິ່ງທີ່ກ່າວມາທັງໝົດນີ້ ແມ່ນເກີດຈາກຄວາມເຫັນຜິດ ຂອງພວກແນວລາວຮັກຊາຕ ທີ່ສົມຮູ້ເປັນໃຈ ກັບ ຮາໂນຍ ແລ້ວປ່ອຍໃຫ້ກໍາລັງທະຫານວຽດນາມເໜືອເຂົ້າມາລຸກລານ ເຂັ່ນຂ້າ ປະຊາຊົນລາວຜູ້ຮັກຊາດ ເພື່ອຜົນປະໂຍດທາງລັດທິການເມືອງຂອງພວກເຂົາ ເພື່ອຍຶດເອົາດິນແດນລາວບາງສ່ວນເປັນທາງຜ່ານ ແລະ ເປັນບ່ອນທ້ອນໂຮມກໍາລັງທະຫານ ເພື່ອທໍາສົງຄາມ ໃນວຽດນາມໃຕ້ ແລະຂເມນ ຍັງບໍ່ພຽງເທົ່ານີ້ ໂຄງການອັນເລິກແລບ ແລະສໍາຄັນຂອງພວກເຂົານັ້ນ ແມ່ນປະຕິບັດຕາມແຜນ ຂອງພັກລາວດົງ ຄືພັກກອມມຸນິດ ອິນໂດຈີນ, ທີ່ຖືກຈັດຕັ້ງຂຶ້ນແຕ່ປີ ໑໙໓໑ ເປັນຕົ້ນມາ ໂດຍພວກເຂົາມີຈຸດປະສົງ ຈະກໍາເອົາທຸກປະເທສໃນແຫລມອິນໂດຈີນ ໃຫ້ຕົກຢູ່ໃນຄວາມຄຸ້ມຄອງຂອງກອມມຸນິດລາວດົງ ທີ່ແຕ່ກ່ອນເອີ້ນວ່າ ວຽດມິນນັ້ນເອງ.

ເພື່ອຫລອກລວງ ຕົບຕາປະຊາຊົນ ຜູ້ບໍ່ຮູ້ເທົ່າເຖິງການ ພວກແມວລາວ ເຄີຍຮ້ອງໂຮໂຄສນາເປັນປະຈຳວ່າ ການຕໍ່ສູ້ຂອງພວກເຂົາມັ້ນ ເປັນການຕໍ່ສູ້ ເພື່ອປົດປ່ອຍຊາຕ

ຄວາມຈິງຣາຊອານາຈັກລາວ ເປັນປະເທດທີ່ໄດ້ຮັບເອກຣາດ ມາໄດ້ຊາວກວ່າປີແລ້ວ, ມີຮ້ອຍກວ່າປະເທດ ໃນໂລກຮັບຮູ້ ແລະນັບຖືເອກຣາຊ ອະທິປະໄຕຂອງລາວເຮົາ ທີ່ໄດ້ເປັນສະມາຊິກຂອງອົງການສຫະປະຊາຊາດ ນຳອີກດ້ວຍ.

ການປົກຄອງພາຍໃນປະເທດ ໄດ້ເປັນໄປຢ່າງ ອິສຣະ ເສຣີ ຕາມຣະບອບປະຊາທິປະໄຕພາຍໃຕ້ຮົ່ມໂພທິສົມພານ ຂອງພຣະບາດສົມເດັດ ພຣະເຈົ້າມະຫາຊີວິດ ມີກອງປະຊຸມຣາຊມົນຕີ, ມີສະພາຜູ້ແທນຣາສດອນ ແລະມີຣັຖບານ ເປັນຜູ້ບໍຣິຫານປະເທດຊາຕ ຕາມກົດຣັຖທັມມະນູນ ນັບແຕ່ປີ ໑໙໔໗ ເປັນຕົ້ນມາ.

ແຕ່ໃດ ໆ ມາ ປະຊາຊົນລາວເຮົາ ມັກຄວາມສັນຕິສຸກ ມີສີລທັມປະຈຳໃຈ ບໍ່ເຄີຍຮາວີຣົບກວນຜູ້ໃດ ເມື່ອໂລກໄດ້ມີການປ່ຽນແປງ ແບ່ງແຍກ ອອກເປັນສອງຝ່າຍ ແລະ ຂັດແຍ່ງກັນເພື່ອຫລີກເວັ້ນຈາກມະຫາໄພສົງຄາມ ຣັຖບານ ໂດຍການນຳ ຂອງຂ້າພະເຈົ້າເອງ ຈຶ່ງໄດ້ຍຶດຖືເອົານະໂຍບາຍການເມືອງ ເປັນກາງ ໂດຍມີ ໑໓ ປະເທດຮັບຮູ້ ແລະເຊັນສັນຍາຄ້ຳປະກັນໃຫ້ ເມື່ອປີ ໑໙໖໔ ທີ່ນະຄອນເຊີແນວ.

ດ້ວຍເຫດນີ້ ການຕໍ່ສູ້ເພື່ອປົດປ່ອຍຊາດ ເໝືອນດັ່ງຄຳໂຄສະນາ ຫລອກລວງ ຂອງແມວລາວນັ້ນ ຈຶ່ງບໍ່ມີເຫດຜົນ ແຕ່ຢ່າງໃດ ນອກຈາກພວກເຂົາໄດ້ກາຍໄປເປັນລູກມື ຜູ້ບອກໄດ້ ໃຊ້ຟັງຂອງວຽດນາມເໜືອເທົ່ານັ້ນ ເພື່ອຄວາມມັກໃຫຍ່ໃຝ່ສູງ ຂອງພວກເຂົາເອງ.

ຖ້າພວກແມວລາວ ຫາກບໍ່ໄດ້ຮັບການຊ່ວຍເຫລືອ ທາງທະຫານ ຈາກວຽດນາມເໜືອ ແລະບໍ່ປະຕິບັດຽວາມສັ່ງ ຂອງຮາໂນຍແລ້ວ ພວກເຂົາຄົງຫັນໜ້າ ເຂົ້າມາຮ່ວມມືກັບ ຣັຖບານ ແຕ່ນານແລ້ວ.

## *ເພື່ອນຮ່ວມຊາດ ທີ່ຮັກແພງ*

ເປັນເວລາຍາວນານແລ້ວ ທີ່ຄນະປະເທດລາວ ໄດ້ປະຕິບັດຄຳສັ່ງ ສ້າງຄວາມແຕກແຍກຂຶ້ນໃນອົງການຣັຖບານປະສົມ ນ້າງເພຄວາມເປັນກາງຂອງລາວ ແລະ ເປີດໂອກາດໃຫ້ກອງທະຫານ

ວຽດນາມເໜືອມາເຂັ້ນຂ້າ ພີ່ນ້ອງລາວຂອງເຮົາ ເປັນຈຳນວນມາກມາຍ ກ່າຍກອງ ສ່ວນທີ່ທັນຫລີກໄພອັນຕຣາຍ ກໍໄດ້ພາກັນເອົາຕົວຫລົບໜີມາເພິ່ງໂພທິສົມພານ ຂອງຣັຖບານ ພຣະບາດສົມເດັດພຣະເຈົ້າມະຫາຊີວິດ ມີຈຳນວນເຖິງ ໗໐໐.໐໐໐ ຄົນ.

ເຖິງແມ່ນວ່າ ຣັຖບານ ຈະໄດ້ປະສົບພົບພໍ້ ກັບບັນຫາຫຍຸ້ງຍາກ ຈາກເສິກສົງຄາມ ພຽງໃດກໍດີ ຣັຖບານ ບໍ່ໄດ້ຖິ້ມປະລະໄລ ພີ່ນ້ອງຊາວອົພຍົບ ຫລົບໄພ ແລະໄດ້ອົນຂວາຍ ຫາທຸກວິທີທາງເພື່ອຊ່ວຍເຫລືອ ເພື່ອນຮ່ວມຊາດ ທີ່ໜີຮ້ອນມາເພິ່ງເຢັນ ໃຫ້ມີບ່ອນ ສ້າງຢູ່ ທຳກິນ ເປັນສ່ວນຫລາຍແລ້ວ ຄົງຍັງເຫລືອແຕ່ພຽງສ່ວນນ້ອຍເທົ່ານັ້ນ ຊຶ່ງຣັຖບານ ກໍໄດ້ເອົາໃຈໃສ່ເບິ່ງແຍງ ຢ່າງໃກ້ຊິດຢູ່ສເມີ ແລະອີກບໍ່ນານ ພີ່ນ້ອງອົພຍົບຫລົບໄພທັງໝົດ ກໍຈະສາມາດ ມີການປະກອບທາລ້ຽງຊີບຂອງຕົນເອງໄດ້ຢ່າງທົ່ວເຖິງ.

ຍ້ອນຄວາມເປັນຫ່ວງ ຢາກຈະໃຫ້ປະຊາຊົນພົລເມືອງ ມີການຢູ່ດີ ກິນດີນັ້ເອງ ເຖິງແມ່ນວ່າ ປະເທດຊາຕຂອງເຮົາ ຈະຕົກຢູ່ໃນພາວະຂັບຂັນ ປັ່ນປ່ວນ ພຽງໃດກໍຕາມ ຣັຖບານ ບໍ່ໄດ້ລົດລະຄວາມພຍາຍາມ ເພີ່ມທະວີການພັທນາ ສ້າງສາປະເທດ ໃຫ້ຈເຣີນກ້າວໜ້າ ເປັນລຳດັບ ສເມີມາ ເຊັ່ນວ່າ: ການສ້າງ ແລະ ຂຍາຍ ໂຮງໝໍ, ໂຮງຮຽນ, ໂຮງການ ສຳຫລັບກະຊວງ ທະບວງກົມ ຕລອດເຖິງອາຄານສະຖານທີ່ພັກເຊົາຕ່າງ ໆ.

- ການສ້າງ ຫລື ສ້ອມແປງຂົວ, ຖນົນຫົນທາງ ສາຍສຳຄັນ ແຕ່ເໜືອຕລອດໃຕ້ ;
- ການຕັ້ງໂຮງງານອຸສາຫະກັມ ແລະກະສິກັມ ໃນນະຄອນວຽງຈັນ ແລະຕາມແຂວງອື່ນໆ;
- ການສ້າງເຂື່ອນນ້ຳ ແລະ ເໝືອງນາ ຫລາຍແຫ່ງ ;
- ການປັບປຸງ ແລະ ຂຍາຍກະແສໄຟ ແລະນ້ຳປະປາໃຫ້ດີຂຶ້ນ ;
- ການສ້າງ ແລະຂຍາຍສນາມບິນ ຫລາຍບ່ອນ ເພື່ອສະດວກໃນການຄົມມາຄົມຂົນສົ່ງ;
- ການສົ່ງເສີມການປູກ ແລະລ້ຽງສັດ ໃຫ້ພຽງພໍກັບຄວາມຕ້ອງການ ;
- ການປ້ອງກັນ ແລະຮັກສາຄວາມທຸ່ນທ່ຽງ ຂອງເງິນກີບ ;

— ການຊ່ວຍເຫລືອ ໃຫ້ພວກອົພຍົບຫລົບໄພ ແລະທະຫານຜ່ານເສິກ ມີທີ່ພັກພາອາໃສ

ແລະໄດ້ປະກອບອາຊີບຢ່າງເໝາະສົມ ;

ຣວມຄວາມແລ້ວ, ການສ້າງສາ ພັທນາປະເທດຊາດ ຊຶ່ງພວກເຮົາໄດ້ເຣີ່ມຕົ້ນ ປະຕິບັດມານັ້ນ, ມັນບໍ່ໄດ້ຜົນດີ ຢ່າງໜ້າພໍໃຈ, ທັງເປັນສິ່ງກົງກັນຂ້າມ ກັບການປະພຶດ ພວກແນວລາວຮັກຊາດ ຊຶ່ງມີແຕ່ພິປອງນ້າງເພທຳລາຍ ຈູດເລົາເຜົາໃໝ້ ຊັບສົມບັດຂອງຣັຖ ແລະຂອງປະຊາຊົນ ອັນຈະນຳໄປສູ່ແຕ່ຄວາມຈິບຫາຍ ໃຫ້ແກ່ຊາດ ຂອງຕົນເອງເທົ່ານັ້ນ.

ຂ້າພະເຈົ້າຫວັງວ່າ ທ່ານທັງຫລາຍຄົງເຂົ້າໃຈດີ ເຖິງຕົ້ນເຫດ ຂອງການທຳລາຍ ລ້າງຜານຜືນແຜ່ນດິນລາວ ແລະ ຊາບເຖິງຄວາມເບື່ອໜ່າຍສົງຄາມ, ຄວາມທຸກທໍຣະມານ ຂອງພົລເມືອງລາວ ອັນເນື່ອງມາຈາກສົງຄາມ ຊຶ່ງແມ່ນຄນະແນວລາວ ເປັນຜູ້ບົງໜ້າ ຂອງກຳລັງຕ່າງດ້າວ ເພື່ອເຂົ້າມາລຸກລານແລະແຊກແຊງໃນລາວ ໂດຍບໍ່ມີວັນຈະສິ້ນສຸດ.

ເຖິງຢ່າງໃດກໍດີ, ໃນເວລາທີ່ເຮົາ ພະຍາຍາມ ຊອກຊ່ອງທາງປັບປຸງ ສັນຕິພາບແລະຄວາມປອງດອງຊາດຂັ້ນນີ້ ຂ້າພະເຈົ້າຈຶ່ງຂໍເຊີນຊວນ *ພີ່ນ້ອງຮ່ວມຊາດທັງຫລາຍ ພ້ອມດ້ວຍມິດປະເທດ ຈົ່ງໃຫ້ຄວາມຮ່ວມມື ຊ່ວຍເຫລືອ ຜູ້ປະສົບໄພສົງຄາມ ໃນວັນສົງເຄາະທ໌ແຫ່ງຊາດນີ້ ຢ່າງກວ້າງຂວາງດ້ວຍເທີ້ນ.*

ຂໍໃຫ້ເສຣີພາບ, ເອກຣາຊ ແລະ ຄວາມເປັນກາງ ຂອງຣາຊອານາຈັກລາວ ຈົ່ງວັທນາຖາວອນ %



## ຄນະກັມການແຫ່ງຊາຕ ສົງເຄາະຫ໌ຜູ້ປະສົບໄພຍ໌ສົງຄາມ
## ຕັ້ງຂຶ້ນຕາມດຳຣັດສຳນັກນາຍົກຣັຖມົນຕຣີ ເລກທີ່ ໘໒໗/ປເຊ
## ລົງວັນທີ່ ໒໗/໑໒/໖໗

| | | |
|---|---|---|
| ໑– | ຣັຖມົນຕຣີ ຊ່ວຍວ່າການກະຊວງປະຊາສົງເຄາະຫ໌ແລະແຮງງານ | ປະທານ |
| ໒– | ເລຂາທິການຣັຖບານ | ຮອງປະທານ |
| ໓– | ເລຂາທິການ ກະຊວງຕ່າງປະເທດ | ກັມການ |
| ໔– | ຜູ້ບັນຊາການ ທະຫານສູງສຸດ ກອງທັບແຫ່ງຊາດ | ກັມການ |
| ໕– | ອະທິບໍດີ ປະຈຳກະຊວງ ທຸກ ໆ ກະຊວງ | ກັມການ |
| ໖– | ອະທິບໍດີ ສຳນັກງານນາຍົກຣັຖມົນຕຣີ ແລະຫົວໜ້າສຳນັກງານກະຊວງ ທຸກ ໆ ກະຊວງ | |
| ໗– | ອະທິບໍດີກົມຈິຕວິທຍາ. | ກັມການ |
| ໘– | ເຈົ້າແຂວງ ໆ ວຽງຈັນທນ໌. | ກັມການ |
| ໙– | ເຈົ້າຄອງກຳແພງນະຄອນວຽງຈັນທນ໌. | ກັມການ |
| ໑໐– | ປະທານສະພາກາຊາດ | ກັມການ |
| ໑໑– | ປະທານສະມາຄົມສຕຣີ | ກັມການ |
| ໑໒– | ປະທານສະມາຄົມ ສະກຸດລາວ. | ກັມການ |

# ຣາຍການວັນສງເກາະຫຼູ້ປະສິບໄພບໍສງຄາມ

(໑ ມີນາ ໑໙໗໑)

ວັນເສົາ ວັນທີ່ ໒໗ ກຸມພາ

ຢູ່ທີ່ໂຮງພາພຍົນ ໂອດຽນຣາມາ

ເວລາ ໐໗ ໂມງ ໐໐ – ສາຍພາພຍົນເຣື່ອງ "ອະມະຣະປາລີ"

ວັນອາທິດ ວັນທີ່ ໒໘ ກຸມພາ ໑໙໗໑

ເວລາ ໑໐ ໂມງ ໐໐ – ສາຍພາພຍົນເຣື່ອງ "ອະມະຣະປະລີ"

ວຽງຈັນ ວັນທີ່ ໑ ມີນາ ໑໙໗໑

ຢູ່ຕາມວັດຕ່າງ ໆ ໃນເທສບາລ

ເວລາ ໐໖ ໂມງ ໐໐ – ຕັກບາດ

– ຟັງທັມະເທສນາ

– ອຸທິອະນິຈາ

ຢູ່ທີ່ຫມວດໂຮງຮຽນຕ່າງ ໆ ໃນເຂດເທສບາລ

ເວລາ ໐໘ ໂມງ ໐໐ – ໂຮມນັກຮຽນ ຕາມໝວດໂຮງຮຽນຕ່າງ ໆ

– ຄຳປາໄສ ໂດຍຫົວໜ້າໝວດໂຮງຮຽນ

ເວລາ ໐໘ ໂມງ ໐໐ – ຄນະ ອອກແຜ່ເງິນ ຕາມຄຸ້ມຕ່າງ ໆ ໃນເຂດເທສບາລ

ໂດຍ :

– ຄນະ ເຍົາວະພຸທລາວ

– ຄນະ ສະກຸດລາວ

– ຄນະ ສະມາຄົມຍິງ

– ຄນະ ສະມາຄົມຈີນ

— ຄນະ ສະມາຄົມອຽດນາມ

## ຢູ່ທີ່ເດີ່ນທາດຫລວງ

ເວລາ ໑໔ ໂມງ ໐໐ — ການສະແດງກິລາຕ່າງ ໆ

ເວລາ ໑໖ ໂມງ ໐໐ — ສານຂອງສເດັດນາຍົກຣັຖມົນຕຣີ

ເວລາ ໑໖ ໂມງ ໑໔ — ເຕະບານ

## ຢູ່ທີ່ໂຮງພາພຍົນ ໂອດຽນຣາມາ

ເວລາ ໒໐ ໂມງ ໓໐ — ການສະແດງຟ້ອນຕ່າງ ໆ ໂດຍການຮ່ວມມືຂອງ :

— ຄນະ ສະມາຄົມສົ່ງເສີມສິລປິນລາວ ສ.ສ.ສ.

— ຄນະ ສະມາຄົມຈີນ

— ຄນະ ສະມາຄົມອຽດນາມ

ຂໍພໍ່ແມ່ພີ່ນ້ອງ ໃນເຂດເທສບາລຈົ່ງພ້ອມພຽງກັນສະລະຊົມ ເພື່ອການກຸ້ມຮ່ວມກັນດ້ວຍ.

[ ຈົບລາຍການ ]



# ບັນທຶກການປະຊຸມ

## ຄນະກັມມະການວາງແຜນຈັດງານສັງເຄາະຫ໌ຜູ້ປະສົບໄພຍ໌ສົງຄາມ ປີ ໑໙໗໑

*ສະຖານທີ່ປະຊຸມ :* ຫ້ອງປະຊຸມກະຊວງປັບປຸງໝູ່ບ້ານ.

*ວັນແລະເວລາ :* ວັນສຸກທີ່ ໑໙ ທັນວາ ເວລາ ໙ ໂມງເຊົ້າຫາ ໑໒ ໂມງ.

*ປະທານທີ່ປະຊຸມ :* ພະຍາ ຣັຕນະວິຈິດ (ແກ້ວ ວິພາກອນ)

*ເຂົ້າຮ່ວມປະຊຸມມີ :* – ທ່ານທຸມແພງ ປຣະທຸມວັນ, ອະທິບໍດີກະຊວງປະຊາສົງເຄາະຫ໌ແລະແຮງງານ.

– ທ່ານພຍາ ຄຳມ້າວ ພູມສວັດ, ເຈົ້າຄອງກຳແພງນະຄອນວຽງຈັນທນ໌.

– ທ່ານຊົມພູ ຈວງຣາຊໂກດ, ອະທິບໍດີກົມກີລາແລະຍຸວະຊົນ.

– ທ່ານຜູ້ຕາງໜ້າອະທິບໍດີກົມປະຖົມສຶກສາ.

– ທ່ານໂຖມ ເນັຕຕະວົງສ໌, ຫົວໜ້າສຳນັກງານກະຊວງປະຊາສົງເຄາະຫ໌ແລະແຮງງານ.

*ຂາດປະຊຸມມີ:* – ທ່ານອະທິບໍດີປະຈຳກະຊວງຖແລງຂ່າວແລະໂຄສະນາການ.

– ທ່ານເຈົ້າແຂວງ ໆ ວຽງຈັນທນ໌.

– ທ່ານ ພ.ອ. ອະທິບໍດີກົມຈິຕວິທຍາ.

*ຫົວຂໍ້ປະຊຸມ :* ໑. ວາງແຜນຈັດງານດ້ານໂຄສະນາ ເຜີຍແຜ່ກິຈກັມ ວັນສົງເຄາະແລະການຊ່ວຍເຫລືອຜູ້ປະສົບໄພຍ໌ສົງຄາມ ຕາມນະໂຍບາຍແລະວັດຖຸປະສົງຂອງຣັຖບາລ ໃຫ້ໄດ້ຜົລຫລາຍທີ່ສຸດທີ່ຈະຫລາຍໄດ້.

໒. ວາງວິທີຫາຣາຍໄດ້ສຳລັບໄວ້ເປັນທຶນສົງເຄາະຜູ້ອົພຍົບຫລົບໄພຍ໌ ແລະທະຫານແນວໜ້າຕລອດຮອດພີ່ນ້ອງຮ່ວມຊາດອື່ນ ໆ ທີ່ໄດ້ຮັບເຄາະກັມຈາກສົງຄາມ.

໓. ວາງແຜນຈັດງານຊຸມນຸມສາທາຣະນະ ພາຍໃຕ້ການເປັນປະທານຂອງອັຍສເດັດນາຍົກຣັຖມົນຕຣີ ໃນງານນັ້ນໃຫ້ຂ້າຣາຊການແລະປະຊາຊົນໄປຮ່ວມຢ່າງກວ້າງຂວາງ.

ເມື່ອພິຈາຣະນາສົມຄວນແລ້ວໄດ້ຕົກລົງກັນດັ່ງນີ້ :

໑. ໃນແຂວງວຽງຈັນທນ໌ແລະຫລວງພຣະບາງ ໃຫ້ທ່ານເຈົ້າຄອງກຳແພງນະຄອນ ເປັນປະທານຈັດງານ.

໔. ໃນແຂວງອື່ນ ໆ ໃຫ້ທ່ານເຈົ້າແຂວງເປັນປະທານ ທັງນີ້ໂດຍການຮ່ວມມືຂອງຫົວໜ້າການທຸກ ໆ ພະແນກພາຍໃນແຂວງ.

໕. ຂໍໃຫ້ກະຊວງຖແລງຂ່າວແລະໂຄສະນາການສັ່ງວິທຍຸທຸກສຖານີ ກະຈາຍຄຳຂວັນ, ບົດຄວາມ, ບົດສັມພາດ, ແລະຂ່າວອື່ນ ໆ ເປັນພິເສດ ໂດຍໃຫ້ກະຈາຍລ່ວງໜ້ານັບແຕ່ບັດນີ້ເປັນຕົ້ນໄປ

໖. ອັດ ແລະຖ່າຍທອດພຣະຣາຊສານຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດ, ພຣະໂອວາດຂອງສົມເດັດພຣະສັງຄະຣາຊ ແລະຄຳປາໃສຂອງອົງສເດັດນາຍົກຣັຖມົນຕຣີໃນວັນເປີດພິທີ. ຂໍໃຫ້ໂຮງໜັງສາຍພາບສໄລດ໌ຄຳຂວັນຕ່າງ ໆ ກ່ອນຢ່າງນ້ອຍນຶ່ງເດືອນ.

໗. ໃຫ້ວັດຕ່າງ ໆ ປະກອບພິທີທຳບຸນອຸທິດກຸສົນແດ່ຜູ້ລ່ວງລັບໄປເນື່ອງດ້ວຍໄພຍ໌ສົງຄາມ ແລະໃຫ້ມີຟັງພຣະທັມມະເທສນາເປັນພິເສດ.

໘. ຈັດໃຫ້ມີການເສັງບົດປະພັນທັງປະເພດກອນແລະບົດຄວາມ ໃນຫົວເຣື່ອງວ່າ "ການພິມຍຶບໃນລາວ"

*ການຫາຣາຍໄດ້ :* — ຈັດການສແດງສິລະປະດົນຕຣີ ຫລືເສັງເພງໃນວັນທີ ໒໗ ກຸມພາ ໑໙໗໑

— ຈັດເຊົ່າຊີເນມາເຣື່ອງ "ອະມະຣະປາລີ" ຊຶ່ງເປັນໜັງອິນເດັຽມາສາຍໃນແຂວງຕ່າງ ໆ ຄື: ຫລວງພຣະບາງ, ປາກເຊ, ສວັນນະເຂດ, ແລະວຽງຈັນທນ໌ ໂດຍເຣີ່ມແຕ່ວັນທີ່ ໑໙ ກຸມພາ ໑໙໗໑ ເປັນຕົ້ນໄປ.

— ຈັດໃຊ້ພວກອາສາສມັກຈາກສະມາຄົມການກຸສົນຕ່າງ ໆ ອອກແຜ່ເງິນນຳປະຊາຊົນແລະ

— ຮັບການບໍຣິຈາກຂອງປະຊາຊົນທົ່ວໄປ.

— ການຈັດສແດງກິລານັກຮຽນແລະເຕະບານ ມອບໃຫ້ກະຊວງສຶກສາ ແລະຍຸວະຊົນຮັບໄປດຳເນີນງານ ໂດຍສະເພາະໃນວັນທີ່ ໑ ມີນາ ໑໙໗໑.

ເມື່ອໄດ້ຕົກລົງກັນເປັນທີ່ຮຽບຮ້ອຍແລ້ວແລ້ວ ທ່ານປະທານກອງປະຊຸມກໍໄດ້ກ່າວອັດການປະຊຸມໃນເວລາ ໑໔ ໂມງ ໐໐.

ທຳທີ່ວຽງຈັນ, ຕາມວັນເວລາທີ່ກ່າວຂ້າງເທິງນີ້.

| | |
|---|---|
| *ປະທານ :* | ຜູ້ຣາຍງານ |
| (ລາຍເຊັນ) | (ລາຍເຊັນ) |
| (ແກ້ວ ວິພາກອນ) | (ໂຖມ ເມັດຕະວົງສ໌) |

# ບົທສົນທະນາ ເຣື່ອງບັນຫາອົພຍົບ

*ໂດຍ ທ່ານແກ້ວ ວິພາກອນ*

*ທີ່ສຖາບັນກົດຫມາຍ ແລະການປົກຄອງແຫ່ງຊາດ*

*ວັນທີ່ ໗/໒/໗໑*

---

*ທ່ານຜູ້ມີກຽດທີ່ນັບຖື*

*ເພື່ອນພີ່ນ້ອງນັກສຶກສາ ທີ່ຮັກທັງຫລາຍ,*

ຂ້າພະເຈົ້າຮູ້ສຶກເປັນກຽດທັງຍິ່ງທີ່ໄດ້ຖືກເຊື້ອເຊີນໃຫ້ມາສົນທະນາກັບພວກທ່ານ ກ່ຽວກັບບັນຫາອັນສຳຄັນຍິ່ງຄື : ບັນຫາການເປັນຢູ່ຂອງພີ່ນ້ອງຮ່ວມຊາດຂອງເຮົາ ທີ່ຈຳເປັນຕ້ອງພັດພາກຈາກເຄຫະສຖານບ້ານເຮືອນເພາະ *ໄພສົງຄາມ* ຈຶ່ງພວກເຮົາໃຫ້ຊື່ກັນວ່າ "*ພວກອົພຍົບ*"

ກ່ອນຈະກ່າວເຖິງ ບັນຫາອົພຍົບໃຫ້ທ່ານຟັງ ຂ້າພະເຈົ້າຂໍກ່າວເຖິງ *ບັນຫາສັງຄົມໂດຍທົ່ວໄປ* ໃຫ້ທ່ານຊາບເສັຽກ່ອນ ຈຶ່ງບັນຫາອົພຍົບເປັນສຽງແຕ່ສ່ວນນຶ່ງເທົ່ານັ້ນ.

ນັກປຣາຊ, ນັກສັງຄົມວິທຍາກ່າວກັນວ່າ :

໑. *ມະນຸສເປັນສັດຊ່າງຄົວກິນ* : ເພາະສັງເກດເຫັນວ່າ ມີແຕ່ມະນຸສຊາດດຽວເທົ່ານັ້ນໃນໂລກນີ້ທີ່ຈຳເປັນຕ້ອງປຸງຕ້ອງ ຕ້ອງຄົວອາຫານກິນ, ສ່ວນສັດປະເພດອື່ນນັ້ນກິນອາຫານເທົ່າທີ່ເປັນຢູ່ຕາມທັມມະຊາດ ໂດຍບໍ່ຈຳເປັນປຸງແຕ່ງ.

໒. *ມະນຸສເປັນສັດ ປຣັຊຍາ* : ເພາະວ່າຕັ້ງແຕ່ຮູ້ຄວາມມາ ມະນຸສສົນໃຈຢາກຮູ້ ຊອກຊ່ອງທາງແກ້ບັນຫາ *ຄວາມເກີດ ຄວາມຕາຍ*, ຕົ້ນເຫດແລະທີ່ສຸດ *ຂອງຊີວິດ*, ຕົ້ນເຫດ *ແຫ່ງ* ຄວາມສຸຂ ແຫ່ງຄວາມທຸກ, ຫົນທາງທີ່ຈະນຳໄປສູ່ຄວາມສງົບສຸຂຂອງແຕ່ລະບຸກຄົນໃນໂລກນີ້ແລະໂລກໜ້າ ຊຶ່ງທັງມອນນີ້ໄດ້ຊື່ວ່າ ເປັນບັນຫາປຣັຊຍາ.

໓. *ມະນຸສເປັນສັດສັງຄົມ* : ເພາະເປັນສັດຈຳພວກທີ່ຊອກສແວງຫາຄູ່ຜົວເມັຽປະກອບຂຶ້ນ ແລະຮ່ວມຢູ່ດ້ວຍກັນເປັນຄອບເປັນຄົວ ເປັນບ້ານເປັນເມືອງ ເປັນປະເທສຊາດ ຊຶ່ງມີຂອບເຂດ ມີສຖາບັນຣະບຽບກົດໝາຍ ແລະຜູ້ນຳປົກຄອງ.

ຊີວິດໃນສັງຄົມນີ້ແຫລະ ເປັນການຈຳເປັນສຳລັບມະນຸສ, ແລະເວລາດຽວກັນ ເປັນທັງບໍ່ເກີດແຫ່ງຄວາມທຸກແລະຄວາມສຸຂຂອງມະນຸສ ຢູ່ໃນສັງຄົມ ເປັນທຸກ ປາສຈາກສັງຄົມບໍ່ໄດ້, ບໍ່ຕ່າງຫຍັງກັບ *ສັງຄົມຣະຫວ່າງເພດ, (ມີນິທານບົດນຶ່ງກ່າວວ່າ :* ເມື່ອເວລາພຣະເຈົ້າສ້າງໂລກ ເມື່ອສ້າງສັພະສັດທັງຫລາຍແລ້ວ, ໄດ້ສ້າງຄູ່ຜົວຕົວເມັຽສຳລັບສັດທຸກຊນິດ, ແຕ່ສຳລັບມະນຸດນັ້ນດ້ວຍຄວາມຫລົງລືມ ຫລືເຈຕນາຊຶ່ງເຮົາບໍ່ສ່ອງເຫັນໄດ້ ພຣະເຈົ້າເລີຍສ້າງແຕ່ມະນຸສຜູ້ຊາຍ, ຊາຍໂທນຄົນນັ້ນເມື່ອເຫັນສັພະສັດທັງຫລາຍເປັນຄູ່ຜົວຕົວເມັຽກັນ, ຕົວເອງທົນທານຕໍ່ຄວາມເປັນຢູ່ຢ່າງໂດດດ່ຽວບໍ່ໄດ້ ຈຶ່ງໄປຕໍ່ວ່າກັບພຣະຣູ້ເປັນເຈົ້າ ຂໍໃຫ້ພຣະຜູ້ເປັນເຈົ້າສ້າງຄູ່ຄອງໃຫ້ ພຣະຜູ້ເປັນເຈົ້າກໍເລີຍພຣະຣາຊທານຕາມຄຳປະສົງ ສ້າງມະນຸສເພດງາມ *ໃຫ້ຜູ້ນຶ່ງ* ແລ້ວມອບໃຫ້ເປັນເມັຽແກ່ບຸຣຸສນັ້ນ ຕໍ່ມາບໍ່ນານຊາຍຄົນນັ້ນກໍນຳເມັຽໄປສົ່ງມອບໃຫ້ພຣະຜູ້ເປັນເຈົ້າຄືນ ວ່າຕັ້ງແຕ່ມີເມັຽມາບໍ່ເຄີຍມີຄວາມສງົບ ມີແຕ່ທຸກ ຈຶ່ງຂໍສົ່ງມອບເມັຽຄືນໃຫ້ພຣະຜູ້ເປັນເຈົ້າ, ຈະຂໍຢູ່ເປັນໂສດຕລອດການ ບໍ່ນານຊ້ຳພັດກັບຄືນມາກາບໄຫວ້ພຣະຜູ້ເປັນເຈົ້າອີກວ່າ ຢູ່ໂດດດ່ຽວແຕ່ດຽວດາຍບໍ່ໄດ້ເປັນເດັດຂາດ ຂໍເຫັນພຣະຜູ້ເປັນເຈົ້າພຣະຣາຊທານສົ່ງເມັຽຄືນ ພຣະຜູ້ເປັນເຈົ້າຈຶ່ງອະນຸໂລມຕາມມອບເມັຽໃຫ້ຄືນ, ແລ້ວບອກເປັນຄັ້ງສຸດທ້າຍວ່າ: "ມີເມັຽກໍໃຫ້ເປັນທຸກ ບໍ່ມີເມັຽກໍໃຫ້ເປັນທຸກ" ສະນັ້ນຕັ້ງແຕ່ນັ້ນມາຜູ້ຊາຍທັງຫລາຍຈຶ່ງເປັນທຸກຍ້ອນເມັຽ, *ມີມັນ–ກໍເປັນທຸກ ບໍ່ມີມັນ–ກໍເປັນທຸກ*) ເຊັ່ນດຽວກັບສັງຄົມຂອງເຮົາຢູ່ໃນສັງຄົມກໍເປັນທຸກ ປາສຈາກສັງຄົມກໍບໍ່ໄດ້ ເວັ້ນແຕ່ຜູ້ທີ່ມີປັນຍາ, ມີຄວາມກ້າຫານອັນເດັດດ່ຽວ ຈຶ່ງສາມາດຫາຄວາມສງົບແລະຄວາມສຸຂແທ້ຢູ່ *ເໜືອສັງຄົມ, ນອກສັງຄົມ, ເໜືອໂລກ, ນອກໂລກ* ຊຶ່ງຄວາມພຣະເພີ່ນວ່າເປັນ *ໂລກຸຕຕະຣະທັມ* ຜູ້ໃດປາຖນາຄວາມສຸຂອັນຜ່ອງໃສບໍຣິສຸດຈາກຈາກກິເລສທັງປວງ ທ່ານແນະນຳໃຫ້ຕັດຈາກໂລກ, ໃຫ້ພົ້ນໂລກ ດັ່ງພຣະສັມມາສັມພຸທເຈົ້າໄດ້ຊົງຕຣັສວ່າ: "ນັ້ນໂກນໄມ້, ນັ້ນທ້ອງຖ້ຳ, ນັ້ນແມ່ນເຮືອນຮ້າງ, ທ່ານຈົ່ງໄປເພື່ອສແວງຄວາມຈິງແລະຄວາມສງົບສຸຂ"

ສຳລັບຄົນທັມມະດາສາມັນ ຄືເຮົາແລະທ່ານນີ້ ຜູ້ທີ່ຍັງບໍ່ສາມາດພົ້ນຈາກສັງຄົມໄດ້ ພຣະສັມມາສັມພຸທເຈົ້າກໍຊົງຕຣັສຊີ້ຊ່ອງທາງ *ເພື່ອປັບປຸງສັງຄົມໃຫ້ພໍຢູ່ໄດ້* ຊຶ່ງທາງທັມຣຽກວ່າ "*ສັງຄະຫະວັດຖຸ*" ເມື່ອຕັດຈາກສັງຄົມບໍ່ໄດ້ແລ້ວ ທ່ານແນະນຳໃຫ້ສ້າງຄວາມຜູກພັນຣະຫວ່າງສະມາຊິກ

ຂອງສັງຄົມໃຫ້ແໜ້ນໜຽວ ໃຫ້ມີສມາຄົມສາມັກຄີກົມກຽວກັນ ເພາະມີສະມາຄົມສາມັກຄີຢູ່ທີ່ໃດ ຄວາມສຳເຣັດຍ່ອມຢູ່ທີ່ນັ້ນ ວິທີຜູກມັດຈິດໃຈຂອງສມາຊິກໃນສັງຄົມໃຫ້ກົມກຽວ ເປັນນ້ຳນຶ່ງໃຈດຽວກັນທ່ານວ່າມີສີ່ຢ່າງຄື:

໑. *ທານ* : ຮູ້ຈັກແບ່ງສັນປັນສ່ວນ.
໒. *ປິຍະວາຈາ* : ຖ້ອຍຄຳມ່ວນ, ແມ່ນແລະຈັບໃຈ.
໓. *ອັຕຖະຈະຣິຍາ* : ບໍຣິການ, ຊ່ວຍເຫລືອຊຶ່ງກັນແລະກັນ.
໔. *ສະມານັຕຕາ* : ວາງຕົວໃຫ້ເໝາະສົມກັບຕົວເອງ, ກັບກາລະເທສະ.

ນອກຈາກນີ້ ສຳລັບ ຜູ້ມີໜ້າທີ່ຮັບຜິດຊອບໃນການເປັນຢູ່ຂອງສາຄົມ, ສຳລັບຜູ້ນຳທັງຫລາຍ ສຳລັບ ເຈົ້າຟ້າມະຫາກະສັດທັງຫລາຍ ທ່ານກໍໄດ້ກຳໜົດທັມໄວ້ຊື່ວ່າ "*ທົສພິທຣາຊທັມ*" ຄືທັມພຣະຣາຊາ ໑໐ ປະການໄດ້ແກ່:-

໑. *ທານັງ* : ຮູ້ຈັກໃຫ້ທານ ແບ່ງປັນ
໒. *ສີລັງ* : ຮູ້ຢູ່ໃນສີລ, ໃນຣະບຽບ, ກົດໝາຍ, ແລະປະເພນີ.
໓. *ປະຣິຈຈາຄັງ* : ເສັຽສລະ.
໔. *ມະທະວັງ* : ອ່ອນຫວານ.
໕. *ອາຊວັງ* : ຊື່ຕຣົງ.
໖. *ຕະປັງ* : ພະຍາຍາມທຳຮ້າຍຄວາມຊົ່ວ.
໗. *ອັກໂກທັງ* : ບໍ່ໂກດ.
໘. *ອະວິເຫສັງ* : ບໍ່ບຽດບຽນ.
໙. *ຂັນຕິ* : ອົດທົນ.
໑໐. *ອະວິໂຣທະນັງ* : ບໍ່ມັກຜິດໃຜ ໆ

ຈະແມ່ນໃນ *ສັງຄທະວັດຖຸ* ຫລືໃນ *ທົສພິທຣາຊທັມ* ກໍດີ ພຣະສັມມາສັມພຸທະເຈົ້າໄດ້ຊົງສັ່ງສອນໃຫ້ມີແບ່ງສັນປັນສ່ວນ (*ທານ*) ແລະເສັຽສລະ (*ບໍຣິຈາຄ*) ຣະຫວ່າງສມາຊິກຂອງສາຄົມ.

ບັນຫາສັງຄົມມີທຸກເມື່ອ ທຸກສມັຍ ແລະການແກ້ບັນຫາຄົມກໍເປັນພາຣະໜ້າທີ່ອັນສຳຄັນຂອງທຸກ ໆ ຣັຖບາລຕລອດມາ.

ການຂຸດນ້ຳບໍ່ ກໍ່ສາລາ – ການສ້າງຖນົນຫົນທາງ – ກາກປຸກໂຮງພຍາບາລແລະປູກຕົ້ນໄມ້ເພື່ອໃຊ້ເປັນຢາຮັກສາໂຣກ ໄດ້ປະຕິບັດກັນມາຕັ້ງແຕ່ສມັຍພຣະເຈົ້າອະໂສກຣາຊ ໃນອັນນະຄະດີຂອງລາວເຮົາ ເຊັ່ນ: ໃນເຣື່ອງເວສສັນດອນ, ສຽວສວາດ, ສິລໄຊຍ໌, ກໍເຕັມໄປດ້ວຍຄວາມອົບຣົມສັ່ງສອນ ເພື່ອຄວາມສງົບສຸກຂອງສັງຄົມ.........

"ເຖິງເມື່ອເດືອນຫົກໃຫ້ ກະໂທທຽວຫລາຍແທ່ງ
ລັຽງໝູ່ໝ້າຍແລະຮ້າງ ຮ່ອມໃຫ້ຂນອດຂໍ............"

ໃນສມັຍນີ້ເປັນສມັຍການປົກຄອງແບບປະຊາທິປະໄຕ ການເອົາໃຈໃສ່ແກ້ບັນຫາສັງຄົມຍິ່ງມີຄວາມສຳຄັນກວ່າທຸກ ໆ ຄັ້ງໃນປະວັດສາດ, ຕາມຣະບອບການປົກຄອງແບບປະຊາທິປະໄຕຖືກັນວ່າປະຊາຊົນພົລເມືອງມີສິດໄດ້ຮັບຄວາມເອົາໃຈໃສ່ຈາກຜູ້ປົກຄອງ ມີສິດໄດ້ຮັບຄວາມຍຸຕິທັມແບບໃໝ່ ທີ່ຮຽກກັນວ່າ *ຍຸຕິທັມດ້ານສັງຄົມ*

ໃຫ້ຄວາມຍຸຕິທັມດ້ານສັງຄົມນີ້ແຫລະ ເປັນນະໂຍບາຍການເມືອງຂອງທຸກ ໆ ຣັຖບາລ ແຕ່ໂດຍສະເພາະຢ່າງຍິ່ງເປັນພາຣະໜ້າທີ່ຂອງກະຊວງສັງຄົມສົງເຄາະຫ໌ ໃນທຸກ ໆ ປະເທດເຊັ່ນດຽວກັບຣາຊອານາຈັກລາວ, ບັນຫາສັງຄົມທີ່ຣັຖບາລມີໜ້າທີ່ແກ້ໄຂຍັງກວ້າງຂວາງເປັນພິສດານ ປ່ຽນແປງໄປຕາມປະເທດຊາດແລະ *ກາລະສມັຍ*

ສຳລັບປັດຈຸບັນນີ້ໃນຣາຊອານາຈັກລາວຂອງເຮົາ ບັນຫາສັງຄົມອັນສຳຄັນ ດີ *ບັນຫາພວກອົພຍົບຫລົບໄພຍ໌*

ຄວາມວ່າ "ອົພຍົບ" ເປັນພາສາບາລີອ່ານວ່າ *ອະພະຍະພະ* ເຮົາອ່ານວ່າ *ອົບພະຍົບ* ພາສາສາມັນຂອງລາວເຮົາຮຽກວ່າ *ໄທຍ້າຍຄົວ–ໄທລົວ.*

ການອົພຍົບ ການເຄື່ອນທີ່ ການຍ້າຍທີ່ ຈາກບ້ານນຶ່ງໄປສູ່ບ້ານນຶ່ງ ຫລືປະເທດນຶ່ງໄປສູ່ອີກປະເທດນຶ່ງມີຕລອດມາຕັ້ງແຕ່ເປັນໂລກ ຕົ້ນເຫດຂອງການອົພຍົບນີ້ກໍມີຫລາຍຊນິດ, ການຍ້າຍທີ່ເພື່ອສແວງຫາທີ່ທຳມາຫາກິນອັນອຸດົມສົມບູນ, ເພື່ອໜີຈາກໂຣກໄພໄຂ້ເຈັບ, ເພື່ອໜີຈາກຜູ້ຮ້າຍອ້າຍຂະໂມຍ ແຕ່ຕົ້ນເຫດສຳຄັນກວ່າໝູ່ຂອງການອົພຍົບນັ້ນຄື *ໄພຍ໌ສົງຄາມ.*

ການອົພຍົບໃນຣາຊອານາຈັກລາວຂອງເຮົາ ຫລັງຈາກປະເທດຊາດໄດ້ຮັບເອກກະຣາຊແລ້ວ ໄດ້ເຣີ່ມມີຕັ້ງແຕ່ປີ ໑໙໕໓ ເປັນຕົ້ນມາ ເພາະປີນັ້ນເປັນປີເຣີ່ມແຣກຂອງການບຸກຣຸກຂອງປະເທດວຽດນາມເໜືອຕໍ່ຣາຊອານາຈັກລາວ ນັບແຕ່ປີ ໑໙໕໓ ເຖິງປັດຈຸບັນ ປະຊາຊົນໃນແຂວງຕ່າງ ໆ ທີ່ຕິດກັບຊາຍແດນວຽດນາມເໜືອ ຫລືເຂດແຂວງທີ່ວຽດນາມເໜືອໃຊ້ຜ່ານ ເພື່ອໄປໂຈມຕີວຽດນາມໃຕ້ແລະຂເມນນັ້ນ ໄດ້ອົພຍົບຫລົບໄພຍ໌ເຂົ້າມາສແວງຫາທີ່ເພິ່ງພາອາໄສ ແລະທຳມາຫາກິນໃນເຂດທີ່ສງົບພາຍໃຕ້ການຄຸ້ມຄອງຂອງຣັຖບາລຢ່າງບໍ່ຢຸດຢັ້ງ, ປະຊາຊົນອົພຍົບດັ່ງກ່າວສ່ວນຫລາຍມາຈາກ *ແຂວງຜົ້ງສາລີ, ແຂວງຫລວງພຣະບາງ,* ຕອນທີ່ຕິດກັບວຽດນາມເໜືອ *ແຂວງຫົວພັນ, ແຂວງຊຽງຂວາງ,* ແລະຕລອດຊາຍແດນຂອງ *ແຂວງຄຳມ່ວນ, ສວັນນະເຂດ* ແລະ *ອັຕະປື,* ການອົພຍົບເຫັນວ່າເປັນໄປຈາກຝ່າຍຕາເວັນອອກຕາມຊາຍແດນວຽດນາມ ລົງມາສູ່ທົ່ງພຽງລຸ່ມແມ່ນ້ຳຂອງ, ເປັນການອົພຍົບແບບ ( One way ) ອົພຍົບແບບ ( Sens Unique ) ຈາກຕາວັນອອກແລະຕາວັນອອກສຽງເໜືອສູ່ຕາວັນອອກສຽງໃຕ້ຂອງຣາຊອານາຈັກລາວ ຕາມບັນຊີຂອງກະຊວງປະຊາສົງເຄາະຫ໌ນັບຕັ້ງແຕ່ປີ ໑໙໕໓ ເຖິງ ໑໙໗໐ ພວກອົພຍົບທັງໝົດມີປະມານ ໗໐໐.໐໐໐ (ເຈັດຮ້ອຍພັນຄົນ) ທັງນີ້ບໍ່ນັບພໍ່ຄ້າຊາວຂາຍຊຶ່ງເປັນຊາວຕ່າງປະເທດແລະມີພໍຢູ່ພໍກິນແລ້ວ ບໍ່ນັບຂ້າຣາຊການພົລເຮືອນ, ທະຫານ, ຕຳຣວຈ, ຊຶ່ງມີເງິນເດືອນພໍລ້ຽງຕົວເອງແລ້ວ ແລະນອກຈາກນັ້ນຍັງມີອົພຍົບຈຳນວນນຶ່ງ ຊຶ່ງໜີມາອາໄສຢູ່ຕາມປ່າຕາມເຂົາ ຊຶ່ງກະຊວງປະຊາສົງເຄາະຫ໌ບໍ່ສາມາດຊາບ ຈຳນວນແລະໃຫ້ຄວາມຊ່ວຍເລືອໄດ້ ຕາມຄວາມຄາດຄະເນຂອງຂ້າພະເຈົ້າເຊື່ອວ່າ ອົພຍົບທັງໝົດໃນຣາຊອານາຈັກລາວ ຣະຫວ່າງ ໑໐ ກວ່າປີທີ່ຜ່ານມານີ້ບໍ່ຕ່ຳກວ່າລ້ານຄົນ ໝາຍຄວາມວ່ານຶ່ງສ່ວນສາມຂອງປະຊາຊົນທັງໝົດໃນຊາດ ໄດ້ອົພຍົບຈາກຖິ່ນຖານບ້ານເດີມ (ຢ່າງນ້ອຍຄັ້ງນຶ່ງ ບາງເທື່ອ ສີ່–ຫ້າ ຄັ້ງ) ບັນຫາອົພຍົບຈຶ່ງເປັນບັນຫາຂອງປະຊາຊົນນຶ່ງສ່ວນສາມຂອງຊົນຊາດລາວ.

ບັນຫາ ອົພຍົບ ທີ່ປະຊາຊົນທຸກຄົນສົນໃຈ ຄື :–

໑. ການຍົກຍ້າຍ ຈາກຖິ່ນເດີມ.

໒. ການຮັບຕ້ອນ.

໓. ການຊ່ວຍເຫລືອ ໃຫ້ເຄື່ອງອຸປໂພກ ແລະ ບໍຣິໂພກ.

໔. ການໃຫ້ທີ່ພັກພາອາໄສ ແລະ ອາຊີບຢ່າງຖາວອນ.

ເພື່ອໃຫ້ອົພຍົບເຫລົ່ານັ້ນ ມີເຄຫະສະຖານ ບ້ານເຮືອນຢູ່ ມີອາຫານການກິນ ພຽງພໍກັບຄວາມຕ້ອງການ ຕລອດທັງມີວິຊາ ອາຊີບ ອັນແໜ້ນໜາຖາວອນ ສາມາດລ້ຽງຕົນເອງແລະຄອບຄົວໄດ້ໂດຍປາສຈາກການຂໍຄວາມຊ່ວຍເຫລືອ ຈາກຜູ້ອື່ນ ແລະໃນເວລາດຽວກັນ ສາມາດມີສ່ວນໃນການພັທນາ ເສຖກິຈຂອງບ້ານເມືອງໃຫ້ຈະເຣີນໄດ້.

– *ກ່ຽວກັບການຍົກຍ້າຍນັ້ນ :* ເມື່ອສັດຣູມາຣຸກຣານຄັ້ງໃດ ພວກປະຊາຊົນພົລເມືອງໄດ້ພະຍາຍາມ ຫາຊ່ອງທາງເອົາຕົວລອດ ໂດຍພາຫະນະຂອງຕົນ ຄືຍ່າງໜີ, ແລ່ນໜີ ບ່ອນມີເຮືອໃຊ້ເຮືອ ບ່ອນມີຣົຖ ຈ້າງຣົຖ ບາງຄັ້ງເມື່ອພາຫະນະຂອງຣັຖບານບໍ່ມີ ກໍໄດ້ພະຍາຍາມໃຫ້ຄວາມສະດວກ ໃນການຂົນສົ່ງຄືຊ່ວຍເສັຽຄ່າຣົຖ, ຄ່າເຮືອໃຫ້ຫລືໃຊ້ພາຫະນະຂອງຣັຖບານທີ່ມີຢູ່ ເພື່ອຂົນສົ່ງໃນຄາວຈຳເປັນທີ່ສຸດ ໂດຍຄວາມຮ້ອງຂໍຂອງປະຊາຊົນ ຣັຖບານໄດ້ໃຊ້ເຄື່ອງບິນຂົນສົ່ງ, ຕັ້ງແຕ່ມີການອົພຍົບຫລັ່ງໄຫລ໌ມາ ຂ້າພະເຈົ້າຊາບໄດ້ວ່າ ມີຄັ້ງດຽວເທົ່ານັ້ນທີ່ມີການຍົກຍ້າຍທາງເຄື່ອງບິນ ເປັນຈຳນວນຫລວງຫລາຍທີ່ສຸດ ຄືການຍົກຍ້າຍຈາກທົ່ງໄຫຫີນ ຣະຫວ່າງ ວັນທີ່ ໔ ຫາ ວັນທີ່ ໑໐ ເດືອນກຸມພາ ໑໙໗໐ – ພວກອົພຍົບຈາກທົ່ງໄຫຫີນລົງສູ່ແຂວງວຽງຈັນ ແລະ ບໍຣິຄັນ ໃນຣະຍະເວລາສັ້ນ ໆ ນັ້ນມີເຖິງ ໑໗.໐໐໐ ຄົນ.

– *ກ່ຽວກັບການຮັບຕ້ອນ :* ເມື່ອຊາບວ່າມີອົພຍົບຢູ່ທີ່ໃດ ຣັຖບານ ແລະສະມາຄົມສົງເຄາະຕ່າງ ໆ ທີ່ມີຢູ່ໄດ້ເຕົ້າໂຮມກັນ ນຳເອົາເຄື່ອງກິນ ຫລື ເຄື່ອງນຸ່ງຫົ່ມ ໄປຊ່ວຍເຫລືອຈັດສະຖານທີ່ພັກເຊົາ ທັງຫາໝໍແລະຢຸກຢາເພື່ອປິ່ນປົວເດັກນ້ອຍຜູ້ເຖົ້າ ແລະ ຜູ້ທີ່ໄດ້ຮັບການເຈັບໄຂ້ໄດ້ພະຍາດ ໃນຣະຫວ່າງການເດີນທາງ.

– *ການຊ່ວຍເຫລືອ ໃຫ້ເຄື່ອງອຸປະໂພກ ແລະບໍຣິໂພກ :* ເມື່ອພັກເຊົາຢູ່ສະຖານທີ່ຮັບຕ້ອນມີເຫື່ອມີແຮງ ພໍສົມຄວນແລ້ວ ພະນັກງານ ກະຊວງປະຊາສົງເຄາະຫ໌ ໄດ້ຊອກຫາສະຖານທີ່ ປຸກບ້ານຊົ່ວຄາວໃຫ້ສະຖານທີ່ບ້ານຊົ່ວຄາວນັ້ນ ຈຳຕ້ອງມີດິນພຽງພໍສຳຫລັບເຮັດໄຮ່ ເຮັດສວນມີຄວາມປອດໄພຍ໌ພຽງພໍແລະສະດວກພໍສຳລັບໃຫ້ການຊ່ວຍເຫລືອ – ບ້ານຊົ່ວຄາວນີ້ສ່ວນມາກປຸກຢູ່ຕາມແຄມນ້ຳ ຫລືແຄມທາງ.

– *ການໃຫ້ ທີ່ພັກພາອາໄສ ແລະ ອາຊີບຢ່າງຖາວອນ :* ເພື່ອໃຫ້ພວກອົພຍົບ ມີຖານະການເປັນຢູ່ຢ່າງໝັ້ນໝາຖາວອນ ຄື ມີອາຊີບສາມາດລ້ຽງຕົນເອງກຸ້ມ ທັງມີສ່ວນໃນການພັທນາ ເສຖກິດຂອງຊາດ ຣັຖບານຈຶ່ງໄດ້ສຶກສາວາງແຜນຜັງ ສ້າງບ້ານຖາວອນໃຫ້ – ຕາມຫລັກການສ້າງບ້ານຖາວອນນັ້ນ ຣັຖບານຈັດໃຫ້ມີບ້ານເຮືອນເປັນຖັນແຖວ ມີເນື້ອທີ່ທຳມາຫາກິນຢ່າງພຽງພໍ ມີທັງເຄຫະສະຖານ ອັນເປັນສາທາຣະນະປະໂຍດ ເຊັ່ນ : ຖນົນ, ທົນທາງ, ເໝືອງ, ຝາຍ ເປັນຕົ້ນ.

ພາຣະໜ້າທີ່ ຄວາມຮັບຜິດຊອບ ໃນການແກ້ບັນຫາພວກອົພຍົບຫລົບໄພຍ໌ ດັ່ງກ່າວແລ້ວ ເທົ່າທີ່ປະຕິບັດມາ ຣັຖບານໄດ້ຊ່ວຍເຫລືອ ພວກອົພຍົບຫລົບໄພຍ໌ນັບແຕ່ໄດ້ຈາກບ້ານເກີດມາ ມີ :

໑. ເຂົ້າ – ຜູ້ໃຫຍ່ ໔໐໐ ກຣາມ, ຜູ້ນ້ອຍ ໒໔໐ ກຣາມ ຕໍ່ວັນ ຕລອດເວລາ ທີ່ຍັງບໍ່ສາມາດລ້ຽງຕົນເອງ.

໒. ໃຫ້ເຄື່ອງນຸ່ງຫົ່ມ, ເສື້ອ, ສິ້ນ, ສົ້ງ, ຜ້າຫົ່ມ, ມຸ້ງ, ສຳລັບຜູ້ທີ່ຂາດເຂີນ.

໓. ໃຫ້ເຄື່ອງນຸ່ງ, ແລະ ເຄື່ອງອຸປະກອນອື່ນ ໆ ເທົ່າທີ່ມີ ສຳລັບສ້າງບ້ານ ແປງເຮືອນ.

໔. ໃຫ້ເຄື່ອງມື ສຳລັບສ້າງເຮືອນ ແລະ ເຄື່ອງມື ສຳລັບເຮັດໄຮ່, ເຮັດສວນ ແລ້ວແຕ່ເຫັນສົມຄວນ.

໕. ໃຫ້ເຄື່ອງປູກແນວເຂົ້າ, ແນວຜັກ ແລະ ເຄື່ອງປູກຊນິດຕ່າງ ໆ ຕລອດຝຸ່ນວິທຍາສາດ ແລະຢາຂ້າແມງໄມ້, ຂ້າບົ້ງ ທີ່ເຫັນວ່າຈຳເປັນ.

໖. ໃຫ້ການພະຍາບານ ແລະ ປຸກຢາ ແກ່ຜູ້ເຈັບໄຂ້ ໄດ້ພະຍາດ.

ສ່ວນຜູ້ອົພຍົບຫລົບໄພຍ໌ເອງນັ້ນ ມີໜ້າທີ່ອອກເຫື່ອເຫແຮງ ຢ່າງສຸດຄວາມສາມາດເພື່ອປຸກບ້ານແປງເຮືອນ ເຮັດໄຮ່ ເຮັດສວນ ແລະ ໃຫ້ຄວາມຮ່ວມໄມ້ຮ່ວມມືກັບເພື່ອນອົພຍົບດ້ວຍກັນ ເພື່ອໃຫ້ຊີວິດໃໝ່ ໄດ້ເປັນໄປຢ່າງສະດວກ ຈົນສຸດຄວາມສາມາດຂອງໃຜລາວ.

ພວກອົພຍົບຖືວ່າ *ເປັນຜູ້ປະສົບໄພຍ໌ສົງຄາມ* ນອກຈາກການຊ່ວຍເຫລືອດັ່ງກ່າວແລ້ວຣັຖບານຍັງຈັດໃຫ້ມີ *ໂຮງລ້ຽງເດັກກຳພ້າ* ເພື່ອຮັບຕ້ອນ ເດັກນ້ອຍຍິງຊາຍ ທີ່ພັດພາກຈາກພໍ່ແມ່ ຢູ່ໃນຄວາມດູແລຂອງກະຊວງປະຊາສົງເຄາະຫ໌ ໃນປັດຈຸບັນນີ້ມີ ໑໖໔ ຄົນ.

ສຳລັບພວກເດັກຍິງ ຊຶ່ງເປັນລູກພວກອົພຍົບຫລົບໄພຍ໌ ທີ່ບໍ່ມີອາຊີບ ຣັຖບານ ແລະສະມາຄົມຕ່າງ ໆ ຍັງໄດ້ສ້າງໂຮງຮຽນການເຮືອນໃຫ້.

ຂ້າພະເຈົ້າ ຂໍເຕືອນໃຫ້ຊາບວ່າ ການທົດແທນຄ່າເສັຽຫາຍສົງຄາມ ( **Dommage de Guerre** ຍັງບໍ່ມີ ເພາະວ່າ ສົງຄາມປັດຈຸບັນນີ້ ເປັນສົງຄາມທີ່ບໍ່ໄດ້ປະກາດແຕ່ເຖິງຢ່າງໃດກໍດີ ຣັຖບານຍັງໄດ້ກຳພົດໃຫ້ການຊ່ວຍເຫລືອ ແກ່ຜູ້ທີ່ໄດ້ຮັບຄວາມເສັຽຫາຍ ຕາມເງື່ອນໄຂທີ່ໄດ້ບົ່ງໄວ້ ໃນພຣະຣາຊອົງການ ເລຂທີ່ ໓໔໕ ລົງວັນທີ່ ໗/໙/໗໐ ຄື: ສຳລັບຜູ້ເສັຽຫາຍສິ່ງຂອງ ຣັຖບານໃຫ້ການຊ່ວຍເຫລືອ ໙.໐໐໐ ກີບ ສຳລັບຜູ້ເສັຽຊີວິດ ຣັຖບານໃຫ້ການຊ່ວຍເຫລືອ ເພື່ອນ້ອມຽມຄາບສົ່ງສະການ ໑໕.໐໐໐ ກີບ.

## *ງົບປະມານ ເພື່ອຊ່ວຍເຫລືອພວກອົພຍົບຫລົບໄພຍ໌ໄດ້ມາຈາກ :*

### *໑. ງົບປະມານແຫ່ງຊາດ :*

ກະຊວງມີງົບປະມານສຳລັບໃຊ້ຈ່າຍໃນກິຈການຂອງກະຊວງ :

– ສົກ ໑໙໖໙ – ໗໐ : ໖໗.໓໙໘.໐໐໐ ກີບ.

– ສົກ ໑໙໗໐ – ໗໑ : ໘໙.໑໓໘.໐໐໐ ກີບ.

– ນອກຈາກນີ້ຍັງມີຣາຍໄດ້ຂອງຄນະກັມການຊ່ວຍເຫລືອຜູ້ປະສົບໄພສົງຄາມ ນັບແຕ່ປີ ໑໙໖໘ ເປັນຕົ້ນມາ ເປັນເງິນ ໖໐.໑໓໗.໑໙໖ ກີບ.

### *໒. ການຊ່ວຍເຫລືອຈາກມິດປະເທດ :*

#### *ກ. ຈາກອົງການຊ່ວຍເຫລືອ ເພື່ອພັທນາຣະຫວ່າງປະເທດ* **US/AID**

– ສົກ ໑໙໖໙ – ໗໐ : ໕.໓໔໐.໐໐໐ ໂດລາ.

ແລະ ໘໖.໙໔໕.໐໐໐ ກີບ.

ເມື່ອຄິດເປັນເງິນກີບແລ້ວ ຕົກເປັນ : ໒.໗໔໖.໙໔໕.໐໐໐ ກີບ, ໃນຈຳນວນນີ້ບໍ່ໄດ້ຄິດຄ່າຂົນສົ່ງທາງເຄື່ອງບິນ, ເພື່ອໄປຖີ້ມເຂົ້າໃຫ້ພວກອົພຍົບຫລົບໄພຍ໌ ຕາມຈຸດຕ່າງ ໆ ຊຶ່ງຕົກຢູ່ໃນຣາວ ໑.໕໐໐.໐໐໐ ໂດລາ ຫລື ໗໕໐.໐໐໐.໐໐໐ ກີບ ຣວມທັງໝົດເປັນເງິນ : ໓.໕໐໖.໙໔໕.໐໐໐ ກີບ ຫລືຄິດເປັນ ໂດລາ ໗.໐໑໓.໘໙໐ ໂດລາ.

ຕາມເງື່ອນໄຂທີ່ຮຽກກັນວ່າ ( **Kennedy Round** ) ເງິນຊ່ວຍເຫລືອຈຳນວນນີ້ ແຕ່ກ່ອນຣັຖບານຍີ່ປຸ່ນ ໄດ້ເອົາໃຊ້ຊື້ເຂົ້າຈາກຕ່າງປະເທດຊ່ວຍ – ສຳລັບປີນີ້ແລະໃນປີຕໍ່ ໆ ໄປຣັຖບານທີ່ກ່ຽວຂ້ອງໄດ້ຕົກລົງໃຫ້ຊ່ວຍເຫລືອ ເປັນເຄື່ອງອຸປະກອນ ເພື່ອພັທນາ ໃຫ້ພວກອົພຍົບມີອາຊີບຖາວອນ ເຊັ່ນ : ຊ່ວຍຊື້ຣົຖດຸດ, ຣົຖໄຖ, ເລື່ອຍຈັກ, ໂຮງສີໃຫຍ່, ເຄື່ອງສູບນ້ຳເປັນຕົ້ນ.

## ຂ. ປະເທດໃນແຜນການໂກລົມໂບ (Plan Colombo)

– ປະເທດໄທ (Thailande)

– ປະເທດອັງກິດ (Angleterrc)

– ປະເທດອົສຕຣາລີ (Australie)

– ປະເທດນູແວນເຊລັງ (Nouvelle zélande)

– ປະເທດອິນເດັຽ (Inde)

ຊຶ່ງເປັນປະເທດຂອງແຜນການ ໂກລົມໂບ ກໍໄດ້ໃຫ້ການຊ່ວຍເຫລືອ ເຄື່ອງອຸປະໂພກແລະບໍຣິໂພກ ແກ່ພວກອົພຍົບລາວເຮົາຕລອດມາ.

## ຝ. ການຊ່ວຍເຫລືອຈາກອົງການສົງເຄາະທີ່ຕ່າງປະເທດ :

### ກ. ສະພາກາຊາດສາກົນ :

ໄດ້ໃຫ້ເຄື່ອງນຸ່ງຫົ່ມ, ຢຸກຢາ ທັງເຄື່ອງໃຊ້ເຄື່ອງມືຕ່າງ ໆ ແກ່ພວກອົພຍົບຕລອດມາແຕ່ທາງກະຊວງບໍ່ຊາບເປັນຈຳນວນເງິນ ເພາະອົງການນີ້ ໄດ້ໄປແຈກຢາຍແກ່ພວກອົພຍົບດ້ວຍຕົນເອງ.

### ຂ. ອົງການຊ່ວຍເຫລືອກາໂຕລິກ (Secours Catholique)

ອົງການນີ້ ໄດ້ນຳເຄື່ອງບໍຣິໂພກ (ເຂົ້າແປ້ງ, ນົມຝຸ່ນ, ແປ້ງເຂົ້າເບລ, ແປ້ງສາລີ............) ຈາກສະຫະຣັຖອະເມຣິກາ ມາຊ່ວຍໃຫ້ທຸກ ໆ ປີ ເປັນຈຳນວນຫລາຍຮ້ອຍ (໕໐໐ ເຖິງ ໑.໐໐໐ ຕອນ) ຕໍ່ປີ.

### ຄ. ຄນະກັມມະການຕໍ່ຕ້ານຄວາມອຶດຢາກຂອງຝຣັ່ງເສດ :

ຄນະກັມມະການໄດ້ສົ່ງມ້າມົນປ່ອງ, ຢາປົວພະຍາດ, ສັງກະສີ ແລະ ເຄື່ອງອຸປະກອນການປູກຝັງ ເຊັ່ນ : ຣົຖດຸດ, ຣົຖໄຖ ຄິດເປັນເງິນພັນກວ່າລ້ານກີບ ໃຫ້ແກ່ຣັຖບານ ເພື່ອຊ່ວຍເຫລືອພວກອົພຍົບ ການຊ່ວຍເຫລືອທັງນວນດັ່ງກ່າວ ໄດ້ມາຈາກຄວາມເຫັນໃຈ ແລະ ການເສັຽສລະຂອງປະຊາຊົນຊາວຝຣັ່ງເສດທັງປະເທດ.

ນອກຈາກນີ້ ຍັງມີອົງການສາສນາຫລາຍອົງການ ຊຶ່ງໄດ້ເຂົ້າມາຕິດຕໍ່ ໃຫ້ການຊ່ວຍເຫລືອແກ່ຜູ້ປະສົບໄພຍ໌ສົງຄາມໃນລາວ-ອົງການສາສນາດັ່ງກ່າວ ຄື : ອົງການສຸພະນິມິດ (World vision)

ອົງການກຣິສຕຽນເອເຊັຽຕາວັນອອກ (Asian Christian Service of East Asia Conference) ມູນນິທິເອເຊັຽ (Asia foundation) ກໍໄດ້ໃຫ້ການຊ່ວຍເຫລືອດ້ານອົບຮົມແລະ ມູນນິທິດູລີ (Dooley Foundation) ໄດ້ໃຫ້ການຊ່ວຍເຫລືອຢຸກຢາ ແລະ ຮັກສາພະຍາບານຄົນເຈັບ.

ການຊ່ວຍເຫລືອດັ່ງກ່າວແລ້ວ ເປັນການຊ່ວຍເຫລືອດ່ວນ, ເພື່ອໃຫ້ພວກອົພຍົບຫລົບໄພຍ໌ ມີທີ່ພັກພາອາໄສ ແລະ ມີອາຊີບຢ່າງແໜ້ນໜາຖາວອນ ຣັຖບານໄດ້ມີໂຄງການສ້າງບ້ານໃໝ່ໃຫ້ພວກອົພຍົບ.

*ຫລັກການສ້າງບ້ານໃຫມ່ :* ການສ້າງບ້ານໃໝ່ ເປັນຂອງ *ຈຳເປັນດ້ານສັງຄົມ* ເມື່ອມີຄົນຕ້ອງມີບ້ານ ມີເຮືອນໃຫ້ຢູ່ ເປັນທີ່ພັກພາອາໄສ — ແຕ່ການສ້າງບ້ານໃໝ່ ຍັງເປັນຊ່ອງທາງວິຖີນຶ່ງ ເພື່ອສົ່ງເສີມການພັທນາ ດ້ານສັງຄົມ ແລະ ເສຖກິດ — ທ່ານຄົງຊາບດີແລ້ວວ່າບ້ານໃໝ່ໃນ *ອິສຣາແອລ, ອິນເດັຽ, ປາກິສຖານ, ພະມ້າ,* ນີ້ຄົນສ້າງຕົນເອງ ໃນ *ໄທຍ໌, ມະລາຍູ, ໄຕ້ຫວັນ, ຟິລິປ ປິນ,* ໄດ້ມີສ່ວນໃນການກ້າວໜ້າ ດ້ານເສຖກິດ ຂອງປະເທດດັ່ງກ່າວແລ້ວຢ່າງຫລວງຫລາຍ.

ທ່ານຊາບດີແລ້ວວ່າ ຕາມຫລັກ ເສຖສາດນັ້ນ ບໍ່ເກີດແຫ່ງສົມບັດ (Les biens) ມີ ມີ ແຫ່ງຄື : *ທັມມະຊາດ* (La Nature) ທຶນ ( Le Capital ) ແລະແຮງງານ (Le Travail)

ສຳລັບສົມບັດຈາກທັມມະຊາດນັ້ນ ບໍ່ມີໃຜປະຕິເສດ (ດິນ, ນ້ຳ, ອາກາດ, ໄຟ, ໂລຫະທາດຕ່າງ ໆ ໄດ້ມາຈາກທັມມະຊາດ) ແຕ່ສ່ວນກ່ຽວກັບ *ທຶນ* ແລະ *ແຮງງານ* ນັ້ນມີຄວາມເຫັນຂັດແຍ່ງກັນ ຈົນພາໃຫ້ໂລກ ແບ່ງອອກເປັນສອງຊີກ ສອງສ່ວນ, ໑ ສ່ວນນຶ່ງຖືວ່າ *ທຶນເງິນເປັນໃຫຍ່* ຖ້າບໍ່ມີທຶນບໍ່ມີເງິນ ເຮັດຫຍັງກໍບໍ່ໄດ້ ດັ່ງທີ່ໄທຍ໌ລາວເຄີຍກ່າວກັນວ່າ "*ຄວາມຄິດມີບໍ່ແພ້ ເງິນຄ້ຳຫາກບໍ່ມີ*" ຫລື "*ຄວາມຮູ້ຖ້ວມຫົວ ເອົາຕົວບໍ່ລອດ*" ເພາະບໍ່ມີເງິນ ດຽວນີ້ບໍ່ເປັນດັ່ງວ່າ ຖ້າມີປັນຍາຄວາມຮູ້ ມີການສຶກສາ ຄົ້ນຄວ້າ ແຜນຜັງທີ່ຖືກຕ້ອງແລ້ວ *ເງິນບໍ່ອັບ* "*ເງິນເຕັມພາ ບໍ່ທໍ່ພຍາເຕັມປູ່ມ*"

໔. *ພວກຫນຶ່ງວ່າແຮງງານເປັນໃຫຍ່* ແຮງງານ ເປັນບໍ່ເກີດ ແຫ່ງສົມບັດທັງປວງ ເຄື່ອງມື, ເຄື່ອງຈັກ, ເຄື່ອງອຸປະກອນ ການສ້າງສາທຸກຊນິດ ຕລອດເຖິງເງິນດ້ວຍ *ງານຄືເງິນ* ບໍ່ມີງານ ບໍ່ມີເງິນ.

ແຕ່ຄວາມຂັດແຍ່ງດັ່ງກ່າວ ເຫັນວ່າບໍ່ເຂົ້າເຣື່ອງ ມັນເປັນການຂັດແຍ່ງແບບດຽວທຳນອງ ດຽວກັນກັບ ຮ້ອນດີກວ່າເຢັນ ເຢັນດີກວ່າຮ້ອນ ຍິງດີກວ່າຊາຍ ຊາຍດີກວ່າຍິງ ໄຂ່ເກີດກ່ອນໄກ່ ໄກ່ເກີດກ່ອນໄຂ່ !....

ສຳລັບເຮົາ ສຳລັບການສ້າງບ້ານໃໝ່ ໃຫ້ພວກອົພຍົບຫລົບໄພຍ໌ ເຮົາບໍ່ໄດ້ເອົາບັນຫາດັ່ງກ່າວ ມາຫຍຸ້ງກ່ຽວ ເຮົາຕ້ອງການທຸກຢ່າງ ເຮົາຕ້ອງການທັງ *ທຶນ* ທັງ *ແຮງງານ* ເຮົາຕ້ອງການທັງຄວາມຄິດ ແລະ ເງິນຄຳ ແຕ່ກ່ອນອື່ນໝົດ ເຮົາຕ້ອງການຄວາມສາມັຄຄີ ປະສານງານຣະຫວ່າງ ສະມາຊິກທຸກຄົນ ຂອງບ້ານໃໝ່ (*ສັພເພສັງ ສັງຄະພູຕານັງ ສາມັຄຄີ ວຸທທິສາທິກາ* ຄວາມສາມັຄຄີ ມີຢູ່ທີ່ໃດ ຄວາມສຳເຣັຈຍ່ອມມີຢູ່ທີ່ນັ້ນ) ຄວາມສາມັຄຄີຮ່ວມມືກັນແບບໃໝ່ ຕາມຫລັກສັງຄົມເສຖກິດ ເພີ້ນເອີ້ນວ່າ *ສະຫະກອນ* ຣັຖບານປາຖນາໃຫ້ບ້ານອົພຍົບທຸກ ໆ ບ້ານເປັນບ້ານສະຫະກອນ ສະຫະກອນ ການເງິນ....

ເພິ່ນຄາດຄະເນກັນວ່າ ໂລກໃນອະນາຄົດ ຈະບໍ່ແມ່ນ ໂລກນາຍທຶນ (Capitaliste) ຈະບໍ່ແມ່ນໂລກ ສັງຄົມນິຍົມ (Communiste) ເປັນໂລກ ສະຫະກອນ (Cooperativiste) ແລະ ໃນປັດຈຸບັນນີ້ ສະຫະກອນ ຈະເປັນສະພານທອງ ຣະຫວ່າງໂລກທັງສອງຝ່າຍ ທີ່ກຳລັງຈະແຕກແຍກກັນ ເພາະລັທທິ ເສຖກິຈ.

ເພື່ອເປັນຕົວຢ່າງ ຂ້າພະເຈົ້າ ຂໍເລົ່າເຣື່ອງບ້ານອົພຍົບ ໃນອິສຣາແອລ ໃຫ້ທ່ານຟັງຈັກໜ່ອຍ ເພາະບ້ານໃໝ່ ໃນອິສຣາແອລ ເປັນບ້ານ ຊຶ່ງຂ້າພະເຈົ້າປາຖນາຍິ່ງ ສຳລັບເມືອງລາວ:

ທ່ານຄົງຊາບແລ້ວວ່າ ອິສຣາແອລ ໄດ້ກາຍເປັນປະເທດໜຶ່ງ ຫລັງຈາກສົງຄາມໂລກຄັ້ງທີ່ສອງ ໄດ້ເຣີ່ມແຣກ (໑໙໔໘) ປະຊາຊົນໃນອິສຣາແອລ ໗ ແສນກວ່າຄົນ, ເມື່ອມີປະເທດຊາດ ເປັນທີ່ອາໃສແລ້ວ ຄົນເຊື້ອຊາດ ຢິວ ທີ່ແຕກກະຈັດກະຈາຍກັນຢູ່ທຸກມຸມໂລກ ໄດ້ພ້ອມພາກັນໄຫລ່ຫລັ້ງເຂົ້າມາສູ່ປິຕຸພູມເດີມ ເທົ່າເຖິງປັດຈຸບັນນີ້ ຈຳນວນອົພຍົບມີເຖິງລ້ານຫ້າແສນຄົນ ແປວ່າຫລາຍກວ່າປະຊາຊົນຖິ່ນເດີມຕັ້ງສອງເທົ່າ ເພື່ອໃຫ້ມີທີ່ພັກພາພາໃສ ແລະ ໃຫ້ມີຊີວາອາຊີບອັນຖາວອນແກ່ຊາວອົພຍົບ ຈຳນວນຫລວງຫລາຍນັ້ນ ຣັຖບານອິສຣາແອລໄດ້ວາງແຜນການຕັ້ງບ້ານໃໝ່ ຊຶ່ງເປັນການທີ່ຍິ່ງໃຫຍ່ທີ່ສຸດ ແລະ ເຫັນວ່າໄດ້ຜົລດີທີ່ສຸດໃນໂລກ ຈົນຫລາຍ ໆ ປະເທດ ທັງປະເທດທີ່ພັທນາແລ້ວ

ແລະຍັງກຳລັງພັທນາຢູ່ ກໍພາກັນໄປສຶກສາໄປນຳເອົາແບບຢ່າງ ແລະນຳມາໃຊ້ໃນແຜນການພັທນາ ສັງຄົມເສຖກິດຂອງຕົນ ຕາມທີ່ໄດ້ສັງເກດເຫັນມາບ້ານໃໝ່ທີ່ສ້າງຂຶ້ນ ໃນອິສຣາແອລ ມີ ໔ ປະເພດດ້ວຍກັນ.

*ບ້ານປະເພດທີ່ໜຶ່ງ :* ໄດ້ແກ່ບ້ານ ໂມຊາຊາ (Moshava) ເປັນບ້ານເໝືອນກັບບ້ານທັງຫລາຍ ພວກເຮົາແຕ່ລະຄອບຄົວ ກໍມີທີ່ດິນ ສຳລັບປູກຝັງ ມີບ້ານ ມີເຮືອນ ມີຢູ່ ມີກິນ ສເພາະໃຜມັນ ແຕ່ວ່າ ສະມາຊິກໃນບ້ານ ໂມຊາວ (Moshava) ຮວມກັນເຂົ້າເປັນສະຫະກອນ ເພື່ອຂາຍເຄື່ອງປູກຂອງຝັງຕ່າງ ໆ ຈະວ່າເປັນບ້ານ ສະຫະກອນ ສະເພາະແຕ່ການຂາຍກໍວ່າໄດ້ :

*ບ້ານປະເພດທີ່ສອງ :* ຮຽກຊື່ວ່າ ໂມຊາວ (Moshav) ບ້ານດັ່ງກ່າວ ເປັນບ້ານທີ່ມີແຜນຜັງ ທຸກຄອບຄົວມີບ້ານ ມີເຮືອນ ມີດິນສຳລັບປູກຝັງ ແລະຊີວິດການເປັນຢູ່ສະເພາະໃນຄອບຄົວ ເໝືອນໃນຄອບຄົວທັງຫລາຍ ແຕ່ການຊື້ເຄື່ອງປູກຂອງຝັງຕລອດເຄື່ອງອຸປະໂພກ ບໍຣິໂພກ ແລະການຂາຍເຄື່ອງປູກ ທີ່ມີຢູ່ໃນບ້ານຕ້ອງເປັນໄປຕາມແບບ ສະຫະກອນ ບ້ານໂມເຊົາໂອດິນ (Moshav Odin) ຍັງມີການເຄັ່ງຄັດ ຫ້າມບໍ່ໃຫ້ຈ້າງກັມກອນພາຍນອກ ມາທຳການຢູ່ພາຍໃນບ້ານ ທຸກຄົນຕ້ອງຜລິດ ທຳງານດ້ວຍຕົນເອງ ຫາກບໍ່ສາມາດທຳໄດ້ ເພາະເຈັບໄຂ້ໄດ້ພະຍາດ ສະມາຊິກໃນບ້ານ ມີໜ້າທີ່ຊ່ວຍເຮັດຊ່ວຍທຳ ໂດຍບໍ່ມີຄ່າຈ້າງຣາງວັລຫຍັງ.

ບ້ານປະເພດທີ່ສອງນີ້ ເປັນບ້ານ ສະຫະກອນ *ທັງຊື້ ແລະ ຂາຍ.*

*ບ້ານປະເພດທີ່ສາມ :* ຮຽກວ່າ (Moshav Shitoufi) ບ້ານປະເພດນີ້ກໍເປັນບ້ານທີ່ມີແຜນຜັງ ທຸກຄອບຄົວ ມີເຮືອນ ຢູ່ໂດຍສະເພາະ ແລະ ມີການຢູ່ກິນໃນຄອບຄົວ ແຕ່ວ່າທີ່ດິນເຄື່ອງໄມ້, ເຄື່ອງມື, ເຄື່ອງປູກຂອງຝັງແລະ ສົມບັດທຸກຢ່າງໃນບ້ານ ເພື່ອການຜລິດຜົລເປັນຂອງສ່ວນຮວມຕລອດທັງການຊື້ ແລະ ການຂາຍ ຈະຮຽກວ່າເປັນບ້ານ ແບບປະສົມກໍວ່າໄດ້ສົມບັດທັງມວນເປັນສ່ວນຮວມ ການຢູ່ກິນ ເປັນສ່ວນຄອບຄົວ.

*ບ້ານປະເພດທີ່ສີ່ :* ຮຽກວ່າ (KibbouTz) ບ້ານຊະນິດນີ້ ເປັນບ້ານສັງຄົມເປັນບ້ານສ່ວນຮວມ ສົມບັດທຸກຢ່າງ ເປັນຂອງສ່ວນຮວມ ທີ່ດິນ ເຄຫະສະຖານ ບ້ານເຮືອນ, ໂຮງງານອຸສາຫະກັມ, ຣົຖດຸດ, ຣົຖໄຖ, ສັດພາຫະນະທຸກຊະນິດ ເປັນສົມບັດສ່ວນຮວມ ມີຄນະກັມການ ທີ່ຖືກເລືອກຕັ້ງເອົາ ມີໜ້າທີ່ປົກຄອງຮັກສາ ທວງແທນແລະຊື້ຂາຍ ສ່ວນສະມາຊິກອື່ນ ໆ ມີໜ້າທີ່ປະຕິບັດ

ຕາມຄຳສັ່ງ ຢູ່ກິນຕາມຣະບຽບທີ່ວາງໄວ້ການຢູ່ນັ້ນສຳລັບເດັກນ້ອຍ ແຕ່ເກີດມາມີຜູ້ກຳກັບລ້ຽງດູ ຢູ່ກິນຮຽນນຳກັນຈົນໃຫຍ່ ມີແຕ່ການຢູ່ທີ່ນັ້ນ ທີ່ຢູ່ກັນເປັນຄອບຄົວ ສ່ວນການກິນ ກໍຮ່ວມກິນອາຫານຢ່າງດຽວກັນ ເມື່ອສະມາຊິກຄົນໃດ ພີຈາກບ້ານໄປກໍບໍ່ມີສິດເອົາສົມບັດຊິ້ນໜຶ່ງສິ່ງໃດໄປນຳໄດ້ ບ້ານແບບນີ້ເຂົາເອີ້ນວ່າເປັນບ້ານ "ສັງຄົມ ປາສະຈາກເງິນ" ເຊັ່ນດຽວກັນກັບ ວັດຂອງເຮົາ.

*ແຜນການສ້າງບ້ານໃໝ່ :* ຂອງອິສຣາແອລ ໄດ້ຜົນດີທີ່ສຸດ ໄດ້ພາໃຫ້ອິສຣາແອລມີການກ້າວໜ້າຢ່າງໄວ ທັງໃນດ້ານເສຖກິດ ແລະສັງຄົມ ເພາະຫລັກການພັທນາຂອງອິສຣາແອລນັ້ນ ຍຶດຖືເອົາຫລັກເສຣີພາບເປັນໃຫຍ່ ຣັຖບານໄດ້ອຳນວຍຄວາມສດວກ ໃຫ້ດິນໃຫ້ທຶນແກ່ປະຊາຊົນທຸກຊຸ້ມ ໃຫ້ມີໂອກາດພັທນາສ້າງສາ ຕາມຄວາມຊອບໃຈ ຂອງໃຜມັນ ຈະພັທນາແບບບ້ານສະຫະກອນ ແບບບ້ານສັງຄົມຫລືເຄິ່ງສະຫະກອນຫລືເຄິ່ງສັງຄົມ ກໍແລ້ວແຕ່ຄວາມຊອບໃຈ ຂອງໃຜມັນ ບໍ່ມີການບີບເຕັງຂົ່ມຂູ່ ໃຫ້ພັທນາ ຕາມລັດທິນັ້ນ ຫລື ລັດທິນີ້ ເອົາຕາມແບບສັງຄົມນິຍົມ ຫລື ນາຍທຶນ.

*ບັນຫາຕ່າງ ໆ ກ່ຽວກັບການຊ່ວຍເຫລືອອົພຍົບ :* ກ່ຽວກັບການຊ່ວຍເຫລືອພວກອົພຍົບຫລົບໄພນີ້ ໄດ້ມີ *ບັນຫາແລະຄວາມກ້າວໜ້າ* ຕ່າງ ໆ ມານາ ເຊັ່ນ:

໑. ຫາວ່າຣັຖບານ ຫລື ກອງທັບໄປບັງຄັບກວດຕ້ອນເອົາ ພວກອົພຍົບຫລົບໄພມາ, ຄວາມຈິງ ຣັຖບານບໍ່ເຄີຍໃຫ້ຄຳສັ່ງໄປກວດຕ້ອນ ເອົາປະຊາຊົນຈາກແຫ່ງໜຶ່ງ ໄປສູ່ແຫ່ງໜຶ່ງຈັກເທື່ອ ການອົພຍົບນີ້ອື່ນ ກໍເພາະສົງຄາມບັງຄັບ ຜູ້ທີ່ທົນທານຕໍ່ຄວາມເດືອດຮ້ອນ ຂອງໄພສົງຄາມບໍ່ໄດ້ ກໍຫາຊ່ອງທາງເອົາຕົວລອດເຂົ້າມາສູ່ບ່ອນປອດໄພ ຣັຖບານມີໜ້າທີ່ ໃຫ້ຄວາມສະດວກແກ່ຜູ້ຫລົບໄພຢ່າງສຸດຄວາມສາມາດ.

໒. ຫາວ່າບ້ານອົພຍົບເປັນຄ້າຍທ້ອນໂຮມ ເພື່ອກັກຂັງຫລືຄຸມຂັງ (Camps de Concentration) ຫລືເປັນບ້ານຕໍ່ຕ້ານ ບ້ານຍຸທການ ( Village Stratégique ) ເຣື່ອງນີ້ເພື່ອຊາບຄວາມຈິງຂໍເຊີນທຸກ ໆ ທ່ານທີ່ສົນໃຈ ໃນການເປັນຢູ່ ຂອງພວກອົພຍົບຫລົບໄພ ໄປເບິ່ງທັນທີ

ໃດກໍໄດ້ບ້ານອົພຍົບມີຢູ່ທຸກເຂດແຂວງ ບໍ່ເຄີຍມີພານລອບລ້ອມ ແລະບໍ່ມີຕຳຣວຈ ທະຫານ ຄວບຄຸມ ແລະພວກອົພຍົບຫລົບໄພ ທີ່ບໍ່ເປັນນັກກະສິກອນ ກໍພາກັນຄ້າຂາຍ ຢູ່ຕາມຕົວເມືອງຕ່າງ ໆ ເຊັ່ນ ; ຫລວງພຣະບາງ, ວຽງຈັນທນ໌, ປາກເຊ ເປັນຈຳນວນຫລວງຫລາຍ.

໓. ຫາວ່າຊ່ວຍເຫລືອບໍ່ພໍ ປະໃຫ້ພວກອົພຍົບທ່ຽວຫາຂໍທານ ຕາມບ້ານຕາມເມືອງພາໃຫ້ເປັນທີ່ອັບອາຍ ຂາຍໜ້າກ່ຽວກັບເຣື່ອງນີ້ ຂໍເຕືອນໄວ້ໃຫ້ຊາບວ່າ ການຊ່ວຍເຫລືອນັ້ນ ຈະໃຫ້ພໍກັບຄວາມຢາກຂອງຄົນ ຄົງຈະບໍ່ພໍຈັກເທື່ອ ຣັຖບານ ຊ່ວຍໄດ້ແຕ່ພໍຢູ່ພໍກິນ ຊ່ວຍບໍ່ໃຫ້ຕາຍແຕ່ຢ່າລືມວ່າຄົນຂໍທານສ່ວນຫລາຍ ແມ່ນຊາວອົພຍົບປອມ.

໔. ຫາວ່າ ໃຫ້ຄວາມຊ່ວຍເຫລືອໂພດ ຈົນພາໃຫ້ພວກອົພຍົບກຽດຄ້ານ ພາໃຫ້ຄອຍຖ້າແຕ່ຣັຖບານລ້ຽງ ອັນນີ້ ເປັນແຕ່ພຽງຄວາມຫາການຊ່ວຍເຫລືອ ຂອງຣັຖບານນັ້ນນ້ອຍທີ່ສຸດ ບໍ່ພຽງພໍທີ່ພາໃຫ້ກຽດຄ້ານໄດ້ ຄົນກຽດຄ້ານນັ້ນ ມັນຄ້ານມາແຕ່ກຳເນີດ ຄ້ານເພາະສັນດານ ຄ້ານເພາະພະຍາດບຽດບຽນ.

ບັນຫາ ຫລື ຄຳກ່າວຫາ ກ່ຽວກັບຊາວອົພຍົບມີມາກມາຍຫລາຍ ຂ້າພະເຈົ້າບໍ່ສາມາດທີ່ຈະນຳມາບັນຣະຍາຍໃຫ້ພວກທ່ານຊາບ ຢ່າງຄົບຖ້ວນ ຈຶ່ງຂໍຢຸດຕິໄວ້ພຽງເທົ່ານີ້. ດັ່ງໄດ້ກ່າວມາແລ້ວ ບັນຫາອົພຍົບ ເປັນບັນຫາອັນສຳຄັນຍິ່ງ ເພາະກ່ຽວກັບຖານະການເປັນຢູ່ ຂອງປະຊາຊົນຊາວລາວຈຳນວນຍ່ອນລ້ານຄົນ ບັນຫາອັນຍິ່ງໃຫຍ່ນີ້ ຈະແກ້ໄຂໄດ້ກໍພຽງແຕ່ທຸເລົາເທົ່ານັ້ນ ການອົພຍົບ ເນື່ອງມາຈາກສົງຄາມການແກ້ບັນຫາ ຕົ້ນຕໍແບບຖອນຮາກນັ້ນ ກໍຄົງມີແຕ່ວິທີດຽວ ຄື ຍຸຕິສົງຄາມ ເມື່ອໃດມີຄວາມສງົບແລ້ວ ເມື່ອໃດປະຊາຊົນຝັກໄຝ່ ຖືກຕ້ອງປອງດອງກັນແລ້ວ ບັນຫາອົພຍົບກໍຄົງຈະຕົກໄປເອງ ແລະແທນທີ່ຈະເປັນປາກ ເປັນທ້ອງ ໃຫ້ລ້ຽງປະຊາຊົນຊາວອົພຍົບທັງຫລາຍ ກໍຈະກາຍເປັນກຳລັງ ເປັນທຶນ ເປັນແຮງ ເພື່ອສ້າງສາພັທນາ ປະເທດຊາດໃຫ້ກ້າວໜ້າ ແລະຮຸ່ງເຮືອງຕລອດໄປ.

# ກິຈການຂອງກົມບໍຣິການສັງຄົມ

*ໂດຍ ນາງສາວ ສຸນທອນ ພິລາວັນ ອະທິບໍດີກົມບໍຣິການສັງຄົມ*

## *ຄວາມເປັນມາຂອງການປະຊາສົງເຄາະທ໌:*

ເນື່ອງຈາກຄົນເຮົາທີ່ເກີດມາໃນໂລກນີ້ ທຸກຄົນຈະຕ້ອງໄດ້ຮັບການປະຈົນໄພກັບສິ່ງທັມມະຊາດຕ່າງ ໆ ສຸດແລ້ວແຕ່ຂອງໃຜລາວ ແລະກໍອາດຈະບໍ່ສາມາດສແວງຫາໃນບັນດາສິ່ງອັນຈຳເປັນຂອງການປະກອບອາຊີບໃຫ້ພຽງພໍ ເໝືອນກັນໄດ້ທຸກ ໆ ຄົນ ເພາະມັນເປັນຄວາມຈິງທີ່ວ່າ ບາງຄົນເກີດມາແລ້ວກໍທຸກຈົນ ເດືອດຮ້ອນ ອັຕະຄັດຂັນສົນ ຂາດແຄນໃນສິ່ງທີ່ຊີວິດຕ້ອງການ ມີເຄື່ອງອຸປໂພກບໍຣິໂພກເປັນຕົ້ນ ບາງຄົນກໍເປັນເດັກກຳພ້າອະນາຖາບໍ່ມີຍາດ ຂາດຜູ້ປົກຄອງເບິ່ງແຍງ ແລະ ຊ່ວຍເຫລືອໃຫ້ຄວາມອົບອຸ່ນ ບາງຄົນກໍມີຮ່າງກາຍບໍ່ສົມປະກອບ ຂາດທີ່ເພິ່ງພາອາໄສ ແລະ ບາງຄົນກໍມີບັນຫາຂັດຂ້ອງ ກ່ຽວກັບການດຳຣົງຊີວິດໃຫ້ໄດ້ຮັບຄວາມຜາສຸກ ຊຶ່ງສຸດຄວາມສາມາດ ທີ່ຈະແກ້ໄຂດ້ວຍຕົນເອງໄດ້ ເຫລົ່ານີ້ເປັນຕົ້ນ.

ດັ່ງນັ້ນຈຶ່ງພາໃຫ້ເກີດບັນຫາສັງຄົມຂຶ້ນ ເພື່ອຊອກຫາວິທີແກ້ໄຂບັນຫາສັງຄົມ ທີ່ມີຄວາມເປັນຢູ່ບໍ່ສເມີພາບກັນນັ້ນໃຫ້ດີຂຶ້ນ ແລະເພື່ອໃຫ້ມວນມະນຸສທຸກຄົນ ມີຣະດັບຄວາມເປັນຢູ່ເທົ່າທຽມກັນ ຈຶ່ງມີຊາວນັກປາດຜູ້ສລາດແລະໃຈບຸນທັງຫລາຍທົ່ວໂລກ ທັງອະດີດແລະປະຈຸບັນ ພາກັນຄົ້ນຄວ້າຊອກຫາຫລັກການແກ້ໄຂກຳຈັດຄວາມຂາດແຄງ ເດືອນຮ້ອນມາ ໆ ປະການ ທີ່ຈະໃຫ້ເພື່ອນມະນຸສມີການເປັນຢູ່ອັນປົກກະຕິ.

ໃນສໄມກ່ອນພຸທກາລ ກໍມີປະເທສຕ່າງ ໆ ທາງຕະວັນຕົກ ເຊັ່ນພວກອິເບີຣ ເຂົາກໍມີຫລັກການໃນດ້ານຊ່ວຍເຫລືອສັງຄົມມະນຸດ ອີງໃສ່ຫລັກຄຳສອນທາງສາສນາຂອງເຂົາເອງໃນສໄມນັ້ນຕ້ອງຊ່ວຍເຫລືອພວກທຸກຈົນ ຂາດທີ່ເພິ່ງພາອາໄສ ດັ່ງນັ້ນຈຶ່ງຕ້ອງມີການເສັຽຊ່ວຍ ຈາກການເກັບກ່ຽວຜົລະປູກເອົາໄວ້ເປັນກອງກາງ ສຳຫລັບອະນຸເຄາະພວກທຸກຈົນ ປະເທດອີຍິບ ຊຶ່ງເປັນປະເທດທີ່ມີຄວາມສີວິໄລກ່ວາໝູ່ໃນຄາວນັ້ນ ເຂົາກໍມີການຊ່ວຍເຫລືອອີງໃສ່ຫລັກສາສນາເໝືອນກັນ ຊຶ່ງບົ່ງໄວ້ວ່າ ບໍ່ຄວນຈະບັງຄັບຂົ່ມເຫັງ ໃຊ້ອຳນາດອິດທິພົນພີບເຕັງປະຊາຊົນ ເອົາມາເປັນທາດ ໝົດທຸກຄົນ

ຕ້ອງມີວຽກເຮັດເພື່ອອາຊີບຂອງຕົນ ເວັ້ນເສັຍແຕ່ຄົນແກ່ຊະຣາການ ຄົນອັງຄະບໍ່ສົມປະກອບ ແລະ ເດັກນ້ອຍ ທີ່ຄວນຈະໄດ້ຮັບການດູແລ ແລະຊ່ວຍເຫລືອເປັນພິເສດ ປະເທດກຣີກກໍ່ເຊັ່ນດຽວກັນ ການຊ່ວຍເຫລືອເຣີ່ມຂຶ້ນຄັ້ງແຣກ ແມ່ນຊ່ວຍເຫລືອພວກທີ່ຖືກເສິກສົງຄາມຣຸກຮານ ເຮັດໃຫ້ປະຊາຊົນໄດ້ຮັບຄວາມເດືອດຮ້ອນໃນການເປັນຢູ່ຂອງຊີວິດ ຊ່ວຍເດັກກຳພ້າທີ່ພໍ່ແມ່ເສັຍຊີວິດໃນສນາມຣົບ ແລະ ພວກບາດເຈັບເປັນຕົ້ນ ແລະ ປະເທດຝຣັ່ງເສສ ເຂົາກໍ່ມີຫລັກການຊ່ວຍເຫລືອໄປໃນທຳນອງທີ່ວ່າ ເຮົາຕ້ອງຮັກຜູ້ອື່ນເທົ່າກັບເຮົາຮັກຕົວເຮົາເອງ.

ຕໍ່ມາເຖິງສໄມປະຈຸບັນນີ້ ການປ່ຽນແປງຂອງສັງຄົມ ກໍໄດ້ວິວັດທະນາການມາຕາມລຳດັບ ເພື່ອໃຫ້ທັນກັບໂລກມະນຸດທີ່ຈເຣີນແລ້ວ ທັງໃນດ້ານເສຖກິຈ ແລະ ສັງຄົມທາງຈິດໃຈ ການຊ່ວຍເຫລືອສັງຄົມມະນຸດນັ້ນ ນອກຈາກຈະເປັນພາຣະຂອງເອກຊົນເໝືອນສໄມກ່ອນແລ້ວ ຍັງຕົກເປັນໜ້າທີ່ຂອງຣັຖບານ ແຕ່ວິທີການຊ່ວຍເຫລືອນັ້ນ ຍ່ອມປະຕິບັດແຕກຕ່າງກັນໄປ ສຸດແລ້ວແຕ່ຄວາມຈຳເປັນ ແລະເໝາະສົມກັບສພາບແວດລ້ອມ ປະເທສນຶ່ງໆ ອາດຈະດຳເນີນກິຈການໜັກໄປໃນດ້ານສັງຄົມສົງເຄາະຢ່າງໃດຢ່າງນຶ່ງກໍໄດ້ ເຊັ່ນ ປະເທດສຫະຣັຖອະເມຣິກາ ເນື່ອງຈາກປະເທດນີ້ມີຄວາມຈເຣີນໃນດ້ານອຸດສາຫະກັມ ການປ່ຽນແປງຂອງສັງຄົມເຮັດໃຫ້ມີຄວາມຈຳເປັນໃນດ້ານທີ່ ຈະຊ່ວຍເຫລືອໜັກໄປໃນທາງດ້ານຈິດໃຈໃຫ້ຫລາຍຂຶ້ນ ແຕ່ກົງກັນຂ້າມປະເທດໃດທີ່ລ້າຫລັງ ທາງເສຖກິຈ ຣັຖບານຂອງປະເທດນັ້ນໆ ຈະຕ້ອງຊ່ວຍເຫລືອໜັກໄປໃນທາງທີ່ຈະໃຫ້ປະຊາຊົນມີການເປັນຢູ່ຢ່າງຜາສຸກ ແລະ ສວັດດີພາບຢ່າງເສຣີ ຕລອດຈົນຣັຖບານຈະຕ້ອງພຍາຍາມສົ່ງເສີມໃຫ້ປະຊາຊົນໄດ້ໃຊ້ສມັດຖະພາບຢ່າງດີຂອງຕົນ ເພື່ອປະກອບການງານໃຫ້ເປັນປະໂຍດແກ່ຕົວເອງ ແລະ ປະເທດຊາດ.

ດັ່ງນັ້ນການສົງເຄາະຂອງຣັຖບານ ແຕ່ລະປະເທດທົ່ວໂລກ ຈຶ່ງໄດ້ວາງຫລັກການໄວ້ສອງຢ່າງຄື.

໑. ການປະກັນສັງຄົມຫລືການບັງຄັບໃຫ້ປະຊາຊົນ ປະກັນຣາຍໄດ້ຣັຖບານ

໒. ສາທາຣະນູປະການ ຫລື ການໃຫ້ຄວາມຊ່ວຍເຫລືອປະຊາຊົນໂດຍທົ່ວໄປ

໑. ການປະກັນສັງຄົມ ຫລື ວິທີການບັງຄັບໃຫ້ປະຊາຊົນມີປະກັນຕໍ່ຣັຖບານນັ້ນ ເປັນຫລັກການທີ່ນຳມາໃຊ້ ເພື່ອແກ້ໄຂອັນຕຣາຍຈາກຄວາມບໍ່ໝັ້ນຄົງ ໃນພາວະຂອງມະນຸດ ເຊັ່ນ ຄວາມ

ແກ່ຊຣາ ຄວາມເຈັບໄຂ້ໄດ້ປ່ວຍ ການບໍ່ມີວຽກເຮັດ ຫລື ຄວາມຕາຍ ຫລັກການນີ້ມັກໃຊ້ຢູ່ໃນປະເທດ ທີ່ມີອຸດສາຫະກັມຈເຣີນແລ້ວ ເພື່ອຊ່ວຍເຫລືອລູກຈ້າງ ຕາມຫ້າງຮ້ານຄ້າຕ່າງໆ ຫລືກັມະກອນຕາມໂຮງງານໃຫ້ໄດ້ຮັບເງິນທົດແທນໃນຍາມແກ່ຊຣາ ຫລື ໃນກໍຣະນີທີ່ບໍ່ມີວຽກເຮັດ ເຈັບໄຂ້ ປະສົບອຸບັດເຫດ ເມື່ອຕາຍລົງ ຄອບຄົວຈະບໍ່ໄດ້ຮັບຄວາມລຳບາກ ການທີ່ປະຕິບັດຕາມຫລັກການເຊັ່ນນີ້ ໄດ້ຊື່ວ່າ "ການປະກັນສັງຄົມ" ຕາມຫລັກປະກັນໄພນີ້ ເປັນຫລັກການປະຊາສົງເຄາະ ຢ່າງໃໝ່ ນິຍົມໃຊ້ກັນແຕ່ປະເທດໃຫຍ່ ທີ່ມີອຸດສາຫະກັມດີແລ້ວ ເຊັ່ນ ປະເທດສະຫະຣັຖອະເມຣິກາ ອັງກິດ ແລະມີບາງປະເທດໃນຢູໂຣບ ອະເມຣິກາໃຕ້ເປັນຕົ້ນ ຊຶ່ງພົລເມືອງສ່ວນຫລາຍມີຣາຍໄດ້ປະຈຳເປັນເງິນເດືອນ ເຖິງວ່າ ປະເທດເຫລົ່ານີ້ມີການປະກັນສັງຄົມແລ້ວ ກໍຍັງຈຳເປັນຕ້ອງໄດ້ໃຊ້ຄູ່ກັນໄປ ກັບການສາທາຣະນຸປະການຢູ່.

໘. ສາທາຣະນູປະການ ຫລື ການທີ່ຣັຖບານໃຫ້ການຊ່ວຍເຫລືອ ສົງເຄາະປະຊາຊົນໂດຍວິທີຕ່າງໆ ເພື່ອສນອງຄວາມຕ້ອງການຂອງປະຊາຊົນ ເພື່ອຄວາມສົມບູນພູນສຸຂ ແລະ ສວັດດີພາບຂອງພົລເມືອງ ວິທີການຊ່ວຍເຫລືອສົງເຄາະປະຊາຊົນນັ້ນ ອາດຊ່ວຍໃນການໃຫ້ເງິນ ການໃຫ້ສິ່ງຂອງ ແລະການບໍຣິການທັງສາມວິທີນີ້ ເປັນການຊ່ວຍເຫລືອປະຊາຊົນຕາມຄວາມຈຳເປັນ ເປັນວິທີກຳລັງໄດ້ຮັບຄວາມນິຍົມ ແລະແຜ່ຫລາຍຢູ່ໃນຕ່າງປະເທດໃນປະຈຸບັນນີ້ ສຳຫລັບຣາຊອານາຈັກລາວປັຈຈຸບັນນີ້ກຳລັງໄດ້ປະຕິບັດ ຊ່ວຍເຫລືອປະຊາຊົນໄປໃນທຳນອງດຽວກັນນີ້ ເງິນເປັນສິ່ງສຳຄັນ ເພື່ອໃຊ້ຈ່າຍສນອງຄວາມຕ້ອງການຂອງຕົນເອງໄດ້ ຕາມລຳພັງໃຈ ດັ່ງນັ້ນການຊ່ວຍເຫລືອເງິນ ຈຶ່ງເປັນມາຕະຖານໃນການຊ່ວຍເຫລືອໄດ້ດີຍິ່ງກວ່າສິ່ງຂອງ ຫລືສິ່ງອື່ນໆ ການໃຫ້ສິ່ງຂອງ ມີເຄື່ອງອຸປະໂພຄບໍຣິໂພຄຕ່າງໆ ກໍສຳຄັນເຊັ່ນດຽວກັນ ເພາະເປັນຄວາມຈິງທີ່ວ່າ ເຖິງຈະບໍ່ມີເງິນຈັບຈ່າຍ ແຕ່ມີເຄື່ອງນຸ່ງຫົ່ມ ມີເຂົ້າກິນ ມີອາຫານ ແລະ ມີເຮືອນຢູ່ແທ້ວ ຊີວິດກໍນັບວ່າມີຄວາມສຸກໄດ້ ສ່ວນວິທີຊ່ວຍໂດຍການບໍຣິການນັ້ນ ມີຂອບເຂດ ໂດຍກວ້າງຂວາງນັບຕັ້ງແຕ່ການຊ່ວຍຕິດຕໍ່ ແນະນຳຕລອດຈົນການຈັດຕັ້ງສຖານສົງເຄາະຕ່າງໆ ຂຶ້ນ ສຳຫລັບບຸກຄົນບາງປະເພດ.

*ການບັນເທົາທຸກ ດ້ານການເງິນ;*

ນອກຈາກການຊ່ວຍເຫລືອດ່ານໃນດ້ານວັດຖຸສິ່ງຂອງທີ່ກ່າວມາແລ້ວນັ້ນ ທາງຣັຖບານຍັງ

ໄດ້ຊອກຫາວິທີແກ້ໄຂຊ່ວຍເຫລືອພວກຖືກເຄາະຮ້າຍທີ່ເສັຍຊີວິດດ້ວຍການປ້ອງກັນປະເທດ ແລະຍ້ອນອັກຄີໄພອຸທະກະໄພ ອາຕະໄພເປັນຕົ້ນ ຊຶ່ງຍັງບໍ່ສາມາດເພິ່ງຕົວເອງໄດ້ນັ້ນ ເປັນເງິນສົດຕາມບົດບັນຍັດເລກທີ່ ໓໐/໒໓–໒–໖໑ ທີ່ໄດ້ປ່ຽນແປງໃນພຣະຣາຊໂອງການເລກທີ່ ໓໒໕ ລົງວັນທີ່ ໗.໙ ໗໐.

ການຊ່ວຍເຫລືອຣາສດອນ ແລະ ພໍ່ບ້ານ ຕາແສງ ທີ່ເສັຍຊີວິດດ້ວຍການປ້ອງກັນປະເທດ ແລະພວກຖືກເຄາະຮ້າຍຈາກໄພທັມມະຊາດນັ້ນ ໃນຣະຍະ ໑໑ ປີຄືຕັ້ງແຕ່ປີ ໑໙໕໙ ເຖິງ ໑໙໗໐ ໄດ້ຮັບຄຳຮ້ອງ ໑໗.໑໘໓ ສບັບ ແລະ ໄດ້ອະນຸມັດເງິນໄປແລ້ວ ໑໐໕.໙໔໑.໓໔໒ ກີບ ສຳຫລັບປີ ໑໙໗໐–໗໑ ໄດ້ຮັບຄຳຮ້ອງຣາສດອນເສັຍຊີວິດ ແລະ ກໍອະນຸມັດເງິນໃຫ້ແລ້ວມີ ໑໔.໖໔໕ ສບັບຕົກເປັນເງິນ ໕໔.໕໔໑.໙໔໑ ກີບ.

## *ການຄຸ້ມຄອງເດັກແລະເຍົາວະຊົນ*

### *ເຮືອນອະນຸບານເດັກທີ່ທາດຂາວ*

ສຳຫລັບສຖານແຫ່ງນີ້ ເປັນບ່ອນຮັບລ້ຽງເດັກທັງ ໒ ປະເພດຄື ຍິງ ແລະຊາຍ ເດັກຊາຍຮັບເອົາແຕ່ນີ້ເກີດເຖິງ ໖ ປີ ແລະເດັກຍິງຕັ້ງແຕ່ເກີດເຖິງ ໑໒ ປີ ບ່ອນລ້ຽງເດັກດັ່ງກ່າວນີ້ສາມາດຮັບເອົາເດັກໄດ້ແຕ່ພຽງ ໔໐ ຄົນເທົ່ານັ້ນ ແຕ່ໃນປະຈຸບັນນີ້ມີເດັກທັງໝົດ ໘໓ ແລ້ວ ເພາະຍຄວາມວ່າພາຍກຳໜົດທີ່ໄດ້ກະເອົາໄວ້ມີເຖິງ ໓໓ ຄົນ ແລະຄາດວ່າໃນຂັ້ນຕໍ່ໄປຄົງຈະມີເພີ່ມຂຶ້ນຢູ່ເລື້ອຍ ໆ ດັ່ງນັ້ນຈຶ່ງໄດ້ກະຂຍາຍໂຄງການລ້ຽງເດັກນີ້ອອກອີກ ເພື່ອໃຫ້ເໝາະສົມກັບຈຳນວນເດັກທີ່ມີຢູ່ໃນປະຈຸບັນແລະອະນາຄົດ ເດັກຈຳນວນທີ່ກ່າວມານີ້ມີຜູ້ທີ່ມີອາຍຸພໍເຂົ້າໂຮງຮຽນ ແລ້ວກໍໄດ້ຈັດເຂົ້າຮຽນຢູ່ໝວດໂຮງຮຽນທາດຂາວ ຍັງເຫລືອແຕ່ເດັກທີ່ອາຍຸຕ່ຳກວ່າການເຂົ້າຮຽນ ເດັກທຸກ ໆ ຄົນໄດ້ຮັບການລ້ຽງດູຈາກເຈົ້າໜ້າທີ່ເປັນຢ່າງດີ ເປັນຕົ້ນການນຸ່ງຫົ່ມ ການກິນ ການນອນ ການພັກຜ່ອນ ການຫລິ້ນ ແລະການພຍາບາລໂດຍໄດ້ຮັບຄວາມຊ່ວຍເຫລືອຈາກກະຊວງສາທາຣະນະສຸກແລະໂຮງໝໍ ໂອບີ ທີ່ໄດ້ນາຍແພທຍ໌ແລະນາງພຍາບານມາຊ່ວຍຮັກສາປະຖົມພຍາບາລໃຫ້ແກ່ເດັກ ທີ່ເຈັບໄຂ້ໄດ້ປ່ວຍຕ່າງ ໆ ນອກຈາກນີ້ກໍຍັງມີສມາຄົມແລະອົງການຕ່າງ ໆ ໄປຮັກສາແລະລ້ຽງດູ ພ້ອມທັງໃຫ້ເຄື່ອງອຸປໂພກແລະບໍຣິໂພກເປັນບາງຄັ້ງບາງຄາວ.

## *ເຮືອນເຍົາວະຊົນໂສກປ່າຫລວງ :*

ເປັນບ່ອນລ້ຽງເດັກກຳພ້າກຳພອຍແລະລູກກຳພ້າທະຫານ ໆ ຂອງຊາດ ທີ່ພໍ່ແມ່ເສັຽຊີວິດ ໃນສນາມຣົບແນວໜ້າ ສຖານແຫ່ງນີ້ສາມາດບັນຈຸເດັກໄດ້ແຕ່ພຽງ 50 ຄົນ ແລະຮັບເອົາໄດ້ແຕ່ສເພາະ ເດັກຊາຍເທົ່ານັ້ນ ອາຍຸຕັ້ງແຕ່ 6 ປີ ຫາ 12 ປະຈຸບັນນີ້ມີເດັກຢູ່ 81 ຄົນກາຍທີ່ກຳນົດໄວ້ແລ້ວ 31 ຄົນ ຈຳນວນເດັກທີ່ກ່າວນີ້ໄດ້ຈັດໃຫ້ເຂົ້າຮຽນຢູ່ໝວດໂຮງຮຽນຢູ່ໝວດໂຮງຮຽນໂສກປ່າຫລວງ ໝວດໂຮງ ຮຽນໂນນປາເປົ້າແລະໄປຮຽນວິຊາຄຣູທີ່ດົງສພັງມິກ ເດັກທຸກ ໆ ຄົນຈະຕ້ອງໄດ້ຮັບການສຶກສາແລະ ເບິ່ງແຍງທຸກຢ່າງຈາກເຈົ້າໜ້າທີ່ເປັນຢ່າງດີ.

## *ການອົບຮົມແມ່ບ້ານການເຮືອນໃຫ້ເຍົາວະຊົນຍິງ*

ເພື່ອເປັນການສົ່ງເສີມໃຫ້ເຍົາວະຊົນຍິງທີ່ເປັນລູກຫລານຂອງພວກອົພຍົບ ຫລືພວກທະຫານ ບໍ່ມີຄຸນສົມບັດພໍທີ່ຈະເຂົ້າສຶກສາຢູ່ໃນໂຮງຮຽນການເຮືອນຂອງກະຊວງສຶກສາໄດ້ ດັ່ງນັ້ນທາງປະຊາສົງ ເຄາະຈຶ່ງໄດ້ຕັ້ງສຖານທີ່ອົບຮົມວິຊາແມ່ບ້ານການເຮືອນຂຶ້ນ ເພື່ອຊ່ວຍເຫລືອແລະ ສົ່ງເສີມເອົາວະຊົນຍິງ ເຫລົ່ານັ້ນໃຫ້ມີໜ້າທີ່ແລະຄຸນສົມບັດເປັນແມ່ບ້ານການເຮືອນທີ່ດີຂອງຊາດ ເທົ່າທີ່ໄດ້ດຳເນີນກິດການຕັ້ງ ແຕ່ປີ 1957 ເປັນຕົ້ນມາປາກົດວ່າໄດ້ຮັບຕົລດີເປັນທີ່ພໍໃຈໃຫ້ແກ່ລູກສິດ ທີ່ໄດ້ຮຽນແລະສອບເສັງໄດ້ ເພື່ອນຳເອົາວິຊາຄວາມຮູ້ນັ້ນໄປປະກອບອາຊີບໃນພາຍຄັ້ງໜ້າ.

## *ການຮັບຝາກເດັກກາງວັນ ( ສວນເດັກ )*

ຍ້ອນມານດາ ຫລືຜູ້ຍິງທີ່ເຄີຍເປັນແມ່ບ້ານ ຈະຕ້ອງໄດ້ອອກໄປຫາທຳງານ ເພື່ອນຳເອົາຣາຍໄດ້ມາລ້ຽງຄອບຄົວໂດຍສເພາະແລ້ວແມ່ນຄອບຄົວຂ້າຣາຊການຜູ້ນ້ອຍແລະມີລູກຫລາຍ ຮູ້ສຶກຝືດເຄືອງໃນການລ້ຽງ ແລະຮັກສາລູກທີ່ໄວຍັງອ່ອນຢູ່ເພື່ອທີ່ຈະແກ້ໄຂບັນຫາຍຸ້ງຍາກພາຍໃນຄອບ ຄົວດັ່ງກ່າວນີ້ ທາງຣັຖບາລຈຶ່ງໄດ້ໄຂບ່ອນຝາກເດັກນ້ອຍເວລາກາງວັນຂຶ້ນແຫ່ງໜຶ່ງ ທີ່ບໍຣິເວນປະຊາ ສົງເຄາະຫາດຂາວ ເພື່ອຮັບລ້ຽງເດັກໄວ້ເວລາກາງວັນ ຕອນແລງເມື່ອພໍ່ແມ່ກັບຈາກໄປເຮັດການມາ ແລ້ວ ກໍຮັບເອົາລູກຂອງຕົນກັບບ້ານ ໄດ້ເລີ່ມມາແຕ່ຕົ້ນເດືອນມີນາ 1969 ເດັກທີ່ຮັບເອົາ ມີອາຍຸແຕ່ 3–5 ປີ ( ກ່ອນເຂົ້າໂຮງຮຽນ )

ໃນຂັ້ນແຣກກະວ່າຈະຮັບເອົາເດັກແຕ່ພຽງ 30 ຄົນ ໃນປະຈຸບັນນີ້ໄດ້ຮັບໄປແລ້ວ 80 ຄົນ ໃນຂັ້ນຕໍ່ໄປອາດຈະມີເພີ່ມຂຶ້ນອີກ ຖ້າຫາກສຖານທີ່ແລະເຈົ້າໜ້າທີ່ພຽງພໍ.

ອັຕຣາຄ່າຝາກ ( ບົວຣະບັດເດັກພ້ອມທັງໃຫ້ອາຫານທ່ຽງແລະອາຫານຫວ່າງສອງຄາບຕອນບ່າຍ ) ໄດ້ຄິດເອົາຕ່ຳທີ່ສຸດຄົນລະ 2.000 ກີບ ຕໍ່ໜຶ່ງເດືອນ ຖ້າຄອບຄົວໃດຝາກລູກຮອດສອງຫລືສາມຄົນຂຶ້ນໄປ ສຳລັບຜູ້ທີສອງເກັບ 1.500 ກີບ ແລະທີ່ສາມເກັບ 1.000 ກີບ ອັຕຣາດັ່ງກ່າວນີ້ຕ່ຳທີ່ສຸດເພາະວ່າທາງເອກກະຊົນເພີ່ມເອົາກັນຜູ້ລະ 5.000 ກີບ ຍັງບໍ່ລ້ຽງອາຫານຊ້ຳ

## *ໂຄງການທີ່ຈະປະຕິບັດໃນອະນາຄົດ:*

ຕາມໂຄງການທີ່ໄດ້ວາງໄວ້ແລ້ວມີຫົວຂໍ້ໃຫຍ່ ෆ ແລະກວ້າງຂວາງຫລາຍ ເພື່ອຄຸ້ມຄອງແລະປ້ອງກັນສັງຄົມມະນຸດໃຫ້ຢູ່ດີກິນດີ ເພີ່ມທວີຍິ່ງຂຶ້ນ ໂຄງການທີ່ວາງໄວ້ແລ້ວມີຄື.

໑. ກອງປະກັນໄພ້ຽແລະຄວາມປອດໄພ້ຽສັງຄົມ.

໒. ການຊ່ວຍຊອກຫາ ດ້ານວັດຖຸ–

໓. ການຊ່ວຍຊອກຫາ ດ້ານເງິນ–

໔. ການອຸບັຕເຫດຈາກແຮງງານແລະເຈັບປ່ວຍຈາກການອາຊີພ–

໕. ກອງສວັດດິການສັງຄົມ–

໖. ການອົບຮົມມາຣດາແລະແລະແມ່ເຮືອນ–

໗. ການມານາກິຈ (ບໍຣິການອື່ນ ໆ)–

ໂຄງການນີ້ເປັນໂຄງການໃຫຍ່ ຈະຕ້ອງໄດ້ໃຊ້ເງິນງົບປະມານຢ່າງຫລວງຫລາຍ ແລະເຈົ້າໜ້າທີ່ຜູ້ຊ່ຽວຊານພຽງພໍ ຖ້າບໍ່ມີພາຫະນະຕາມທີ່ຕ້ອງການແລ້ວກໍອາດຈະດຳເນີນໄປໄດ້ຍາກ.

# ການແຮງງານຂອງລາວ

*ໂດຍ........ທອງໃບ ໄຊຍະຣາຊ ອະທິບໍດີກົມແຮງງານ*

ພຣະຣາຊອານາຈັກລາວເຮົາ ເປັນປະເທດທີ່ມີເອກຣາຊ ແລະປັດຈຸບັນເຮົາມີແຜນພັທນາເສຖກິຈ ແລະສັງຄົມ 1969–74 ຊຶ່ງຈະມີການພັທນາທາງດ້ານອຸສາຫະກັມ ແລະກະເສຕກັມ ອີກປະການໜຶ່ງ ປະເທດລາວເຮົາໄດ້ເຂົ້າເປັນສະມາຊິກຂອງອົງການແຮງງານສາກົນໃນ ໑໙໕໔ ກະຊວງປະຊາສົງເຄາະຈຶ່ງໄດ້ຈັດຕັ້ງກົມແຮງງານຂຶ້ນໃນປີ ໑໙໕໕ ໂດຍມີວັດຖຸປະສົງດັ່ງນີ້ ຄື:

ເພື່ອຮັກສາຄວາມຍຸຕິທັມຣະຫວ່າງນາຍຈ້າງກັບລູກຈ້າງ.

ເບິ່ງແຍງສະວັດດີພາບ, ການຢູ່ກິນແລະປັບປຸງຖານະການຄອງຊີພຂອງຄົນງານໃຫ້ດີຂຶ້ນ.

ແກ້ໄຂບັນຫາຄົນຫວ່າງງານໂດຍຊອກຫາວຽກການໃຫ້ເຂົາເຈົ້າທຳ ແລະໃຊ້ແຮງງານໃຫ້ເປັນປະໂຍດເພື່ອການພັທນາເສຖກິຈຂອງຊາຕ.

## ໑– *ການຈັດຕັ້ງຂອງກົມແຮງງານ :*

ຕາມດຳຣັດຂອງສເດັຈນາຍົກຣັຖມົນຕຣີ ເລກທີ່ ໕໙໗ ລົງວັນທີ່ ໕ ກັນຍາ ໑໙໗໐ ກົມແຮງງານ ແລະຈັດຫາງານ ໄດ້ແຍງການຈັດຕັ້ງໄວ້ດັ່ງນີ້:

ກ. ກອງຈັດຫາງານ.

ຂ. ກອງສາຣະວັດແຮງງານ.

ນອກຈາກນັ້ນຍັງມີພແນກກົດໝາຍ, ພແນກແຮງງານສຳພັນ, ພແນກການຝຶກວິຊາຊີພ, ພແນກປະກັນສັງຄົມ ແລະພແນກແຮງງານຕ່າງດ້າວ.

ກ. ກົດໝາຍສະບັບວັນທີ່ ໓໐ ທັນວາ ໑໙໕໕, ວ່າດ້ວຍກົດຣະບຽບແຮງງານ.

ຂ. ດຳຣັດຂອງທ່ານອັຄຣະມະຫາເສນາບໍດີປະຈຳອິນດູຈີນຝຣັ່ງເສດ ສະບັບວັນທີ່ ໓໑ ມົກຣາ ໑໙໔໔ ວ່າດ້ວຍອຸປະຕິເຫດແຮງງານ.

ກົດໝາຍແລະດຳຣັດທີ່ກ່າວມາຂ້າງເທິງນີ້ ໃຊ້ບັງຄັບສຳລັບກັມກອນຊາວອິນດູຈີນທັງໝົດໃນສໄມການປົກຄອງຂອງຝຣັ່ງເສດ.

ເພື່ອໃຫ້ສອດຄ່ອງເໝາະສົມກັບໂຄງການພັທນາເສຖກິຈ ແລະສັງຄົມຂອງຣັຖບານ ພ້ອມທັງທັງເປັນການຮັກສາຄວາມຍຸຕິທັມ ແລະຄວາມປອດໄພ້ຽໃນການທຳງານຂອງກັມມະກອນ, ກະຊວງປະຊາສົງເຄາະ ແລະແຮງງານ ຈຶ່ງເຫັນຄວາມຈຳໃຫ້ມີກົດໝາຍແຮງງານທີ່ຖືກຕ້ອງເໝາະສົມກັບເຫດການໃນປັດຈຸບັນດັ່ງນີ້ ໂດຍອາໄສຄວາມຊ່ວຍເຫລືອຈາກຜູ້ຊ່ຽວຊານດ້ານກົດໝາຍແຮງງານຂອງຝຣັ່ງເສດແລະຂອງອົງການແຮງງານສາກົນ ຮ່າງກົດໝາຍແຮງງານສບັບໃໝ່ຈຶ່ງໄດ້ຖືກຂຽບຮຽງຂຶ້ນ ແລະເສັດແລ້ວໃນປີ ໑໙໗໐ ນີ້.

ຮ່າງກົດໝາຍດັ່ງກ່າວນີ້ ທາງອົງການແຮງງານສາກົນ ຊຶ່ງສຳນັກງານໃຫຍ່ຕັ້ງຢູ່ກຸງເຊີແນວກໍໄດ້ຮັບຮູ້ວ່າຖືກຕ້ອງ ແລະທັນສໄມກັບມາຕະຖານສາກົນແລ້ວ.

ຮ່າງປະມວນກົດໝາຍແຮງງານສບັບໃໝ່ປະກອບດ້ວຍ ໔໓໐ ມາຕຣາຊຶ່ງແບ່ງອອກເປັນ ໑໑ ພາກດັ່ງນີ້ :

ບົດນຳທົ່ວໄປ.

ສະມາຄົມອາຊີພ.

ສັນຍາຈ້າງ.

ຄ່າແຮງງານ

ກຳໜົດເວລາທຳງານ.

ສຸຂະພິບານ ແລະຄວາມປອດໄພ້ຽຂອງຄົນງານ.

ອຸປະຕິເຫດ ແລະພະຍາດທີ່ເກີດຈາກການທຳງານ.

ການຄວບຄຸມ ແລະບໍຣິຫານງານຂອງເຈົ້າໜ້າທີ່ແຮງງານ.

ການລົງໂທດຜູ້ລະເມີດກົດໝາຍແຮງງານ.

ກໍຣະນີພິພາດຣະຫວ່າງນາຍຈ້າງ ແລະລູກຈ້າງ.

ຂໍ້ບັງຄັບສະເພາະການ.

ກົດໝາຍນີ້ເມື່ອໄດ້ຮັບຄວາມເຫັນຊອບຈາກສະພາແຫ່ງຊາດຢ່າງຄັກແນ່ ແລະໄດ້ຊົງຮັບພຣະປາຣະມິພິທັຍ ຂອງພຣະບາດສົມເດັຈ ພຣະເຈົ້າມະຫາຊີວິດແລ້ວ ກໍອຳນວຍຄວາມສະດວກໃຫ້ແກ່ ເຈົ້າ

24/VII

ໜ້າທີ່ຣາຊການແຮງງານໃນການ ໃນການປະຕິບັດງານ ແລະຈະສາມາຖຮັກສາຄວາມຍຸຕິທັມ ຣະຫວ່າງ ນາຍຈ້າງ ແລະລູກຈ້າງໄວ້ໄດ້.

*ຝ– ການດຳເນີນງານຂອງກົມແຮງງານ ໃນປີທີ່ຜ່ານມາ.*

*ດ້ານກົດໝາຍແຮງງານ.*

ໃນປີທີ່ຜ່ານມາ ກົມແຮງງານໄດ້ເອົາໃຈໃສ່ດັດແປງກົດໝາຍແຮງງານໃນຂໍ້ທີ່ຍັງບໍ່ທັນເໝາະ ສົມກັບເຫດການໃຫ້ດີຍິ່ງຂຶ້ນ ແລະຈັດສົ່ງໄປຍັງສະພາແຫ່ງຊາຕ ຊຶ່ງກອງປະຊຸມໃຫຍ່ ແລະກັມມາທິການ ຂອງສະພາແຫ່ງຊາຕ ໄດ້ຮັບຮູ້ເອົາເປັນຫລັກການແລ້ວ.

*ການຈັດຫາງານ :*

ຕັ້ງແຕ່ປີ ໑໙໖໗ ເປັນຕົ້ນມາ ໂຄງການຫາງານໃຫ້ນັກຮຽນ ນັກສຶກສາໃນຍາມພັກໂຮງ ຮຽນເປັນໂຄງການປະຈຳປີຂອງຣາຊການແຮງງານ ວັດຖຸປະສົງສ່ວນໃຫຍ່ຂອງໂຄງການນີ້ກໍຄື: ສົ່ງເສີມ ນັກຮຽນ ນັກສຶກສາ ຜູ້ຍາກຈົນ ແລະຜູ້ທີ່ຕ້ອງການເຮັດວຽກເພື່ອໃຫ້ມີເງິນພໍໄດ້ຊື້ປຶ້ມຮຽນ, ເຄື່ອງ ນຸ່ງຫົ່ມ ແລະເຄື່ອງໃຊ້ທີ່ຈຳເປັນ, ພ້ອມທັງພາໃຫ້ເຂົາເຈົ້າໄດ້ລຶ້ງເຄີຍກັບວຽກການໄວ້ແຕ່ຍັງໜຸ່ມນ້ອຍ.

ນອກຈາກນະຄອນວຽງຈັນແລ້ວ ກົມແຮງງານຍັງໄດ້ສົ່ງຜູ້ຕາງໜ້າຂອງຕົນໄປເປີດສມັກງານ ໃຫ້ແກ່ນັກຮຽນທີ່ຫລວງພຣະບາງ, ຄຳມ່ວນ, ສວັນນະເຂດ ແລະປາກເຊທຸກໆ ປີນັກຮຽນໄດ້ເຮັດ ວຽກໃນຍາມພັກປະມານ ໕໐໐ ກວ່າຄົນ.

ສ່ວນການຊອກວຽກໃຫ້ຜູ້ຫວ່າງງານ ແລະຜູ້ຢາກປະກອບອາຊີບທາງສຸຈຣິດນັ້ນ, ກົມແຮງ ງານກໍໄດ້ຈັດສົ່ງໄປຍັງບໍຣິສັດ ແລະໂຮງງານຕ່າງໆ ທົ່ວນະຄອນ ໃຫ້ຮັບເອົາເຂົ້າເຮັດວຽກແລ້ວແຕ່ຈະ ເໝາະສົມ ແລະຄວາມສາມາຖຂອງແຕ່ລະຄົນ.

ໃນເມື່ອມີນາຍຈ້າງຕ້ອງການຄົນງານປະເພດຕ່າງໆ ກົມແຮງງານກໍໄດ້ປະກາສທາງໜັງສືພິມ ແລະອອກອາກາສໃຫ້ແກ່ປະຊາຊົນຜູ້ສົນໃຈທົ່ວໄປຊາບທຸກເທື່ອ. ນອກຈາກນີ້ແລ້ວ ຜູ້ສມັກງານຕ້ອງການ ໄປທຳງານຢູ່ເງື່ອນນ້ຳງື່ມ ທາງການແຮງງານກໍໄດ້ອຳນວຍຄວາມສະດວກໃຫ້ທຸກປະການ.

### *ດ້ານຄະດີ ແລະຂໍ້ພິພາດແຮງງານ :*

ເມື່ອມີຄະດີການສໍ້ໂກງ ຫລືອຸປຕິເຫດແຮງງານເກີດຂຶ້ນ ບໍ່ວ່າຢູ່ຕ່າງແຂວງ ຫລືໃນເຂດນະຄອນວຽງຈັນ ສະເພາະຢ່າງຍິ່ງແມ່ນອຸປຕິເຫດທີ່ເກີດຂຶ້ນແກ່ຄົນງານສ້າງຝາຍນ້ຳງື່ມ ທາງການແຮງ ງານກໍບໍ່ໄດ້ນິ້ງນອນໃຈ ໄດ້ເອົາໃຈໃສ່ຕິດຕາມຄະດີທຸກ ໆ ລາຍທີ່ເກີດຂຶ້ນແກ່ກັມມະກອນຜູ້ໄດ້ຮັບເຄາະຮ້າຍຢ່າງໃກ້ຊິດທີ່ສຸດ.

### *໔– ໂຄງການປະຕິບັດງານຂອງຣາຊການແຮງງານ.*

ສຳລັບໂຄງການປະຕິບັດງານໃນປີນີ້ ກົມແຮງງານໄດ້ມີໂຄງການດຳເນີນງານດັ່ງນີ້ :

### *ດ້ານການສຳຣວຈຄົນງານ.*

ໃນປີງົບປມານສົກນີ້ກົມແຮງງານຈະມີການສົ່ງເຈົ້າໜ້າທີ່ຝ່າຍແຮງງານ ໄປສຳຣວຈຄົນງານທຸກປະເພດ ທັງຄົນລາວ ແລະຕ່າງດ້າວຢູ່ຕາມບໍຣິສັດ ແລະໂຮງງານອຸດສາຫະກັມ ຕາມຫົວເມືອງຕ່າງ ໆ ທົ່ວພຣະຣາຊອານາ ເພື່ອໃຫ້ຮູ້ຈັກສະຖິຕິຄົນງານຢ່າງຄັກແນ່ ຮູ້ຈັກຄວາມຕ້ອງການ ຫລືຄວາມຂາດເຂີນຄົນງານປະເພດຕ່າງ ໆ ໃນທ້ອງຕລາດແຮງງານລາວເຮົາ ແລະຈະໄດ້ແກ້ໄຂໃຫ້ເໝາະສົມກັບໂຄງ ການພັທນາເສຖກິຈ ແລະສັງຄົມຂອງຊາດ.

### *ດ້ານກົດໝາຍແຮງງານ.*

ເມື່ອຮ່າງກົດໝາຍແຮງງານໄດ້ຮັບພຣະປຣະມາພິທັຍຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດແລ້ວກໍຈະອຳນວຍຄວາມສະດວກໃຫ້ແກ່ການປະຕິບັດງານຂອງເຈົ້າໜ້າທີ່ ແຮງງານຢ່າງເຕັມສ່ວນ ຄົນງານທັງຫລາຍກໍຈະໄດ້ຮັບຄວາມຍຸຕິທັມ ແລະຄວາມປອດໄພໃນການທຳງານມາກຍິ່ງຂຶ້ນ.

### *ດ້ານສວັດດີພາບ ແລະວິທີການທຳງານຂອງກັມກອນ.*

ກົມແຮງງານຈະໄດ້ສົ່ງສາຣະວັດແຮງງານອອກກວດຕາມໂຮງງານຕ່າງ ໆ ເພື່ອກວດເບິ່ງ ສະວັດດີພາບ, ສຸຂພາບອະນະໄມ ແລະການທຳງານຂອງຄົນງານ. ເບິ່ງສະຖານທີ່ທຳງານ ອາທິເຊັ່ນ : ໃຫ້ໃຊ້ເວລາທຳງານມື້ລະ ໘ ຊົ່ວໂມງ, ເບິ່ງແຍງຄົນງານເມື່ອເວລາເຈັບປ່ວຍດັ່ງນີ້ເປັນຕົ້ນ.

ນອກຈາກນະຄອນວຽງຈັນແລ້ວ ສາຣະວັດແຮງງານຈະໄດ້ໄປກວດຕາມໂຮງງານຕ່າງ ໆ ທົ່ວພຣະຣາຊອານາຈັກອີກດ້ວຍ.

*ໂຄງການຈັດຫາງານ.*

ສຳຫລັບງົບປະມານສົກນີ້ກົມແຮງງານໄດ້ຮັບຄວາມເຫັນໃຈຈາກກະຊວງການຄັງ ແລະແຜນ ຜັງ ດີ ໄດ້ຮັບງົບປມານປະຈຳປີຂອງໂຄງການພັທນາເສຖກິຈ ແລະ ສັງຄົມໂດຍມີທະນະພໍສົມຄວນ, ເພື່ອ ກົມແຮງງານຈະໄດ້ຊອກຫາວຽກໃຫ້ຄົນຫວ່າງງານ ແລະດຳເນີນໂຄງການທີ່ເຄີຍປະຕິບັດມາໃນປີກ່ອນ ນ ໃຫ້ໄດ້ຜົນເຕັມເມັດເຕັມໜ່ວຍ.

*ນະໂຍບາຍກ່ຽວກັບຄົນງານຕ່າງດ້າວ:*

ເໝືອນດັ່ງທຸກຄົນຮູ້ຈັກ ລາວເຮົາຍັງຂາດຄົນງານ ທີ່ເປັນຊ່າງເຕັກນິກສີມືຂັ້ນສູງບາງປະເພດ ເພື່ອປະຈຳໂຮງງານທີ່ຕັ້ງຂຶ້ນໃໝ່ຈຶ່ງຈະຕ້ອງເອົາເຂົ້າມາດຳເນີນກິຈການຂອງເຂົາເຈົ້າ ກົມແຮງງານມີ ນະ ໂຍບາຍພິຈາຣະນາ ອະນຸຍາດໃຫ້ແຕ່ນາຍຊ່າງຕ່າງດ້າວດັ່ງຂ້າງເທີງນີ້ ໂດຍເຫັນວ່າຈະເປັນປະໂຍດແກ່ ການພັທນາເສຖກິຈຂອງຊາດ ຈຶ່ງຈະຮັບອະນຸຍາດໃຫ້ເຂົາປະກອບອາຊີບໃນເມືອງລາວ ນອກຈາກຈະໄດ້ ຮັບອະນຸຍາດໃຫ້ເຂົ້າມາທຳງານໃນດິນລາວແລ້ວ ນາຍຈ້າງທຸກຄົນຕ້ອງມີສັນຍາກັບຄົນງານຕ່າງດ້າວ ດັ່ງ ກ່າວໃຫ້ສິດສອນຄົນງານລາວ ໃຫ້ດຳເນີນກິຈການແທນຕົນເອງໄດ້ ແລະເຖິງກຳໜົດເວລາທີ່ທາງການອະ ນຸຍາດແລ້ວຕ້ອງໄດ້ກັບຄືນບ້ານຂອງເຂົາເຈົ້າ.



## ບົດຄວາມເຣື່ອງ: ການສົງເຄາະຫ໌ຜູ້ປະສົບໄພຍ໌ສົງຄາມ

ໂດຍ ຄຳເບັງ

### ສະບັບໄດ້ຮັບລາງວັນ ທີ່ ໑ ປີ ໑໙໗໐

✳

ນັບຕັ້ງແຕ່ລາວເຮົາ ໄດ້ຮັບເອກຣາຊມາ ກໍເປັນເວລານານເຖິງ ໒໐ ກວ່າປີແລ້ວ ລາວເຮົາບໍ່ມີຄວາມສງົບສຸກເລີຍ, ຍ້ອນສາຍເຫດວ່າ ຄວາມຄິດຂອງນັກການເມືອງບໍ່ກົງກັນ ຍ້ອນການຮຸກຮານຂອງປະເທດເພື່ອນບ້ານ ທາງດ້ານຕາເວັນອອກ. ດ້ວຍສາຍເຫດດັ່ງກ່າວນີ້ແລ້ວ ລາວເຮົາຈຶ່ງພົບພໍ້ກັບສົງຄາມ ອັນນານແສນນານ ແລະເປັນເຫດໃຫ້ເພື່ອນທີ່ຮ່ວມຊາດ ຕ້ອງສູນເສັຽຊີວິດ ຢ່າງໜ້າສົມເພດເວທນາ ເພື່ອຕໍ່ສູ້ຢ່າງວິຣະອາດຫານ ກັບຜູ້ບຸກຮຸກພາຍນອກ ນອກຈາກນີ້ຜູ້ເສັຽຊີວິດ ຍັງມີເພື່ອນທີ່ຮ່ວມຊາດອີກຝ່າຍນຶ່ງ ທີ່ເສັຽອົງຄະໃນສນາມຮົບ ແລະອີກຝ່າຍນຶ່ງເປັນເຫຍື່ອສົງຄາມ ຄື ປະຊາຊົນລາວ ທີ່ບໍ່ຍອມເປັນທາດຂອງຝ່າຍກົງກັນຂ້າມ, ເຂົາຍອມປະໄຮ່ ປະນາ ເຮືອນຊານບ້ານຊ່ອງ, ອົພຍົບຫລົບໜີໄພ ສ່ຽງຊີວິດໜີ ຈາກດິນແດນກັນດານ ທີ່ຂາດມະນຸສະທັມ ເຕັມຕັ້ງແຕ່ການພົບເຕັງ ພວກດັ່ງກ່າວນີ້ ເອີ້ນວ່າ "ຊາວອົພຍົບ" ຊາວອົພຍົບດັ່ງກ່າວນີ້ມາຢ່າງບໍ່ມີເຄື່ອງເຮືອນຂອງຊານ, ມາຢ່າງບໍ່ມີເຄື່ອງນຸ່ງຫົ່ມອັນອົບອຸ່ນ ແລະມາພ້ອມດ້ວຍຄວາມຄິດ ທີ່ເຂົ້າໃຈດີຕໍ່ຄວາມເປັນຢູ່ຂອງລາວດ້ວຍ ກັນເຂົາມາເພື່ອຖາກຖາງທາງໄປສູ່ຊີວິດໃໝ່ ແຕ່ຊີວິດໃໝ່ນີ້ ຍັງບໍ່ທັນສົມບູນເທື່ອ, ເຂົາຕ້ອງຄອຍຖ້າ ການຊ່ວຍເຫລືອຈາກຣັຖບານ ແລະໂດຍສະເພາະຢ່າງຍິ່ງ ແມ່ນເພື່ອນຮ່ວມຊາດ ທີ່ຢູ່ແນວຫລັງທຸກ ໆ ຄົນ ປັດຈຸບັນນີ້ ທາງຣັຖບານຮັບຜິດຊອບ ໃນການຢູ່ກິນຂອງ *ຊາວອົພຍົບ* ທົ່ວປະເທດ ອັນມີເລກເຖິງຫົກແສນກວ່າຄົນ ຕົວເລກດັ່ງກ່າວນີ້ໝາຍເຖິງ ນຶ່ງສ່ວນສີ່ ຂອງປະຊາກອນທົ່ວປະເທດ, ເມື່ອບໍ່ ໆ ມານີ້ກໍມີເພື່ອນທີ່ຮ່ວມຊາດອີກຈຳນວນນຶ່ງ ເຖິງຊາວພັນຄົນ ໄດ້ອົພຍົບຈາກທົ່ງໄຫຫີນ ມາຢູ່ໃນຄວາມດູແລຂອງຣັຖບານ; ອັນເປັນການໜັກໃຈຫລາຍທີ່ສຸດ ໃນການຮັບຕ້ອນ ແລະການຈັດຫາສຖານທີ່ ເໝາະສົມເພາະການອົພຍົບເທື່ອນີ້ ເອີ້ນວ່າ "ອົພຍົບໝູ່" ຊຶ່ງບໍ່ເຄີຍມີໃນປະວັດສາດລາວ ທີ່ມີການອົພຍົບຫລາຍຄອບຄົວດັ່ງນີ້.

ດ້ວຍເຫດນີ້ເອງ ທາງກະຊວງປະຊາສົງເຄາະຫ໌ ຊຶ່ງເປັນຕົວແທນຂອງຣັຖບານ ຈຶ່ງໄດ້ຍົກເອົາວັນທີ່ ໑ ມີນາ ຈະມາເຖິງນີ້ ເປັນວັນສົງເຄາະຫ໌ ຜູ້ປະສົບໄພສົງຄາມປີນີ້ ກໍເປັນປີທີສາມ ໄດ້ຈັດສະ

ລອງໃຫ້ມີອັນດັ່ງກ່າວ ປະຊາຊົນລາວທົ່ວປະເທດ ໄດ້ໃຫ້ຄວາມຮ່ວມໄມ້ ຮ່ວມມືຢ່າງໃກ້ຊິດ ແລະໄດ້ຜົນຢ່າງເພິ່ງພໍໃຈເຫລືອທີ່ສຸດ ປີນີ້ເພື່ອນທີ່ຮ່ວມຊາຕກໍຄວນໃຫ້ການຊ່ວຍເຫລືອແກ່ພີ່ນ້ອງລາວດ້ວຍກັນອີກເຊັ່ນເຄີຍ ເພາະປັດຈຸບັນນີ້ ເຂົາກໍໄດ້ຢູ່ໃນອ້ອມແຂນອັນອົບອຸ່ນເຮົາແລ້ວ. ນອກຈາກເພື່ອນທີ່ຮ່ວມຊາດຊາວອົບຍົບ ແລະຊາວທະຫານເສັຽອົງຄະ ມີຄວາມພາກພຸມໃຈ ໃນຄວາມເປັນຢູ່ຂອງລາວດ້ວຍກັນແລ້ວພວກເຂົາເຈົ້າ ຍັງຄອງຖ້ານ້ຳໃຈໄມຕຣີຈິຕ ຄອງຖ້າການຊ່ວຍເຫລືອ ແລະຄງຍຖ້າການເສັຽສລະ. ຂອງຄົນໃນຊາຕດ້ວຍກັນອີກ.

ຈິງຢູ່ ສ່ວນມາກຊາວລາວເຮົາ ຫລືສັງຄົມລາວເຮົາ ປັດຈຸບັນນີ້ບໍ່ມີການຊ່ວຍເຫລືອ ຊຶ່ງກັນແລະກັນເທົ່າທີ່ຄວນ ແມ່ນກະທັ່ງເສດຖີ ແລະນັກການເມືອງບາງຄົນ ກໍຍັງຄິດເຫັນສ່ວນຕົວຫລາຍ ຈົນເກີນໄປ ແຕ່ກໍຢ່າລືມວ່າຊາວລາວເຮົາ ຕາມປະວັດສາດ, ຕາມປະເພນີອັນເກົ່າແກ່ແລ້ວ, ຄົນລາວເຮົາເປັນຄົນມີນ້ຳໃຈກະຣຸນາ, ພາຣັກຫອມ, ບໍ່ເປັນຄົນຄິດເຫັນແກ່ຕົນ, ເປັນຄົນເສັຽສລະຢ່າງໃຫຍ່ຫລວງແກ່ເພື່ອນທີ່ຮ່ວມຊາດດ້ວຍກັນ ແລະໂດຍສະເພາະຢ່າງຍິ່ງ ຊາວລາວເຮົາ ເປັນຄົນມັກຊ່ວຍເຫລືອຊຶ່ງກັນແລະກັນແລະຫລາຍທີ່ສຸດ ດັ່ງເຮົາຈະເຫັນສະພາບດັ່ງກ່າວນີ້ຫລາຍທີ່ສຸດ ຕາມບ້ານນອກ ເມື່ອມີການປຸກເຮືອນໃໝ່ບໍ່ ! ຕີເຂົ້າບໍ່ ! ດຳນາບໍ່ ! ເປັນຕົ້ນ.

ສະນັ້ນ ໃນວັນທີ່ ໑ ມີນາ ຈະມາເຖິງນີ້ຄົນລາວທັງຊາດທຸກ ໆ ຄົນຄວນໃຫ້ມີນ້ຳໃຈໂອບເອື້ອອາຣີ, ຮູ້ຈັກຊ່ວຍເຫລືອ, ຮູ້ຈັກເສັຽສລະແກ່ເພື່ອນພີ່ນ້ອງ ຜູ້ປະສົບໄພສົງຄາມ ທີ່ກຳລັງ ເດືອດຮ້ອນຢູ່ ໃນເວລານີ້ ພວກດັ່ງກ່າວນີ້ ຈະປ່ອຍໃຫ້ເຂົາເຈົ້າຢູ່ໂດຍລຳພັນແລ້ວເຮົາບໍ່ຄວນເລີຍ ເພາະພວກເຂົາກໍເປັນຊົນຊາດລາວດ້ວຍກັນ, ໃນເມື່ອເຂົາຫາກພົບພໍ້ກັບຄວາມທຸກຈົນໃນຊີວິດ ດ້ວຍໄພ ສົງຄາມອັນເປັນຂອງບໍ່ເພິ່ງປາຖນາຂອງຄົນລາວທັງຊາດ ດ້ວຍການຕໍ່ສູ້ຢ່າງວີຣະອາດຫານກັບສັຕຣູທີ່ມາບຸກຣຸກດິນແດນລາວ ເພື່ອຄວາມເປັນຢູ່ຂອງຊາຕລາວເຮົາ, ພວກດັ່ງກ່າວນີ້ຍອມເສັຽສລະ ແມ່ນກະທັ່ງຊີວິດ ແລະເລືອດທຸກ ໆ ຍົດ ເພື່ອຮັກສາຜືນແຜ່ນດິນ ອັນຄົບຖ້ວນຂອງລາວເຮົາ ຖ້າເປັນດັ່ງນັ້ນແລ້ວກໍສົມຄວນທີ່ສຸດ ທີ່ຄົນລາວດ້ວຍກັນຄວນສາມັກຄີ ສະແດງນ້ຳໃຈອັນບໍຣິສຸດອອກໃຫ້ເຂົາເຈົ້າເຫັນເພື່ອເປັນສັກຂີພິຍານວ່າ ຄົນລາວກຸ່ມນຶ່ງໃນຊາດ ຍັງມີຄວາມຈິງຮັກພັກດີຕໍ່ຄົນລາວດ້ວຍກັນຢູ່.

ຈິງແລ້ວ ການເສັຽສລະນັ້ນບໍ່ວ່າຈະເສັຽສລະນ້ອຍຫລືຫລາຍ ກໍ່ສແດງໃຫ້ເຂົາເຫັນນ້ຳໃຈ

ອັນແທ້ຈິງຕໍ່ພວກເຂົາເຈົ້າຢູ່ແລ້ວ, ພວກເຂົາຈະພໍໃຈສເມີໄປ ແລະຈະຈາລຶກຄວາມເສັຽສລະ ຂອງເຮົາໄວ້ຕລອດໄປ.

ສິ່ງທີ່ພວກເຮົາຄວນຊ່ວຍເຫລືອ ແລະກ້າເສັຽສລະນັ້ນກໍມີ :

໑– ຮູ້ຈັກຄວາມເມດຕາຈິດ ຕໍ່ຄວາມສຸກທຸກຂອງເຂົາເຈົ້າ.

໒– ການສລະຊັພສິນສ່ວນຕົວ ເພື່ອຄວາມຊ່ວຍເຫລືອເຂົາເຈົ້າໃນຄາວຈຳເປັນ.

໓– ກ້າອອກເຫື່ອເຫແຮງ ເພື່ອຊ່ວຍສ້າງສາເຮືອນຊານບ້ານຊ່ອງ, ໂຮງໝໍ, ໂຮງຮຽນເປັນຕົ້ນ.

ແລະທ້າຍສຸດ ຮູ້ຈັກວາງແຜນອັນນຽນເພື່ອຈັດຕັ້ງ ການໃຫ້ຄວາມຊ່ວຍເຫລືອແກ່ເຂົາເຈົ້າຢ່າງໃກ້ຊິດໝາຍຄວາມວ່າ ສິ່ງໃດເຮົາຄວນຊ່ວຍເຫລືອເຂົ້າ ຢ່າງກະທັນຫັນຢ່າງໃດ ເຮົາຄວນເຮັດເປັນຣະຍະໄປເພື່ອບໍ່ໃຫ້ມັນກະທົບກະເທືອນຕໍ່ *ປັຈຈັຍ* ທີ່ເຮົາມີຢູ່ແລ້ວ .

ແລະເພື່ອຈະເປັນຄົນກ້າເສັຽສລະອັນແທ້ຈິງນັ້ນ ຄົນຜູ້ນັ້ນຕ້ອງມີ :

*໑–ຈິດໃຈໃນຄວາມເປັນຊາຕ* (Esprit Nationaliste)

ຕາມສະພາບຄວາມເປັນຈິງແລ້ວ ປະເທດລາວເຮົາມີຫລາຍພາກ ຫລາຍເຜົ່າ ແຕ່ລະພາກແຕ່ລະເຜົ່າ ຄົນໃນພາກ, ຄົນໃນກຸ່ມນັ້ນ ກໍມີຈິດໃຈນິຍົມພາກຢູ່ (Esprit Regional) ໂດຍບໍ່ຄິດເຖິງ *ຈິດໃນຄວາມເປັນຊາດ* ອັນດຽວກັນເທື່ອ. ອັນນີ້ກໍເປັນວິທີຄວາມຄິດນຶ່ງ ທີ່ຖ່ວງດຶງໃນການທີ່ຈະພາໃຫ້ຄົນໃນຊາດກ້າເສັຽສລະອັນແທ້ຈິງ.

## ໒. *ການສຶກສາ ອັນຕ້ອງອົບຮົມມາແຕ່ພື້ນຕໍ່າ :*

ສິ່ງສຳຄັນເຮົາຄວນອົບຮົມສັ່ງສອນເດັກນ້ອຍ ໃຫ້ຮູ້ຈັກຊ່ວຍເຫລືອຊຶ່ງກັນແລະກັນໃນພາກຮຽນຂັ້ນປະຖົມບໍຣິບູນ ຫລື ມັທຍົມບໍຣິບູນ. ສະພາບການສຶກສາໃນປັດຈຸບັນນີ້ ທຸກຄົນຄົງຈະຊາບດີວ່າ ຄົນໃນຊາດໄດ້ຮັບການສຶກສາບໍ່ພຽງພໍ ແລະຂາດ *ການອົບຮົມດ້ານສັງຄົມສົງເຄາະທ໌*

ຕາບໃດທີ່ສະພາບການຍັງເປັນດັ່ງນີ້ແລ້ວ ການເຫັນແກ່ຕົວກໍຍ່ອມເກີດມີເຊັ່ນດຽວກັນ ເພາະການສຶກສາມັນພາໃຫ້ຄົນໃນຊາດ ມີຄວາມສລຽວສລາດ ແລະ ພາໃຫ້ຄົນກ້າເສັຽສລະເທົ່າທີ່ຄວນ ຈິງຢູ່ດຽວນີ້ພວກທີ່ໄດ້ຮັບການສຶກສາດີ ກໍມີຖົມໄປ ແຕ່ພວກນັ້ນ ເຂົາມີຄວາມເສັຽສລະໃນຕົວຢູ່ແລ້ວ, ແຕ່ຄວາມເສັຽສລະນັ້ນ *ເສື່ອມ* ເສັຽໄປ ເທື່ອລະເລັກລະນ້ອຍຍ້ອນເຂົາຄິດວ່າ ໃຫ້ມີແຕ່ພວກມີຄວາມຮູ້ເທົ່ານັ້ນບໍ່ເສັຽສລະ ? ພວກອື່ນເດ ? ນີ້ກໍຜິດຫລັກການເໝືອນກັນ ທີ່ຄົນເຮົາໄດ້ຮັບການສຶກສາດີແລ້ວບໍ່ເປັນຕົວຢ່າງໃຫ້ຄົນໃນຊາດດ້ວຍກັນ. ສະນັ້ນ ເມື່ອໃດທີ່ສັງຄົມລາວເຮົາ ມີການສມ່ຳສເມີ ໃນການສຶກສາແລ້ວ ເມື່ອນັ້ນ ຄວາມຄິດເຫັນແກ່ຕົວ ບໍ່ຫາຍໄປ ແລະການເສັຽສລະກໍເປັນເງົາຕາມມາ.

### *ມ. ການມັທຍັດ.*

ນິສັຍຄົນລາວ ຜູ້ມີຖານະດີ ແລະຖານະປານກາງ ສ່ວນມາກຍັງມີການຈັບຈ່າຍ ບໍ່ເປັນຫົວເປັນຕີນເທື່ອ ຫລືເອົາວ່າມີທີ່ໃດຈ່າຍທີ່ນັ້ນກໍບໍ່ມີຜິດ. ໃນເມື່ອສັງຄົມລາວເຮົາ ເຖິງຂັ້ນນີ້ແລ້ວກໍຍາກທີ່ຈະດັດແປງໃຫ້ທຸກຄົນ ກ້າເສັຽສລະ ແລະກ້າຊ່ວຍເຫລືອຊຶ່ງກັນແລະກັນ ເພາະການບໍ່ມີມັທຍັດໃນຕົວນັ້ນ ເປັນເຫດໃຫ້ຄົນຄິດເຫັນແກ່ຕົວເກີນໄປ. ຍິ່ງການຈັບຈ່າຍຟູມເຟືອຍເທົ່າໃດ ຍິ່ງຄວາມເຫັນແກ່ຕົວກໍທະວີຂຶ້ນຕາມຕົວ — ເອົາໄປເອົາມາ ສັງຄົມລາວປັດຈຸບັນນີ້ ບໍ່ກ້າຮອດເອົາເງິນສ່ວນຕົວບາງເລັກນ້ອຍໄປຊ່ວຍເຫລືອເພື່ອນທີ່ຮ່ວມຊາດດ້ວຍກັນ ທີ່ກຳລັງເລືອດຮ້ອນ ເພາະມັນເຄີກເອົາໄປຈັບຈ່າຍໃນທາງອື່ນຫລືຈັບຈ່າຍໃນຄອບຄົວໂຕເອງ. ສະພາບການໃນເມືອງລາວເຮົາ ຖ້າເອົາກົງໄປກົງມາວ່າ "ຄວາມເປັນຢູ່ຂອງພໍ່ປ້ານ້າສາວ ຢູ່ຕາມບ້ານນອກຂອກຄາເນ ທຸກຍາກປາກໝອງ ສັບສົນກັບຄວາມອວດໂອ່ງແລະຟູມເຟືອຍຂອງຄົນໃນເມືອງ" ກໍຖືກເຫລືອທີ່ສຸດ. ສະນັ້ນຄົນລາວເຮົາ ຄວນຮູ້ຈັກເກັບເລັກ ເກັບນ້ອຍ ຮູ້ທ້ອນໂຮມຊັພສິນສ່ວນຕົວໄວ້ ເພື່ອຍາມຈຳເປັນມາ ກໍຄວນກ້າຈັບຈ່າຍເງິນຈຳນວນນັ້ນ ໄປໃຫ້ແກ່ຜູ້ໄດ້ຮັບເຄາະຫ໌ ໃນຍາມສົງຄາມບໍ່ ? ໃນຍາມສງົບບໍ່ ? ເຫລົ່ານີ້ເປັນຕົ້ນ.

ທ້າຍສຸດນີ້ ເພື່ອເປັນການພໍໃຈໃນຄວາມເປັນຢູ່ຂອງເຂົາເຈົ້າ, ພວກເຮົາເອງກໍຄວນພຍາ

ຍາມໃກ້ຊິດເຂົາ ເທົ່າທີ່ຈະໃກ້ໄດ້ ເພື່ອປອບໃຈເຂົາ ໃຫ້ຮູ້ຢ່າງຈິງໃຈວ່າ ການເປັນຫ່ວງຂອງຄົນໃນຊາດດ້ວຍກັນ ມີຢູ່ຕລອດໄປ. ເມື່ອນັ້ນ ເຂົາກໍຄິດໄປໃນແງ່ດີຕລອດໄປ. ເມື່ອໃດຫາກພວກເຂົາມີຄວາມເປັນຕົວຂອງຕົວເອງແລ້ວ ເມື່ອນັ້ນ ຄວາມເປັນຫ່ວງຂອງພວກເຮົາແນວຫລັງກໍຫາຍໄປ ຈະເປັນທີ່ວາງໃຈໄດ້.

ພວກເຮົາຊ່ວຍເຫລືອ ແລະຈະຊ່ວຍເຫລືອແກ່ຄົນລາວດ້ວຍກັນ ຊຶ່ງຕົກຢູ່ໃນສະພາບທີ່ຍາກລຳບາກຊຶ່ງນັບວ່າເປັນເວລານານແສນນານ ໄດ້ທຳການສູ້ຢ່າງເປັນປະວັດການກັບ ຜູ້ບຸກຣຸກພາຍນອກພວກດັ່ງກ່າວບາງຄັ້ງກໍເສັຽຊີວິດ, ບາງຄັ້ງກໍເສັຽອົງຄະ, ບາງຄັ້ງກໍປະປ່ອຍເຮືອນຊານ ເພື່ອເຂົ້າມາເພິ່ງບາຣະມີຣັຖບານຂອງສເດັຈເຈົ້າສຸວັນນະພູມາ ພຣະບິດາແຫ່ງຄວາມເປັນກາງ.

ພວກເຮົາຂໍອວຍພອນຢ່າງສຸດອົກສຸດໃຈ ໃຫ້ຄົນໃນຊາດທຸກ ໆ ຄົນທີ່ເປັນອ້າຍນ້ອງຈົ່ງໄດ້ໃຫ້ຄວາມຊ່ວຍເຫລືອແລະຄວາມເສັຽສລະທຸກຢ່າງແກ່ພີ່ນ້ອງຊາວ "ປະສົບໄພຍ໌ສົງຄາມ" ຂອງເຮົາ. ເພາະຄວາມເສັຽສລະແລະເພາະຄວາມຊ່ວຍເຫລືອເຫລົ່ານັ້ນ ແລະຈະເປັນການສ້າງຄວາມໝັ້ນຄົງຖາວອນໃຫ້ກຳລັງຊາດຂອງພວກເຮົາ ໃນການຕໍ່ສູ້ໃນຄັ້ງຕໍ່ ໆ ໄປ.



## *ການສົງເຄາະຫ໌ຜູ້ປະສົບໄພຍ໌ສົງຄາມ ສບັບໄດ້ຮັບຣາງວັລທີ່ ໑*
## *ຂອງ ທ້າວກົງພັດ ຫລວງຣາຊ*

✻

ຂ້າຂໍໂນ້ມນອບນ້ອມ — ກົ້ມກາບປະນົມກອນ
ທິບແທນທູນເທິງຫັມ — ທ່ອມທົງທຽມເທົ້າ
ໄຂຂ່າວເປັນບົດບັນ — ປະພັນກອນກອຍກ່າວ
ຊື້ອອກເປັນປ່ອງປັ້ນ — ຫັນຮູ້ໃຫ້ອ່ານດູ
ທ່ານຜູ້ຍັງບໍ່ຮູ້ — ກໍໃຫ້ຄ່ອຍຕອງຕຶກ
ຄອຍຄອນຄຳຄຶນງຄຶດ — ຮຶນຕອງຕາຖ້ອນ
ຄົນທັງມວນລາວນີ້ — ຢ່ານອນດາຍແລ້ງເປົ່າ
ມິນຕາຫລິງລ່າຢ້ຽມ — ແລຈ້ອງສ່ອງຕາມ
ບັດນີ້ ສົງຄາມລາມລຸກໄໝ້ — ປະເທດຖິ່ນດິນເຮົາ
ຂໍຊາວລາວຢ່າມົວຫລົງ — ມົ່ງງົງໂງງ້ວງ
ປວງປະຊາເໜືອໃຕ້ — ໜີໄພຍ໌ພາກຖິ່ນ
ນ້ຳຕາລິນອາບແກ້ມ — ແກມໄຫ້ຮ່ຳໄຮ
ເຫລືອໃຈທີ່ໄດ້ໜີໄກຫ້ອງ — ປະງົວຄວາຍໄວ້ໃຕ້ລ່າງ
ບາງຄົນພາກລູກນ້ອຍ — ເມັຽແກ້ວກໍຫ່າງເຫີນ
ບາງພ້ອງເດີນດົງດັ້ນ — ນອນເນົານຳປ່າ
ຫວັງຈັກມາເພິ່ງພີ້ — ໃຈຕັ້ງຕໍ່ປະສົງ
ຂ້າຂໍຈົ່ງໃຈຕັ້ງ — ອານອອນນ້ອມກ່າວ
ຊາວຄະນາພີ່ນ້ອງ — ພຽງພ້ອມຄູ່ຊູຄົນ
ຝູງຊົນຜູ້ທີ່ແຂງໃຈສູ້ — ອຸປສັກລຳບາກ
ຂໍຢ່າມີໂຊກຮ້າຍ — ຄວາມຮ້ອນໃຫ້ຫ່າງໜີ

ຣັຖບານຜູ້ເພີ່ມຄອຍຢູ່ນີ້ ຄິດເປັນຫ່ວງນຳຫລາຍ
ຜູ້ທີ່ເດີນທາງໄກ ຄ່ຳຄອຍໃຈຄ້ອຍ
ຄັນແມ່ນມາຄາວໃກ້ ທາງບໍ່ໄກກໍໄຄແດ່
ຢ້ານແຕ່ອິດເມື່ອຍລ້າ ແຮງນ້ອຍຫາບຄອນ ທົນແລ້ວ
ບາງຄົນລຸກລ່າວລົ້ມ ລັດຮ່ອນລົງພູ
ແສນລຳຄານໃຈຫລາຍ ຍ່າງຄາວແຄວນເຍັ້ນ
ຫວັງຈັກເດີນມານີ້ ໜີໄພຊຸ້ມຮົ່ມ
ອົດຢາກຫິວຫອດເຂົ້າ ໃຈໂອ້ອ່າວກະສັນ
ບັດນີ້ມາຮອດແລ້ວ ຊີ້ນຕ່ອນໂຕປາ
ຝູງຄົນມາໂຮມຖາມ ຂ່າວຄາວຄວາມຮ້ອນ
ບາງເທື່ອມີຂອງຕ້ອນ ແພວາຕຸ້ມຕ່ອມ
ອຸປໂພກບໍຣິໂພກກໍສົ່ງໃຫ້ ພໍໄດ້ຢູ່ກິນ
ດັ່ງນັ້ນ ຄວນທີ່ຄິດໃຄ່ຮູ້ ຄຸນພາບພຽງສເມີ
ຜູ້ທີ່ນຳຄວາມສຸກ ຊ່ວຍແຄວນຍາມແຄ້ນ
ອີກທັງແດນດິນດ້າວ ທະຫານລາວຄຸ້ມເຂດ
ຂໍເດຊຸຄຸນເລີດລ້ຳ ປົກປ້ອງພ່າງຮັກສາ
ທຸກທົ່ວທິບຖິ່ນຖານ ດ້າວດ່ານມະຄອນລາວ
ຄົນລາວຄວນຖນອມ ໃຫ້ກຽດກຽມໄກນ້ອງ
ໃພຜູ້ເນົາໃນຫ້ອງ ນອນຕຽງຕຸ້ມເສື່ອໃຫຍ່
ມີຄວາມສຸກຂໍຢ່າລືມພີ່ນ້ອງ ຜູ້ໜີບ້ານພ່າຍມານ
ພີ່ນ້ອງມາເພິ່ງນີ້ ບໍ່ມີບ່ອນອາໄສ
ໜີຈາກຄວາມກັງວົນ ເພິ່ງເຮົາໂຮມເຕົ້າ
ຄວນທີ່ເຮົາຫອມຕູ້ມ ພຽມແພງຮັກທີ່

ໜີຈາກພຸ້ມເພິ່ງພີ້ ກໍລາວລ້ອມລ່ຳເລີງ
ກັບທັງທຸກທ່ານທ້າວ ໃຈຊື່ເສັຽສລະ
ປ້ອງປົກພູມພົມແດນ ໄລ່ມາຣຕາມຕ້ານ
ທະຫານ ໆ ເຮົາສູ້ ຍິງສັຕຣູແສນລຳບາກ
ຫວັງໃຫ້ພວກເລົ່າຮ້າຍ ຕາຍມ້ອຍທ່າງລາວ
ດັ່ງນັ້ນ ດິນລາວທຸກຊ່ຳຊຸມ ນ້ອຍໃຫຍ່ຍິງລາວ
ຂໍຢ່າໄລລາລືມ ຜູ້ທີ່ມີຄຸນລົ້ນ
ກຳລັງບຸກກຳລັງໝັ້ນ ດິນດອນຊອນປ່າ
ດິນລາວທຸກຍ່ອມຫຍ້າ ຮັກສາໄວ້ຊ່ອຍກັນ
ດັ່ງນັ້ນເຮົາຜູ້ຍັງຢູ່ພີ້ ກ້າຜ່າຍແນວຫລັງ
ຍັງຄ່ອຍຄຳຄນຶງຄຶດ ຄ່ຳຄອຍໃຈຄ້ອຍ
ຈັດເຄື່ອງເປັນຂອງຕ້ອນ ພອນນຳຍູ້ສົ່ງ
ໃຈປະສົງໂອບເອື້ອ ເຝືອຝັ້ນຝາກມາ
ຫວັງໃຫ້ພວກຢູ່ພຸ້ນ ກ້າຜ່າຍແນວຣົບ
ໃຫ້ມີກາຍໃຈແຂງ ຍິ່ງຍົງແອນກ້າ
ຈົດຈຳຈົງໃຈສູ້ ສົງຄາມຕ້ານຕໍ່
ຄອມມູນິດໝູ່ນີ້ ໃຫ້ໜີພົ້ນແຜ່ນດິນ
ເຮົາມາພາກັນຕ້ານ ຕີມາຣໃຫ້ມ້າງມຸ່ນ
ທູນຍໍຍົກກຽດກ້ອງ ໄກກ້າກ່າວລື
ຖືກໍຖືຄຳໝັ້ນ ບຸກບັນຂັນຕໍ່
ຮັກສາເມືອງມິ່ງບ້ານ ເຮົາໄວ້ໃຫ້ຮົ່ມເຢັນ **ເຈົ້າເອີຍ!**
ອັນນຶ່ງຊາວພີ່ນ້ອງ ຜູ້ເທິງເສື່ອນອນຕຽງ
ກິນແກງຜັດດາວຫວານ ຊູ່ອົ້ມແລງເຊົ້າ

ຂໍຢ່າລືມທະຫານກ້າ ອາສາຕາຍຕາງປະເທດ
ໂສສລະເລືອດເນື້ອ ຖວາຍມ້ຽນມອບວາງ
ດັ່ງນັ້ນ ເຮົາຈຶ່ງຄວນຮຸ່ງຮູ້ ລູກຕື່ນຢ່າມົວນອນ
ຢ່າຊູ່ເມົາມົວຫລົງ ດັ່ງຄົນເມົາເຫລົ້າ
ໃຜມີໃຈລັງລ້າວ ກະທຳກັນເກື້ອກ່
ດົນບໍ່ດົນຫາກພໍ້ ພຽງດ້ານດັ່ງກະທຳຫັ້ນແລ້ວ !
ເຮົານີ້ ປຽບດັ່ງເຮືອລຳນ້ອຍ ໄຫລລ່ອງຄົງຄາ
ລົມຫາກມາປິວພັດ ກໍລ່ອງລອຍເລີງເລື້ອຍ
ຄອນ ໆ ຈິມາເຊົາຢຸດຢັ້ງ ກາງວັງບໍ່ຫາທ່າ ບໍ່ມີແລ້ວ !
ຄັນບໍ່ມັດເຊືອກໄວ້ ຈິໄປຢັ້ງບ່ອນຈັ່ງໃດ
ໃຜ ໆ ກໍຫາກປາຖນາຫ້ອຍ ຂໍໃຫ້ຢູ່ເປັນສຸກ
ທຸກສິ່ງແນວອັບປີ ໃຫ້ຫ່າງເຫີນໄກເຍີ້ນ
ດຽວນີ້ລາວເຂັ້ນຂ້ອນ ທໍຣະກັນລຳບາກ
ໄພສົງຄາມບີບບີ້ ປະຊາຍ້າຍຜ່າຍມາ
ຄັນເຈົ້າມາເພິ່ງພີ້ ເງົາຮົ່ມສົມພານ
ຂໍຢ່າກັງວົນຕົກ ຄັ້ງແຄນເຄືອງຮ້ອນ
ແສນອາວອນໃຈໂອ້ ໂອນໍຢ່າໄດ້ວ່າ
ແສນຈິໄກຈາກບ້ານ ກໍພີ້ຮ້ອນເພິ່ງເຢັນ ດອກ !
ດັ່ງນັ້ນ ເຮົາພີ່ນ້ອງ ພົງເຜົ່າອົພຍົບ
ຜູ້ປະສົບໄພສົງຄາມ ເດືອດແດດດວງດິ້ນ
ໜີຈາກດິນດອນບ້ານ ເຮືອນຊານຮ້າງເປົ່າ
ໄກຈາກຜີຖ່ອຍຮ້າຍ ມາພີ້ຫາກເພິ່ງຄົນ ເຈົ້າເອີຍ !
ສະນັ້ນເຮົາຄວນທຳຕົນຕັ້ງ ເປັນຄົນດີທຽມຊາດ

ໃຈສລາດຮອບຮູ້ ດີຮ້າຍຄູ່ຊູແນວ
ຊາດທີ່ເປັນລາວນີ້ ທຳດີຢ່າໄດ້ຈິ່ງ
ທຸກສິ່ງແນວຊົ່ວຮ້າຍ ກາຍເວັ້ນຢ່າກະທຳ
ອັນນຶ່ງຂໍໃຫ້ຈຳຈົດໄວ້ ຈົງໃຈຢ່າປະກອບ
ເກາະກໍ່ກັນມາດມຸ້ງ ແນວຮ້າຍບໍ່ແມ່ນດີ
ດຽວນີ້ເຮົາໄດ້ພົ້ນມາຊັ້ນ ໂພທອງຕົ້ນໃຫຍ່
ຣັຖບາລເພີ່ນກໍ່ຈັດຈ່ຈັ້ງ ບັງເຈົ້າໃຫ້ຮົ່ມເຢັນ
ໃຜຫາກມີເຂັນຂ້ອງ ໃນໃຈໃຫ້ຮ້ອງຕໍ່
ກະຊວງປະຊາສົງເຄາະມີຢູ່ແລ້ວ ຊິໄປຮ້ອນຮ່ອນໃດ
ໃຜ ໆ ກໍ່ຫາກມີໃຈເຫລື້ອມ ໝາຍແມນມ້າງມາດ
ແມ້ງເມື່ອມີທຸກຮ້ອນ ໄຂຂ້ກ່າວຂໍ
ບັດນີ້ຂ້າຈັກເວົ້າ ຈາຕໍ່ກອນຖແລງ
ແປງເປັນຄຳຄົມຄາຍ ຕໍ່ເຕີມຕາມຕ້ອຍ
ເກາະກ່າຍກອຍໃຈແກ້ງ ຈົ່ງໃຈແຈ້ງຈອດ
ເດືອນມີມາລ່ອງເຂົ້າ ມາໃກ້ເຂດຣະດູ
ອັນທີ່ນຶ່ງບອກໃຫ້ຮູ້ ຂັ້ນບ່ອນຕອນສຳຄັນ
ຈັດເປັນເສັຽສລະ ຄູ່ຄົນຄົງຮູ້
ທຸກກຸ່ມຊຸມໂຮມຕຸ້ມ ຊູມກັນເອົ້າອົ້ງ
ກຳແພງນະຄອນບ່ອນຕັ້ງ ທັງຄ້າຍຂອງວຽງ
ເພີ່ມປະກາດໃຫ້ຮູ້ ທຸກບ່ອນເປັນທາງການ
ອັນເປັນອັນເສັຽສລະ ໝູ່ລາວທັງຄ້າຍ
ທຸກສະມາຄົມພ້ອມ ກົມກອງທຸກບ່ອນ
ທັງຍິງຊາຍໜຸ່ມນ້ອຍ ພຽງພ້ອມຊູ່ຄົນ

ທຸບທອບທົ່ວ ຖືທີບຕາງກະເປົາ
ປຸມແປງເປັນຄົນຂໍ ແຜ່ເງິນຕາມຄຸ້ມ
ມາບຳຣຸງກຸມເກື້ອ ທະຫານລາວຄາວຍາກ
ຍົວຣະຍາດຍ້າຍ ຄາວເຢັນຍ່າງເດິນ
ຄັນວ່າອິດເມື່ອຍແລ້ວ ຂຶ້ນຂີ່ໂດຍສານ
ສາມັກຄີໂຮມແຮງ ແມ່ນບໍ່ມີທຽວຈ້າງ
ຂ້າກໍ່ເຄີຍໄປດ້ວຍ ປີກາຍລ້ຳລອງ
ປີນີ້ຂໍຮັບໃຊ້ ທົນສູ້ດັ່ງເຄີຍ
ເກາະກ່າຍກາຍຈາກມື້ ເຂົ້າເຂດຕອນແລງ
ຈັດໃຫ້ມີເຕະບານ ຕື່ມແຖມຂັນສູ້
ຫວັງນຳຜົນຣາຍໄດ້ ນຳໄປຊອ້ານຊ່ອຍ
ຍໍຍົກທົ່ວທີບນ້ອຍ ເງິນເຈົ້າປ່ອນລົງ
ຈົ່ງໃຈຄິດມ່າຍມ້ອນ ແຖມສົ່ງເປັນພອນ
ຈັດເປັນຕອນອາວະສານ ຕໍ່ເຕີມຕາມຕ້ອຍ
ທຸກໝູ່ຊົນຊາວເຊື້ອ ປະຊາກອນພອກໄພ່
ເຄາະເຂັນແນວຊົ່ວຮ້າຍ ໃຫ້ຫາຍສ້ຽງສ່າງເຢັນ
ກັບທັງທຸກຊ່ຳຊົ້ນ ຊາວຣາຊການຫລວງ
ທຸກກະຊວງກົມກອງ ຜູ້ວ່າການເມືອງບ້ານ
ຂໍໃຫ້ສາມັກຄີແໜ້ນ ນຳກັນຕຸ້ມຕ່ອມ
ຮັກຫອມເມືອງມິ່ງໃຫ້ ລາວກ້າວຮຸ່ງຈະເຣີນ ຂ້ານ້ອຍທ້ອນ !

— ຈົບ —

## *ຄຸນສົມບັດ ຂອງນັກສັງຄົມສົງເຄາະທ໌*

– ພັທນາຕົນເອງ ໃຫ້ສູງດ້ວຍຄວາມຮູ້ພູມທັມ ແລະຄວາມສາມາດສເມີ.

– ຕ້ອງມີນ້ຳໃຈບໍຣິສຸດແລະຈິງໃຈ ຕໍ່ເພື່ອນມະນຸດທຸກຄົນ ຈົນເຮັດໃຫ້ຜູ້ຮັບຄວາມຊ່ວຍເຫລືອ ບໍ່ອາຍ ຫລືຢ້ານກົວ.

– ບໍ່ຕ້ອງຖືເອົາໂອກາດໃນການຊ່ວຍເຫລືອ ຫລືຮັບໃຊ້ເພື່ອນມະນຸດນັ້ນ ເປັນການໂຄສນາ ຊວນເຊື່ອ ເພື່ອຜົລປະໂຍດສ່ວນຕົວ.

– ບໍ່ຕ້ອງຮັບ ຫລືສແດງອາການໃດ ໆ ທີ່ສໍ້ໃຫ້ເຫັນວ່າໃຝ່ໃຈຕໍ່ຄ່າຈ້າງຮາງວັນຕອບແທນ ຈາກຄົນພາຍນອກ ທີ່ຕົວໄດ່ຊ່ວຍເຫລືອ ນອກເໜືອຈາກຮາງວັນ ທີ່ຕົນໄດ້ຮັບຕາມອັຕຣາຢູ່ແລ້ວ.

– ຕ້ອງຕຸກເຕືອນ ຜູ້ປະພຶດຜິດຕໍ່ຣະບຽບກົດໝາຍ ດ້ວຍເຈຕນາດີ ແລະໂດຍຕົນເອງ ບໍ່ແມ່ນຈະເຂົ້າຫຍຸ້ງກ່ຽວໃນການຈັບກຸມ.

– ຕ້ອງໂຄຣົບຕໍ່ອຸດົມຄະຕິ ລັດທິ ແລະ ວັທນະທັມອັນດີຂອງຄົນອື່ນ.

– ຕ້ອງຮັກສາຄວາມລັບທຸກຢ່າງ ໂດຍສະເພາະ ຄວາມລັບຂອງຜູ້ຮັບຄວາມຊ່ວຍເຫລືອ.

– ຕ້ອງຖືວ່າ ການປະສານງານເປັນທາງນຳໄປສູ່ຄວາມສຳເຣັດໃນໜ້າທີ່ຢ່າງຍິ່ງໃຫຍ່.



*ທຽນໄຂ ຍ່ອມເຜົາໃຫມ້ຕົນເອງ ເພື່ອໃຫ້ເກີດ ຄວາມແຈ້ງ ສວ່າງ ແກ່ຜູ້ອື່ນ,*

*ນັກປຣາຊຍ໌ ທັງຫລາຍ ກໍໃນທໍານອງດຽວກັນ ຍອມເສັຽສລະຕົນເອງ ເພື່ອໃຫ້ເກີດ ຄວາມສວ່າງ ສງົບ ແລະສັນຕິສຸຂແກ່ຜູ່ອື່ນສເມີ.*

*ຈາກ ໂອວາທຄັ້ງ ສຸດທ້າຍ: ພຣະອາຈາຣຍ໌ມະຫາປາລ ອານັນໂທ*

*"ໃນການທໍາງານຫຍັງ ກໍຕາມ ຖ້າຢາກໄດ້ ເຮົາ ກໍຕ້ອງມີການຍອມໃຫ້ຜູ່ອື່ນໄດ້ນໍາຄືກັນ...."*

*ຄັດຈາກພຣະທັມມະເທສນາ ຂອງພຣະອາຈາຣຍ໌ມະຫາປາລ ອານັນໂທ*
*ສະແດງຢູ່ ວັດກຸສິນາຣາ (ບ່ອນພຣະພຸທອົງສະເດັດປຣິນິພານ)*
*ອິນເດັຽ (ປີ ໑໙໕໐)*

ໂຮງພິມ ແຫ່ງຊາດ ວຽງຈັນ